# ສ້າງການປຽ່ນແປງເທົ່ງໂລກໜ່ວຍນີ້
# ສ້າງໂລກຂອງເຮົາຂຶ້ນມາໃໝ່

## ບົດນຳ

ເຮົາຕ່າງລ້ວນເຫັນດີພ້ອມກັນວ່າ ຂະນະນີ້ເປັນຊ່ວງເວລາວິກິດຂອງໂລກໜ່ວຍນີ້ ເໝືອນທີ່ພຣະຄຳພີໄດ້ກ່າວໄວ້ວ່າ ເປັນຊ່ວງເວລາໄຄຣອສ (***kairos* moment**) ແລະພຣະເຈົ້າຊົງເອີ້ນຄຣິສຕະຈັກທົ່ວໂລກໃຫ້ຟັງ ອະທິຖານ ແລະລົງມືປະຕິບັດ ນີ້ເປັນສະຖານະການສຳຄັນຮີບດ່ວນ ເພາະການຊົງສ້າງຂອງພຣະເຈົ້າກຳລັງຈົມ ຜູ້ຄົນກຳລັງທົນທຸກທໍລະມານກັນຢູ່ທຸກແຫ່ງຫົນທົ່ວໂລກ.

ປື້ມນ້ອຍເຫຼັ້ມນີ້ແມ້ຈະຂຽນຂຶ້ນໂດຍຄົນດຽວ[1] ກວ່າໄດ້ຮັບແຮງບັນດານໃຈແລະຜ່ານການຫຼໍ່ຫຼອມຄວາມຄິດຮອມເຖິງຜ່ານການສຳຫຼວດທ່ານຈາກຄຣິສຕຽນໃນທຸກທະວີບທົ່ວໂລກ ຊຶ່ງໄດ້ອະທິຖານຮ່ວມກັນແບ່ງປັນ,ຮັບຟັງແລະເຮັດວຽກຮ່ວມກັນ ແມ້ເຮົາຈະມາຈາກປະເທດຕ່າງໆ ແລະມີວິທີປະຕິບັດທາງຄວາມເຊື່ອແຕກຕ່າງອອກໄປຕາມບໍລິບົດຂອງຕົນເອງກໍຕາມ ແຕ່ເຮົາຕ່າງລ້ວນມີຄວາມຮັກແລະຫ່ວງໃຫຍ່ໃນສິ່ງເຫຼົ່ານີ້ໄດ້ແກ່

- ພຣະຄຳຂອງພຣະເຈົ້າ(ພຣະຄຳພີແລະພຣະເຢຊູຄຣິດເຊິ່ງເປັນຖ້ອຍຄຳແຫ່ງຊີວິດ).
- ຄົນຂອງພຣະເຈົ້າ(ຄຣິສຕະຈັກແລະທຸກຄົນຢູ່ເທິງໂລກນີ້ ເພາະມະນຸດຖືກສ້າງຕາມແບບຢ່າງຂອງພຣະເຈົ້າ).
- ໂລກເຊິ່ງພຣະເຈົ້າຊົງສ້າງ (ໂລກເຊິ່ງມີຄວາມອ່ອນແອ,ງາມຫຼາຍ ແລະມີຄວາມສະລັບຊັບຊ້ອນ ເຊິ່ງພວກເຮົາຕ່າງອາໄສຢູ່ ເພິ່ງພາ ແບ່ງປັນແລະໄດ້ຮັບການຊົງເອີ້ນໃຫ້ທະນຸຖະໜອມ ບຳລຸງຮັກສາມັນ)

---

[1] ເດບ ບຸກເລດ(Dave Bookless) ເກີດແລະເຕີບໂຕໃນປະເທດອິນເດຍຈົນອາຍຸ10ປີ ກໍໄດ້ຍ້າຍໄປຢູ່ຖິ່ນຖານປະເທດອັງກິດຈົນເຖິງປັດຈຸບັນນີ້ ໃນຊ່ວງສາມສິບປີທີ່ຜ່ານມາ ເຂົາອາໄສຢູ່ໃນເຂດນອກເມືອງລອນດອນ ເຊິ່ງເປັນເຂດທີ່ມີຄວາມຫຼາຍວັດທະນາທຳເຊື້ອຊາດໄດ້ແກ່ ຄົນອິນເດຍ ໂຊມາລີ ສີລັງກາແລະປາກິດສະຖານ ເຊິ່ງກຸ່ມຄົນເຫຼົ່ານີ້ ຍ້າຍມາປະເທດຂອງຕົນມາທີ່ອັງກິດ ເດບມີຄວາມປາຖະໜາທີ່ສຸດໃນການນຳເອົາຂ່າວປະເສີດມາປັບໃຊ້ໃນຊີວິດປະຈຳວັນ ເຂົ້າກັບແຕ່ງງານແລະມີລູກສາວສີ່ຄົນ ເປັນສິດຍາພິບານ ໄດ້ຮັບປະລິນຍາເອກ ດ້ານສາດສະໜາສາດ ໄດ້ຂຽນໜັງສືຫຼາຍເຫຼັ້ມ (ເຊິ່ງປັດຈຸບັນໜັງສືເຫຼົ່ານີ້ໄດ້ຮັບການແປຫຼາຍພາສາແລ້ວ) ເຂົາໄດ້ໄປບັນລະຍາຍໃນກວ່າສີສິບປະເທດທົ່ວທັງຫົກທະວີບ ເຂົາເຮັດວຽກໃຫ້ກັບ A Rocha International ເຊິ່ງເປັນອົງກອນຄຣິສຕຽນທີ່ເຮັດວຽກດ້ານອະນຸລັກແລະຕະຫຼອດສິບປີຜ່ານມານີ້ກໍ່ໄດ້ມີສ່ວນຮ່ວມຮັບໃຊ້ການເປັນຜູ້ນຳຢ່າງ Lausanne Movement ແລະ World Evangelical Alliance ລວມເຖິງມີສ່ວນໃນການຈັດການປະຊຸມ creation care ໃນສິບສອງ ບ່ອນທີ່ຂອງໂລກດ້ວຍ.

## ຄຳຖາມ

- ທ່ານສຳພັດໄດ້ແນວໃດແດ່ ວ່າການຊົງສ້າງທັງຫຼາຍຕ່າງພາກັນທຸກໂສກ ຜູ້ຄົນກຳລັງທົນທຸກທໍລະມານທັງໃນທ້ອງຖິ່ນທີ່ທ່ານອາໄສຢູ່ ຫຼືໃນພື້ນທີ່ອື່ນໆ ນອກເໜືອຈາກບໍລິບົດຂອງທ່ານ?.
- ທ່ານຄິດວ່າພຣະເຈົ້າຊົງຮູ້ສຶກຢ່າງໃດແດ່ຕໍ່ສິ່ງທີ່ກຳລັງເກີດຂຶ້ນເຫຼົ່ານີ້?.
- ພຣະເຈົ້າຊົງເອີ້ນທ່ານແລະຄຣິສຕະຈັກໃຫ້ຕອບສະໜອງຕໍ່ສະຖານະການເຫຼົ່ານີ້ຢ່າງໃດແດ່?.

ເລື່ອງລາວຕ່າງໆ ທີ່ເຮົາແບ່ງປັນໃນປຶ້ມເຫຼັ້ມນີ້ ລວມເຖິງລາຍງານຫຼືຂ່າວທີ່ເວົ້າມາສະຖານະການໂລກ ເຊິ່ງເຮົາຈະໄດ້ສະຫຼຸບໃຫ້ເຫັນພາບນັ້ນ ອາດຈະກະທົບຈິດໃຈແລະເຮັດໃຫ້ເກີດຄວາມໂສກເສົ້າໃຈໄດ້ ເຫດການທີ່ເກີດຂຶ້ນນັ້ນຈະເວົ້າໄດ້ວ່າເປັນຄວາມໂສກເສົ້າ ໃນລະດັບທີເກີນກວ່າຈະຈິນຕະນາການຫຼືປະເມີນຄວາມເສຍຫາຍໄດ້ ທັງນີ ເຮົາບໍ່ໄດ້ຕ້ອງການສື່ສານເລື່ອງຄວາມສິ້ນຫວັງ ແຕ່ຕ້ອງການເວົ້າເຖິງຄວາມຫວັງຕ່າງຫາກ ໃນຂະນະທີ່ເຮົາອ່ານປຶ້ມເຫຼັ້ມນີ້ເຮົາຈະເດີນທາງຜ່ານເນື້ອຫາ ເຮົາອາດຈະຮູ້ສຶກບໍ່ສະບາຍໃຈກັບຂໍ້ຄວາມຈິງໃໝ່ໆ ທີ່ຫັງສືເວົ້າເຖິງຫຼືອາດຈະຄິດຮອດສິ່ງທີ່ທ່ານເອງເຄີຍຮູ້ມາກ່ອນໜ້ານີ້ແລ້ວ ແຕ່ເບິ່ງຂ້າມສິ່ງເຫຼົ່ານັ້ນໄປປຶ້ມເຫຼັ້ມນີ້ຈະນຳທ່ານຍ້ອນກັບໄປເບິ່ງພຣະຄຳພີເຊື່ອໂຍງເຫດການຕ່າງໆ ທີ່ກຳລັງເກີດຂຶ້ນວ່າສອດຄ້ອງຢ່າງໃດແດ່ ກັບສິ່ງທີ່ພຣະຄຳພີໄດ້ບັນທຶກໄວ້ໃນປະຖົມມະການຈົນເຖິງພຣະຄຳພະນິມິດ ກ່ຽວກັບການຊົງສ້າງ ຕະຫຼອດຕົນການຊົງສ້າງໃໝ່ຂອງພຣະເຈົ້າ ທ່ານຈະໄດ້ຮັບການທ້າທາຍໃຫ້ຄິດຕັ້ງຄຳຖາມ ທ້າທາຍໃຫ້ຄິດທົບທວນສິ່ງທີ່ທ່ານຄິດແລະປະຕິບັດ ລວມເຖິງເຫດການລຳດັບຄວາມສຳຄັນເລື່ອງຫຼືວຽກຕ່າງໆ ຂອງຄຣິສຕະຈັກຫຼືອົງກອນຂອງທ່ານເອງ ແລະສຸດທ້າຍທ່ານຈະໄດ້ອ່ານເລື່ອງລາວທີ່ເຕັມໄປດ້ວຍຄຳໜູນໃຈແລະຄວາມຫວັງ ເຊິ່ງຢັ່ງຮາກເທິງພຣະຄຳຂອງພຣະເຈົ້າ ແລະວຽກຂອງພຣະເຈົ້າໃນປັດຈຸບັນນີ້ໃນທົ່ວທຸກມູມໂລກ ເຊິ່ງເຮົາອະທິຖານໃຫ້ພຣະເຈົ້າຊົງປະທານແຮງບັນດານໃຈແກ່ທ່ານລຸກຂຶ້ນມາມີສ່ວນຮ່ວມໃນການດູແລອະພິບານການຊົງສ້າງຂອງພຣະອົງຮ່ວມກັນ.

# ຕອນທີ່1

## **ບໍລິບົດ** : ເຮົາກຳລັງຢູ່ໃນ “ຊວງເວລທີ່ທ້າທາຍ”

1. **ເຮົາເຊື່ອມໂຍງສື່ສານກັນໄດ້ດີຂື້ນແທ້ບໍ່**?.

ລອງນຶກພາບເບື່ອງຫຼັງໄປໃນຍຸກປູ່ຍ່າຕາຍາຍ ພວກທ່ານນ່າຈະໃຊ້ຊີວິດແຕກຕ່າງຈາກຍຸກປັດຈຸບັນນີ້ພໍສົມຄວນ ເຊິ່ງຍຸກນັ້ນຜູ້ຄົນອາໄສຢູ່ຮ່ວມກັນໃນຊຸ່ມຊົນແລະເປັນຄອບຄົວຂະຫຍາຍໂດຍບໍ່ມີການໂຍກຍ້າຍຖິ່ນຖານໄປໃສ່ ປັດຈຸບັນນີ້ວິທີຊີວິດ ຜູ້ຄົນແຕກຕ່າງໄປຈາກເດີມຂ້ອນຂ້າງຫຼາຍ ຄົນສະໄໝກ່ອນມັກຈະຢູ່ໃນຊົນນະບົດ ເຊິ່ງບັນພະບູລຸດໄດ້ຕັ້ງຖິ່ນຖານກັນມາດົນຫຼຸ່ນຕໍ່ຫຼຸ່ນ ໃນປັດຈຸບັນກວ່າເຄິ່ງໜື່ງຂອງປະຊາກອນໂລກອາໄສຢູ່ໃນເມືອງ ເຊິ່ງມີຄວາມຫຼາກຫຼາຍທາງວັດທະນາທຳ ພາສາ ເຊື້ອຊາດແລະສາດສະໜາ ຜູ້ຄົນປະປົນກັນແລະປະສົມປະສານກັນໃນທຸກໆວັນ ເຮົາຕ່າງຍົກຍ້າຍອອກຈາກບ່ອນທີທີ່ບ່ອນປູ່ຍາຕາຍາຍເຄີຍຢູ່ອາໄສມາສູ່ສັງຄົມໂລກາພິວັດເຊິ່ງມີການເຄື່ອນຍ້າຍໄປມາເກືອບຈະຕະຫຼອດເວລາ.

ຄົນຫຼຸ່ນກ່ອນອາດຈະຍ່າງທາງອອກຈາກປະເທດຫຼືເມື່ອງຂອງຕົນເອງເນື່ອງຈາກສະຖານະການບີບບັງຄັບ ເຊັ່ນໜີ້ລີໄພສົງຄາມໄປເປັນຜູ້ລີ້ໄພ ຫຼືອາດຈະຍ້າຍຖິ່ນຖານເພື່ອຕັ້ງຖິ່ນຖານໃນດິນແດນທີ່ເອື້ອໃຫ້ມີຊີວິດຄວາມເປັນຢູ່ທີ່ດີຂື້ນ ໃນຂະນະທີ່ປັດຈຸບັນນີ້ຜູ້ຄົນໄດ້ຮັບຄວາມສະດວກສະບາຍຈາກການເດີນທາງທັ້ງໄປເຮັດວຽກ ແລະໄປທ່ອງທ່ຽວພັກພອນ ແມ້ກະທັ້ງໄດ້ພົບເຫັນຄວາມເປັນໄປຕ່າງໆ ໃນປະເທດອື່ນໆຜ່ານທາງໂທລະທັດຫຼືອິນເຕີເນັດ ເຊິ່ງບາງຄັ້ງເຮົາບໍ່ເຫັນຄ່າຂອງສິ່ງເຫຼົ່ານີ້ດ້ວຍຊ້ຳ ນີ້ຄືຄວາມແຕກຕ່າງທີ່ເກີດຂື້ນກັບຄົນໄດ້ 2 ຊວງອາຍຸເທົ່ານັ້ນ ຊ່ວງກ່ອນໜ້ານີ້ເຫດການຫຼືສິ່ງທີ່ຢູ່ນອກເໜື່ອຊຸ່ມຊົນທ້ອງຖິ່ນຖືວ່າເປັນສິ່ງແປກໃໝ່ຫຼາຍ ແຕ່ປັດຈຸບັນບໍ່ເປັນຢ່າງນັ້ນແລ້ວ ເພາະເຮົາຕ່າງສາມາດເດີນທາງຜ່ານໂລກໄຊເບີຫຼືບາງສ່ວນກໍ່ມີທື່ນຫຼາຍພໍທີ່ຈະອອກເດີນທາງໄປຍັງສະຖານທີ່ຕ່າງໆແລະໄປສຳພັດຜູ້ຄົນກັບວັດທະນາທຳອື່ນໆ ດ້ວຍຕົນເອງເຊິງເປັນການເປີດໂລກທັດໃຫ້ໄດ້ເຫັນສະຖານທີ່ແລະຜູ້ຄົນໃນພື້ນທີ່ອື່ນໆ

ໃນພຣະຄຳ ກິດຈະການ 17:26-27 ນັ້ນ ອັກຄະທູດເປົາໂລໄດ້ເທດສະໜາໃນເມື່ອງເອເທນວ່າ “ພຣະອົງຊົງສ້າງມະນຸດທຸກຊາດມາຈາກຄົນໆ ດຽວໃຫ້ຢູ່ທົ່ວພິພົບໂລກ ແລະຊົ່ງກຳນົດເວລາແລະເຂດແດນໃຫ້ເຂົາທັ້ງຫຼາຍຢູ່ດ້ວຍ ເພື່ອພວກເຂົາຈະໄດ້ສະແຫວງຫາພຣະເຈົ້າແລະມຸ່ງຫວັງຈະຄົ້ນຫາແລະພົບພຣະອົງ ທີ່ຈິງພຣະອົງບໍ່ຊົງຢູ່ຫ່າງໄກ່ຈາກເຮົາທຸກຄົນເລີຍ” ໃນທີ່ນີ້ ພຣະຄຳຕອນນີ້ບອກກັບເຮົາວ່າເຮົາວ່າມະນຸດແລະພຣະເຈົ້າມີຄວາມສຳພັນກຽ່ວຂ້ອງກັນດ້ວຍສະຖານທີ່ແລະບໍລິບົດ ສະເພາະເຈາະຈົງ ເຊິ່ງເປັນສິ່ງທີ່ຄົນພື້ນເມືອງທ້ອງຖິ່ນທັ້ງຫຼາຍຕ່າງເຂົ້າໃຈໃນຄວາມສຳພັນເປັນຢ່າງດີ.

**ຄຳຖາມ**:

1. ການທີ່ປັດຈຸບັນນີ້ຄົນຈຳນວນຫຼາຍບໍ່ໄດ້ "ຕັ້ງຮາກ" (ລົງຫຼັກປັກຖານ) ໃນທີ່ສະຖານທີ່ແຫ່ງດຽວອີກຕໍ່ໄປແລ້ວນັ້ນສົ່ງຜົນກະທົບປະການໃດຫຼືບໍ່?
2. ຄຳເວົ້າທີ່ອາຈານເປົາໂລກ່າວໄວ້ໃນພຣະຄຳຕອນນີ້ມີຄວາມໝາຍຢ່າງໃດແດ່ ຕໍ່ຜູ້ຍ້າຍຖິ່ນຖານໃນປັດຈຸບັນ ບໍ່ວ່າຈະເປັນຜູ້ອົບພະຍົບເພາະເຫດຜົນດ້ານເສດຖະກິດ ຫຼືໄປອາໄສຢູ່ໃນສະຖານະການທີ່ທີ່ຫ່າງໄກບ້ານຂອງຕົນ?.
3. ສຳຫຼັບທ່ານແລ້ວ ທ່ານຄິດວ່າຄຳວ່າ "ບ້ານ" ມີຄວາມໝາຍວ່າຢ່າງໃດ?.
4. ທ່ານຄິດວ່າຄວາມສຳພັນລະຫວ່າງທ່ານກັບບ້ານເກີດເມືອງນອນຂອງທ່ານແລະການຮູ້ສຶກເປັນສ່ວນໜຶ່ງຂອງສະຖານະການທີ່ນັ້ນຫຼືເອີ້ນງ່າຍໆວ່າ "ຮາກ" ນັ້ນມີສ່ວນກ່ຽວຂ້ອງກັບຄວາມສຳພັນລະຫວ່າງທ່ານກັບພຣະເຈົ້າຫຼືບໍ່?.
5. ທ່ານພົບພຣະເຈົ້າຍາກຂຶ້ນບໍ່ເມື່ອທ່ານບໍ່ໄດ້ຍັ່ງຮາກເລິກລົງໄປໃນສະຖານທີ່ຫຼືຊຸມຊົນໜຶ່ງ?.

## 2. ເຮົາຕ່າງໄດ້ຮັບຂໍ້ມູນຂ່າວສານດີຂຶ້ນແມ່ນທແທ້ບໍ່?.

ໂທລະທັດໄວໄຟ ໂທລະທັດມີຫຼາຍຊ່ອງ ອອກຂ່າວແລະອິນເຕີເນັດ ສິ່ງເຫຼົ່ານີ້ໄດ້ປ່ຽນແປງວິທີການຄິດຕໍ່ສືສານໄປໂດຍສິ້ນເຊີງ ເຮົາສາມາດຄົ້ນຫາຄຳຕອບໄດ້ພາຍໃນບໍ່ຮອດນາທີ ເຊິ່ງໃນສະໄໝກ່ອນນັ້ນຕ້ອງເພິ່ງພາຫ້ອງສະໝຸດເພື່ອຄົ້ນຫາຂໍ້ມູນ ບາງເທື່ອເຮົາຈົນຈະຮັບມືກັບຂໍ້ມູນຈົນບໍ່ທັນ ຫຼືຄວາມຄາດຫວັງໃຫ້ເຮົາເຮັດວຽກຢ່າງວ່ອງໄວຕະຫຼອດເວລາ ແລະໂລກໂຊຊຽວທີ່ອ້ອມຮອບຂໍ້ມູນຂ່າວສານຈຳນວນຫຼວງຫຼາຍສູ່ສາຍຕາແລະສະໝອງຂອງເຮົາ.

ເຮົາຈະຮູ້ໄດ້ຢ່າງໃດວ່າຂໍ້ມູນອັນໃດທີ່ສາມາດເຊື່ອຖືໄດ້ຫຼືບໍ່ໄດ້ ເຈົ້າຂອງຂ່າວຢ່າງໜັງສືພິມ ສະຖານີໂທລະທັດ ແລະ ຂ່າວດ້ານອື່ນໆ ຄືຜູ້ທີ່ຈັດວາຍການແລະຄວບຄຸມເລື່ອງລາວທີ່ຈະນຳສະເໜີຫຼືບໍ່ນຳສະເໜີ ລັດຖະບານກໍ່ສາມາດເຂົ້າມາຂີດຂວາງອົງກອນຜະລິດຂ່າວບໍ່ໃຫ້ນຳສະເໜີເລື່ອງລາວຫຼືໃຫ້ໂປຣດໂມດເລືອງໄດ້ດ້ວຍ ທາງໂຊຊຽວມີເດຍສ່ວນຕົວຂອງເຮົາມັກຈະກາຍເປັນ "ກະບອກສຽງ" ເຊິ່ງຄັດກ່ອງ "ໝູ່ຄູ" ທີ່ມີຄວາມເຫັນຂ້ອນຂ້າງຄືກັນ ແຕ່ແລ້ວເຮົາກໍ່ມັກຕ້ອງປະຫຼາດໃຈວ່າຄົນໃນໂລກໂຊຊຽວທີ່ເປັນເພື່ອນກັບເຮົາກັບມີຄວາມເຫັນແຕກຕ່າງຈາກເຮົາຂ້ອນຂ້າງຢ່າງຫຼວງຫຼາຍ ຕົວຢ່າງທີ່ເຫັນໄດ້ຊັດເຈນໃນເລື່ອງນີ້ ຄືເລື່ອງການປ່ຽນແປງສະພາບອາກາດໂລກ ແລະເຫດການແຜ່ລະບາດຂອງພະຍາດໂຄວິດ 19.

ເຖິງແມ່ນວ່າຊຸມຊົນແລະໜ່ວຍງານທາງວິທະຍາສາດຊັ້ນນຳຂອງໂລກໄດ້ວວມຕົວກັນເພື່ອພະຍາຍາມຈັດການກັບບັນຫາ ການປ່ຽນແປງສະພາບອາກາດໂລກແລະເຊື້ອພະຍາດໂຄ

ວິດ 19 ແຕ່ສ່ວນໃຫຍ່ແລ້ວຄົນມັກຈະຮັບຂໍ້ມູນຂ່າວສານຜ່ານທາງສື່ ທາງເຟສບຸກ WhatsApp ຫຼື ແຫຼ່ງຂໍ້ມູນທາງອື່ນໆ ຕາມຄວາມສອນຕົວ ເຊິ່ງສິ່ງຜົນກະທົບເຮັດໃຫ້ເກີດຄວາມສັບສົນແລະບ່ອນທຳລາຍຄວາມນ່າເຊື່ອຖືຕໍ່ສິ່ງທີ່ເກີດຂຶ້ນຢ່າງແນ່ນອນ ຂ່າວປອມມີຢູ່ມາດົນແລ້ວ ລັດຖະບານຕ່າງໆແລະຜູ້ທີ່ຕ້ອງການໂຈມຕີລັດຖະບານຕ່າງໃຫ້ກົນອຸບາຍດຽວກັນໃນການສ້າງໂຄສະນາສ່ວນເຊື່ອຖືຝ່າຍຂອງຕົນເອງ ແລະຕໍ່ຕ້ານຝ່າຍກົງກັນຂ້າມ ຈົນມີບາງຄົນເວົ້າວ່າ ປັດຈຸບັນນີ້ເຮົາກຳລັງຢູ່ໃນຍຸກບໍ່ມີຄວາມຈິງ ເພາະຄົນມັກຈະເຊື່ອໃນສິ່ງທີ່ຕົນເອງຮູ້ສຶກສະບາຍໃຈ ແທນທີ່ຈະຍຶດຖືຫຼັກຄວາມເປັນຈິງ.

ຄຳຖາມ:

1. ທ່ານໃຊ້ໂຊຊຽວມີເດຍແນວໃດແດ່ ແລະສ່ວນໃຫຍ່ຮັບຂໍ້ມູນຂ່າວສານຈາກຊ່ອງທາງໃດແດ່?
2. ທ່ານໃຊ້ມາດຕະຖານອັນໃດໃນການຕັດສິນວ່ານະເຊື່ອຖືຜູ້ໃດໄດ້ຫຼືບໍ່ໄດ້?
3. ເຮົາຈະເວົ້າໄດ້ຫຼືບໍ່ວ່າຄຣິສະຕຽນມັກຈະເວົ້າຄວາມຈິງຢູ່ສະເໝີ?
4. ໃນຍຸກລາອານິຄົມນັ້ນເຄີຍມີອົງກອນຄຣິສະຕຽນເຊິ່ງມາຮາກຖານທີ່ເຂັ້ມແຂງໄດ້ໃຊ້ອຳນາດໃນບໍ່ຖືກຕ້ອງເພື່ອຍຶດຄອງແຜນດິນ ເໝືອນກັນ ທ່ານຄິດວ່າປັດຈຸບັນນີ້ຍັງມີອົງກອນຄຣິສະຕຽນມີລັກສະນະແບບນີ້ຫຼືບໍ່?
5. ທ່ານຄິດວ່າປະໂຫຍດທີ່ພຣະເຢຊູກ່າວໄວ້ຕໍ່ໄປນີ້ໝາຍຄວາມວ່າຢ່າງໃດ? "ທ່ານທັງຫຼາຍຈົ່ງລະວັງພວກຜູ້ເຜຍຄຳທຳນວາຍປອມ ທີ່ມາຫາພວກທ່ານນຸ່ງຮົ່ມເໝືອນໂຕແກະ ແຕ່ພາຍໃນນັ້ນຮ້າຍທີ່ສຸດເໝືອນໝາໄນປ່າ" ແລະ "ເພາະສະນັ້ນ ພວກທ່ານຈະຮູ້ຈັກເຂົາໄດ້ເພາະຜົນຂອງພວກເຂົາ" (ມັດທາຍ 1:15,20)?.

### 3. **ຄວາມບໍ່ໝັ້ນຄົງປອດໄພທະວີຄູນຄວາມຮຸນແຮງຫຼາຍຂຶ້ນເລື້ອຍໆ.**

ຍຸກທ້າຍສະຕະວັດທີ່ 20 ເປັນຊ່ວງເວລາສະຫງົບສຸກແລະໝັ້ນຄົງສຳຫຼັບຫຼາຍພາກພື້ນເທິ່ງໂລກໜ່ອຍນີ້ ຫຼັງຈາກຈົບສົງຄາມໂລກສະເທີນຂວັນ 2 ຄັ້ງນັ້ນແລ້ວ ຈັກກະພັດເກົ່າລົ້ມສະລາຍໄປ ຫຼາຍປະເທດໄດ້ຮັບເສຣີພາບຈາກຜູ້ຍຶດຄອງເປັນຊ່ວງເວລາທີ່ສະຖາບັນສັນຕິພາບຢ່າງອົງການສະຫະປະຊາຊາດຖືກຳເນີດຂຶ້ນ ລວມທັງການເຕີບໂຕດ້ານການຄ້າໂລກສົ່ງຜົນໃຫ້ເກີດການຍົກລະດັບມາດຕະຖານການດຳລົງຊີວິດ ສາທະລະນະສຸກແລະວຽກງານດ້ານສຸຂະພາບພັດທະນາຫຼາຍຂຶ້ນ ການສຶກສາກໍ່ດີຂຶ້ນຕາມລຳດັບ ແລະເກີດສັນຕິພາບໃນຫຼາຍປະເທດແນ່ນອນ ນີ້ບໍ່ແມ່ນສະພາບຈິງສຳຫຼັບທຸກພື້ນທີ່ຫຼືທຸກຄົນ ໂດຍສະເພາະຢ່າງຍິ່ງ ຂະນະນີ້ທີ່ລວງເຂົ້າສູ່ສະຕະວັດທີ່ 21 ກັບພົບວ່າເປັນຍຸກແຫ່ງຄວາມບໍ່ມີສະຖຽນລະພາບ ຄວາມບໍ່ເທົ່າທຽມ ແລະຄວາມແນ່ນອນຢ່າງຍິ່ງອອດຈະທົ່ວໂລກ ເຮົາເຫັນສິ່ງເຫຼົ່ານີ້ປະກົດຊັດເຈນໄດ້ດ້ວຍສິ່ງທີ່ເກີດຂຶ້ນດັ່ງຕໍ່ໄປນີ້ຄື:

1. **ຄວາມບໍ່ທຽມທາງສັງຄົມເພີ່ມສູງຂຶ້ນເລື້ອຍໆ** ຄົນລວຍຈະລວມຕົວກັນຢູ່ປະມານ1% ສັບສິນບັດຂອງພວກເຂົາຫຼາຍພຽງພໍ ກັບຄົນທົ່ວໂລກລວມເຂົ້າດ້ວຍກັນ [Oxfam, 2023] ແລະເບິ່ງເໝືອນວ່າຊ່ອງວ່າງນີ້ຈະເພີ່ມຂຶ້ນເລື່ອຍໆ ໃນທຸກປີ ລະບົບເສດຖະກິດໂລກອຳນວຍໃຫ້ກັບກຸ່ມຄົນລຳລວຍມາຫາສານເຫຼົ່ານີ້ລັງງຈ່າຍພາສີ ຂະນະດຽວກັນເຂົ້າໄປມີອຳນາດຕໍ່ການເມືອງໃນລະດັບນະໂຍບາຍ ຂະນະດຽວກັນ ຜົນງານວິໄຈໄດ້ບົ່ງບອກວ່າປະລິມານຄວາມສຸກຂອງຄົນໃນປະເທດຫຼຸດລົງເມື່ອຊ່ອງວ່າງລະຫວ່າງຄົນລວຍກັບຄົນຈົນປະກົດການກວ້າງຫຼາຍຂຶ້ນ[2] ເມື່ອເກີດຄວາມບໍ່ເທົ່າທຽມຫຼາຍຂຶ້ນເລື່ອຍໆ ນັ້ນ ຍ່ອມມີກຸ່ມຄົນທີ່ໄດ້ຮັບຜົນກະທົບຫຼາຍກວ່າ ເຊັ່ນ ແມ່ຫຍິງ, ເດັກນ້ອຍ, ອານຸຊົນ, ຊົນເຜົ່າ, ຄົນພິການ ແລະຊຸມຊົນພື້ນເມືອງ ເປັນຕົ້ນ ໃນຫຼາຍປະເທດຄົນໃນຊົນນະບົດບໍ່ສາມາດຢູ່ລອດຫຼືດຳລົງຊີວິດໄດ້ອີກຕໍ່ໄປ ດັ່ງນັ້ນ ພວກເຂົາຈຶ່ງອົບພະຍົບເຂົ້າໃນເມືອງເພື່ອຫາວຽກເຮັດ ເຮັດໃຫ້ຕົວເມືອງຂະຫຍາຍຕົວຢ່າງໄວ້ວ່າ ມີພຽງຄົນຫຍິບມື້ດຽວເທົ່ານັ້ນທີ່ສາມາດສ້າງຖະນະໃຫ້ໝັ້ນຄົງໄດ້ ຄົນສ່ວນໃຫຍ່ຍັງຄົງຕ້ອງຫາເຊົ້າກິນຄ່ຳໃນເມືອງໃຫຍ່ກັນຢູ່ດີ ນອກຈາກນັ້ນ ປັດໃຈອື່ນໆ ກໍ່ມີສ່ວນສົ່ງເສີມຜັກດັນໃຫ້ຜູ້ຄົນເດີນທາງສູ່ເມືອງໃຫຍ່ກັນຫຼາຍຂຶ້ນດ້ວຍ ເຊັ່ນ ຄວາມຂັດແຍງໃນພື້ນທີ່ ສະພາວະບໍ່ມີສະຖຽນລະພາບ ໂຄງສ້າງທາງສັງຄົມທີ່ບໍ່ເປັນທຳ ແລະສື່ຕ່າງໆ ທີ່ປະກາດຂ່າວເຖິງຄວາມນ່າຢູ່ຂອງເມືອງ ເປັນຕົ້ນ ປະຊາກອນໂລກຫຼາຍກວ່າເຄິ່ງໃນປັດຈຸບັນອາໄສຢູ່ໃນເຂດເມືອງ ສ່ວນໃຫຍ່ຢູ່ໃນຊຸມຊົນເມືອງທີ່ຍາກຈົນ ປະຖິ້ມຖິ່ນຖານບ້ານເກີດເມືອງນອນເຄີຍອາໄສຢູ່ ແລ້ວຍ້າຍເຂົ້າມາສູ່ເມືອງ ສຸ່ມສຽງຕໍ່ການຖືກກົດຂີ່ຂູດຮີດແລະເອົາປຽບຈາກນາຍຈ້າງ ເຈົ້າໜ້າທີ ນາຍທຶນ ແລະກຸ່ມຄົນຕ່າງໆ.

2. **ລະບົບການເງິນມີຄວາມສ່ຽງສູງຫຼາຍແລະບໍ່ແມ່ນລະບົບທີ່ມີກົນໄກຮັບໃຊ້ທຸກຄົນໃນສັງຄົມອີກຕໍ່ໄປ.**

ໃນປີ 2008 ເຊິ່ງເປັນປີທີ່ເກີດວິກິດທາງດ້ານເສດຖະກິດໂລກນັ້ນ ຄົນຈຳນວນຫຼາຍເຖິງກັບຕ້ອງສູນເສຍບ້ານແລະເງິນເກັບໃນຂະນະທີ່ທະນາຄານຂະໜາດໃຫຍ່ແລະສະຖາບັນການເງິນ ຊຶ່ງມີຄວາມຮັ່ງມີເຫຼົ່ານັ້ນກັບໄດ້ຮັບການກອບໂກຍຈາກລັດຖະບານຂອງປະເທດຊາດຂອງຕົນ ສະພາບເສດຖະກິດໂລກ ຂະນະນີ້ກຳລັງສົ່ງຜົນເຮັດໃຫ້ເກີດຄວາມບໍ່ເທົ່າທຽມຫຼາຍຂຶ້ນເລື່ອຍໆ ທັ້ງຍັງສົ່ງຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມໃນວົງກວ້າງ ແລະໃນບາງພື້ນທີ່ກໍ່ເກີດຄວາມຂັດແຍງແລະແຕກແຍກຂຶ້ນຄືກັນ ລະບອບໂອບທຶນນິຍົມໂລກອາໄສຫຼັກຄິດວ່າການເຕີບໂຕນັ້ນຈະບໍ່ມີຂີດຈຳກັດ ທັ້ງທີ່ໃນຄວາມເປັນຈິງນັ້ນ ເຮົາຕ່າງອາໄສຢູ່ຮ່ວມໂລກໃບດຽວນີ້ທີ່ເຕັ້ມໄປດ້ວຍຄວາມຈຳກັດ ເຊິ່ງເຮົາອາດຈະເອີ້ນຄວາມຈຳກັດນີ້ວ່າ ສຸດເຂດແດນຂອງດາວເຄາະໂລກ ໝາຍຄວາມວ່າເຮົາບໍ່ສາມາດໃຊ້ຫຼືທຳລາຍສັບພະຍາກອນທີ່ມີຢູ່ຕາມໃຈຢ່າງບໍ່ໄດ້ວ່າງແຜນເທື່ອ ຜົນໄດ້ຮັບແມ່ນຈຳນວນຂີ້ເຫຍື້ອທີ່ບໍ່ເຄີຍມີມາກ່ອນ. ຊຶ່ງເປັນການສ່ຽງໄພອັນຕະລາຍທີ່ຈະເກີດຂຶ້ນ

---

[2] Harvard Business Review, 2016: https://hbr.org/2016/01/income-inequality-makes-whole-countries-less-happy

ຢ່າງໜັກໜ່ວງ. ຕົວຢ່າງທີ່ໂດດເດັ່ນແມ່ນການລະບາດຂອງໂລກລະບາດພະຍາດໂຄໂລນາ. ມັນເປັນປະຈັກພະຍານທີ່ສຳຄັນວ່າລະບົບເສດຖະກິດໂລກບໍ່ໄດ້ຄຳນຶງເຖິງຜົນສະທ້ອນທີ່ຮ້າຍແຮງໃນເວລາທີ່ພວກເຮົາທຳລາຍທຳມະຊາດ. ແລະພວກເຮົາບໍ່ສາມາດຈັດການກັບໄວຣັສກ້ອງຈຸລະທັດເມື່ອພວກມັນເກີດຂຶ້ນ.

ການເຄື່ອນໄຫວຢ່າງໄວວາຂອງປະຊາກອນໂລກເນື່ອງຈາກການເດີນທາງ, ການທ່ອງທ່ຽວ, ຫຼືການຄ້າ. ນີ້ສະແດງໃຫ້ເຫັນວ່າທຸກສິ່ງທຸກຢ່າງຢູ່ໃນໂລກນີ້ແມ່ນເຊື່ອມຕໍ່ຢ່າງໃກ້ຊິດ. ພວກເຮົາບໍ່ສາມາດທຳລາຍທຳມະຊາດໂດຍບໍ່ມີຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມໄດ້ອີກເລີຍ.

3. **ລັດທິຫົວຮຸນແຮງທາງການເມືອງກຳລັງຮຸນແຮງຂຶ້ນ.** ເມື່ອສະພາບເສດຖະກິດສັງຄົມບໍ່ໝັ້ນຄົງ ປະຊາຊົນມັກຈະຊອກຫາກຸ່ມຄົນທີ່ຈະຕຳນິຕິຕຽນ. ໃນຍຸກຂອງຈັກກະພັດໂຣມັນໄດ້ຊາວຄຣິດສະຕຽນເປັນຜູ້ເຄາະຮ້າຍແລະຖືກຕຳນິຕິຕຽນສຳລັບການລະບາດແລະການທຳລາຍທະຫານ. ໃນຍຸກຂອງນາຊີເຢຍລະມັນນັ້ນ, ຊາວຢິວ, ໂຣມາ (ຊາວຍິບ), ກຸ່ມເກ, ລວມເຖິງຄົນພິການ, ແລະຫຼາຍກຸ່ມອື່ນໆໄດ້ຖືກຂົ່ມເຫັງ. ໃນປັດຈຸບັນມັນຄືກັນ. ຜູ້ມີອຳນາດກຳລັງຊອກຫາວິທີທີ່ຈະໃຊ້ປະໂຍດຈາກຄວາມບໍ່ແນ່ນອນຂອງສະຖານະການໃນປະຈຸບັນແລະຂົ່ມເຫັງຜູ້ທີ່ຄິດແຕກຕ່າງຈາກພວກເຂົາ.

ອັນນີ້ບາງຄັ້ງຮວມເຖິງການໃຊ້ອາວຸດ ແລະອຸປະກອນເພື່ອຈັດການກັບກຸ່ມອື່ນໆ. ຄວາມເຊື່ອທີ່ແຕກຕ່າງກັນ ອັນນີ້ມັກຈະເຮັດໃຫ້ກຸ່ມຜູ້ເຄາະຮ້າຍເຫຼົ່ານັ້ນຕ້ອງອົບພະຍົບຈາກດິນແດນທີ່ບັນພະບຸລຸດຂອງເຂົາເຈົ້າເຄີຍອາໄສຢູ່ມາດົນນານ. ຫຼາຍປະເທດເລີ່ມປະສົບກັບການຂາດປະຊາທິປະໄຕ. ຫຼືອຳນາດຫຼາຍຂຶ້ນ ຂອງບໍລິສັດຂະໜາດໃຫຍ່ຫຼືຂອງລັດຖະບານຂອງຕົນເອງການໂຈມຕີຕໍ່ນັກວິຈານ ແລະນັກຂ່າວ ແລະແນວໂນ້ມທີ່ຈະໃສ່ຊື່ກຸ່ມຄົນບາງກຸ່ມເປັນ "ບັນຫາ," ໂດຍສະເພາະບາງຊົນເຜົ່າ ຫຼືສາສະໜາ. ອັນນີ້ເຮັດໃຫ້ຊາດນິຍົມ. ຊົນເຜົ່າ ແລະ ພາວະການຄຽດແຄ້ນຄົນຕ່າງຊາດ ນີ້ໄດ້ກາຍເປັນເຫດຜົນຕົ້ນຕໍສຳລັບການເລັ່ງການເຄື່ອນຍ້າຍບ້ານ. ສິ່ງຜົນໃຫ້ມີຄົນອົບພະຍົບເຂົ້າເມືອງໃນຫຼາຍຂົງເຂດ.

**ຄຳຖາມ:**

● ມີສັນຍານອັນໃດທີ່ສະແດງໃຫ້ເຫັນວ່າຄວາມບໍ່ໝັ້ນຄົງທາງດ້ານສັງຄົມ ແລະເສດຖະກິດເກີດຂຶ້ນ? ແລະລັດທິຫົວຮຸນແຮງທາງດ້ານການເມືອງໃນເຂດທີ່ທ່ານອາໄສຢູ່?

● ຄຣິສະຕະຈັກຕ່າງໆ ຕອບສະໜອງຕໍ່ສິ່ງເຫຼົ່ານີ້ແນວໃດ?

- ຄຣິສະຕະຈັກໄດ້ເຮັດການສອນຫຼືເວົ້າເຖິງຂໍ້ຄວາມໃນພຣະຄໍາພີກຽ່ວກັບພຣະໄທຂອງພຣະເຈົ້າຕໍ່ຄວາມຍຸດຕິທໍາແລະຕໍ່ຄົນທຸກຍາກທັ້ງຫຼາຍຫຼືບໍ່ (ເພງ ສັນລະເສີນ 82:3,ເອເຊຢາ 1:17, ມີຄາ 6:8, ມັດທາຍ 25:31-46)?.
- ທ່ານເອງໄດ້ມີສ່ວນຮ່ວມຫຼືເຮັດຫຍັງແດ່ກັບປະເດັນດັ່ງກ່າວຂ້າງເທິງ ບໍ່ວ່າຈະເປັນໂຄງການຊ່ວຍເຫຼືອຄົນຍາກຈົນແລະຜູ້ອົບພະຍົບ?.
- ຄຣິສະຕະຈັກທັ້ງຫຼາຍມີອິດສະລະໃນການເວົ້າຫຼືເຈລະຈາກັບຜູ້ຜູ້ມີອໍານາດຫຼືບໍ່ ຫຼືພວກເຂົາຖືກການຂົ່ມເຫງເມື່ອບໍ່ເຮັດຕາມສິ່ງທີ່ລັດຖະບານບອກຫຼືບໍ່ຍ່ອມເຮັດຕາມທໍານຽມປະເພນີຂອງສັງຄົມ?
- ມີການຍົກປະເດັນທາງການເມືອງກັນໃນຄຣິສະຕະຈັກຂອງທ່ານຫຼືບໍ່  ຄົນໃນຄຣິສະຕະຈັກຕ້ອງການຫຼືໂນ້ມອຽງໄປ ຍັງແນວຄິດທາງການເມືອງດ້ານດຽວ່ຫຼືບໍ່ ທ່ານຄິດວ່າຄຣິສະຕຽນບໍ່ຄວນເຂົ້າໄປຫຍຸ້ງກັບເລື່ອງການເມືອງ?
- ຂ່າວປະເສີດຂອງພຣະເຢຊູຄຣິດແລະສິ່ງທີ່ພຣະອົງຊົງກ່າວວ່າກຽ່ວກັບແຜ່ນດິນຂອງພຣະເຈົ້າກຽ່ວຂ້ອງຢ່າງໃດແດ່ກັບປະເດັນດັ່ງກ່າວເບື້ອງຕົ້ນ?

## 4. **ພະຍາດໂຄວິດ 19 ສະເທືອນທົ້ງໂລກ.**

ການລະບາດຂອງໄວຣັດ Corona ໄດ້ເຮັດໃຫ້ເກີດການປ່ຽນແປງອັນໃຫຍ່ຫຼວງໃນໂລກ. ແລະໄດ້ສ້າງຄວາມທ້າທາຍຫຼາຍຢ່າງ ໃນສະຖານະການທີ່ມີຄວາມຫຍຸ້ງຍາກແລ້ວໃນການດໍາລົງຊີວິດແລ້ວ. ມັນສາມາດເວົ້າໄດ້ວ່າທຸກຄົນຢູ່ໃນໂລກນີ້ກໍາລັງປະສົບກັບພະຍຸດຽວກັນແລະພວກເຮົາທັງຫມົດຢູ່ໃນເຮືອຄົນລະລໍາທີ່ແຕກຕ່າງກັນ. ບາງປະເທດມີລະບົບສາທາລະນະສຸກທີ່ດີເລີດ. ທຸກຄົນມີການເຂົ້າເຖິງການບໍລິການດ້ານສຸຂະພາບ.ໃນຫຼາຍປະເທດ, ມີແຕ່ຄົນຮັ່ງມີເທົ່ານັ້ນທີ່ສາມາດຈ່າຍຄ່າປິ່ນປົວໄດ້. ໃນເຂດຊົນນະບົດຫ່າງໄກສອກຫລີກໃນປະເທດທຸກຍາກ ເຖິງແມ່ນການກວດສອບຈໍານວນຜູ້ຕິດເຊື້ອໄວຣັສແລະຈໍານວນຜູ້ເສຍຊີວິດຈາກພະຍາດໂຄວິດ-19 ກໍເປັນສິ່ງຍັງບໍ່ທັນເປັນໄປໄດ້. ໃນປະເທດທີ່ອຸດົມສົມບູນ, ອົງການຂອງລັດຖະບານກໍາລັງໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ປະຊາຊົນທີ່ບໍ່ສາມາດເຮັດວຽກໄດ້ໃນໄລຍະການລະບາດຂອງ COVID-19. ແຕ່ລັດຖະບານສ່ວນໃຫຍ່ໃນໂລກບໍ່ສາມາດເຮັດແນວນັ້ນໄດ້. ສິ່ງຜົນໃຫ້ຄວາມທຸກຍາກຢ່າງຮ້າຍແຮງ ຍ້ອນການສູນເສຍລາຍຮັບຢ່າງກະທັນຫັນ.

ຂໍໃຫ້ເບິ່ງຄືນຢູ່ໃນໂບດ ສຳລັບສ່ວນໃຫຍ່ຂອງພວກເຮົາ, ມັນໄດ້ຖືກພົບເຫັນວ່າໂລກລະບາດໄດ້ສ້າງຄວາມປ່ຽນແປງອັນໃຫຍ່ຫຼວງຕໍ່ໂບດເຊັ່ນກັນ. ໂບດຫຼາຍແຫ່ງຕ້ອງປ່ຽນໄປສູ່ລະບົບອອນໄລນ໌. ບາງແຫ່ງກໍ່ຕັ້ງໂບດທາງອອນໄລຂຶ້ນ. ແຕ່ສິ່ງທ້າທາຍຫຼັງຈາກ COVID ຜ່ານໄປ ກໍ່ຄືແມ່ນຈະພະຍາຍາມເຮັດໃຫ້ສະມາຊິກກັບຄືນໄປນະມັດສະການຢູ່ໂບດຕາມປົກກະຕິ, ໂບດໄດ້ເຮັດໜ້າທີຮັບໃຊ້ເປັນສູນກາງຂອງການສະຫນັບສະຫນູນໃຫ້ການຊ່ວຍເຫຼືອໃນໄລຍະວິກິດການ. ໂດຍການໃຫ້ອາຫານແກ່ຜູ້ທີ່ຫິວໂຫຍ ດູແລຄົນເປົ່າປ່ຽວດຽວດາຍ ແລະການປອບໂຍນຜູ້ທີ່ໂສກເສົ້າ ຢ່າງໃດກໍ່ຕາມພົບວ່າເກີດຄວາມສັບສົນແລະການເຫັນຕ່າງເກີດຂຶ້ນທາມກາງຄຣິສະຕຽນຄືກັນ.

**ຄຳຖາມ**:

- ເກີດຄຳຖາມຫຼືປະເດັນບັນຫາຫຍັງແດ່ໃນຄຣິສະຕະຈັກຂອງທ່ານໃນຊ່ວງທີ່ໂຄວິດລະບາດ?
- ທັດສະນະຄະຕິຕ່າງໆ ໄດ້ປ່ຽນແປງໄປໃນຊ່ວງເວລານັ້ນຫຼືບໍ່ແນວໃດ?
- ມີຄຳຖາມຫຼືຂໍ້ສົງໄສກຽ່ວກັບສາເຫດຂອງການແພລະບາດຂອງເຊື້ອໄວຣັດນີ້ຫຼືບໍ່ ມີຄົນໃນຄຣິສະຕະຈັກທີ່ຄິດວ່ານີ້ເປັນສັນຍານບາງຢ່າງຈາກພຣະເຈົ້າຫຼືບໍ່?
- ຂໍ້ສົງໄສຕ່າງໆ ໄດ້ນຳໄປສູ່ການຍົກປະເດັນຂຶ້ນມາບໍ່ວ່າເມື່ອໃດເຮົາຄວນເຊື່ອຟັງແລະເມື່ອໃດທີ່ເຮົາບໍ່ຄວນຮັບຟັງສິ່ງທີ່ຂອງລັດບອກກັບເຮົາ?
- ຄວາມເຫຼື່ອມລ້ຳບໍ່ເທົ່າທຽມຊຶ່ງເກີດຂຶ້ນຈາກການແພລະບາດຂອງພະຍາດຄັ້ງນີ້ໄດ້ນຳໄປສູ່ການລົມກັນຫຼືການລົງມືຊ່ວຍເຫຼືອຜູ້ທີ່ທຸກຍາກແລະຄົນບໍ່ມີທາງສູ້ທັ້ງຫຼາຍບໍ?

ການບອກວ່າເຫດການການແພລະບາດຂອງໂຄວິດເປັນການລົງໂທດຈາກພຣະເຈົ້າຫຼືເປັນສັນຍານບອກວ່າຍຸກສຸດທ້າຍນັ້ນເປັນບັນຫາໜຶ່ງທີ່ເກີດຂຶ້ນຕະຫຼອດມາໃນໜ້າປະວັດສາດຄຣິສະຕຽນ ຕັ້ງແຕ່ພຣະເຢຊູຄຣິດໄດ້ກັບໄປສູ່ສະຫວັນກໍ່ປະກົດເຫດການຫຼາຍຕໍ່ຫຼາຍຄັ້ງທີ່ບັນດາຜູ້ເຊື່ອຕ່າງພາກັນບອກວ່າຍຸກສຸດທ້າຍກຳລັງຈະມາເຖິງໃນໄວໆນີ້ແລ້ວ ບາງທີ່ພວກເຂົາກໍ່ຖິ້ມບ້ານເຮືອນແລະ ວຽກເພື່ອລໍ່ຖ້າການສະເດັດກັບມາຂອງພຣະເຢຊູ ແລະຫຼາຍຄັ້ງພວກເຂົາຫຍຸດກິດຈະກຳປົກກະຕິແລະບໍ່ສົນໃຈສິ່ງທີ່ກຳລັງເກີດຂຶ້ນອ້ອມຮອບຕົວອີກຕໍ່ໄປ ຫຍຸດໃສ່ໃຈແລະມອບຄວາມຮັກໃຫ້ແກ່ເພື່ອນບ້ານ ບໍ່ໃຫ້ຄວາມຊ່ວຍເຫຼືອແມ່ຍິງໝ້າຍແລະເດັກກຳພ້າແລ້ວ ໄປທາງໜ້າແຕ່ພຽງອະທິຖານກັບການລໍ່ຄອຍເທົ່ານັ້ນ ແລະຜົນກໍ່ປະລັກຢູ່ສະເໝີວ່າການທີ່ຄິດແລະລົງຄຳເຫັນເຊັ່ນນີ້ບໍ່ໄດ້ເປັນຄວາມຈິງເລີຍ ໃນພຣະຄຳພີ ມັດທາຍ 24:36-44 ພຣະເຢຊູຊົງກ່າວວ່າ ເຕືອນພວກເຮົາວ່າບຸດມະນຸດຈະກັບມາເໝືອນໂຈນໃນຕອນກາງຄືນແລະບໍ່ມີຜູ້ໃດຮູ້ວັນຫຼືໂມງໃດ ແມ້ແຕ່ທູດສະຫວັດຫຼືພຣະອົງເອງກໍ່ບໍ່ຮູ້ໂມງຍາມນັ້ນ ດັ່ງນັ້ນ ແທນທີ່ຈະລໍ່ຄອຍສັນຍານຕ່າງໆ ພຣະເຢຊູຊົງທ້າທາຍໃຫ້ເຮົາຕຽມພ້ອມຢູ່ສະເໝີຕ່າງຫາກ

ຖ້າເປັນແບບນັ້ນ ເຮົາຄວນຈະຕຽມຕົວໃຫ້ພ້ອມແນວໃດ ໃນບົດຕໍ່ໄປຂອງພຣະຄຳມັດທາຍ 25 ນັ້ນ ພຣະເຢຊູຊົງເລົ່າເລື່ອງລາວສາມເລື່ອງເພື່ອອະທິບາຍກ່ຽວກັບການຕຽມພ້ອມນີ້

**ເລື່ອງທີ່1** ຄືຍິງສາວບອດທີ່ສະຫຼາດແລະບໍ່ສະຫຼາດ ຄົນໂງ່ນັ້ນເອົາຕະກຽງໄປແຕ່ບໍ່ມີນ້ຳມັນ ໃນຂະນະຄົນທີ່ມີບັນຫາເຕີມນ້ຳມັນລົງໄປໃນຕະກຽງຂອງຕົນ

**ເລື່ອງທີ່2** ນັ້ນກ່ຽວກັບເຈົ້ານາຍຄົນໜຶ່ງກຳລັງຈະອອກເດີນທາງໄປໄກ ຈຶ່ງມອບເງິນໃຫ້ແກ່ຄົນຮັບໃຊ້ສາມຄົນ ສອງຄົນທຳອິດນຳເງິນໄປລົງທຶນໄດ້ກຳໄລສອງເທົ່າ ໃນຂະນະທີ່ອີກຄົນເອົາເງິນໄປຂຸດຂຸ່ມຝັງໄວ້ ເມື່ອເຈົ້ານາຍກັບມາ ກໍ່ຊື່ນຊົມທີ່ໃຊ້ຕະລັນໃນການທຳໃຫ້ເພີ່ມພູນຫຼາຍຂຶ້ນ ແລະບອກຄົນຮັບໃຊ້ທີ່ສາມວ່າເປັນຄົນຂີ້ຄ້ານແລະຊົ່ວຊ້າ ແລະໂຍນເຂົາອອກໄປຍັງທີ່ມືດພາຍນອກ

**ເລື່ອງທີ່3** ພຣະອົງຊົງເລົ່າເລື່ອງການສະເດັດກັບມາພິພາກສາໂລກ ໂດຍແຍກຄົນເໝືອນແຍກແກະກັບແບ້ອອກຈາກກັນ ເລື່ອງລາວທີ່ພຣະເຢຊູຊົງປຽບທຽບນີ້ສະແດງໃຫ້ເຫັນຊັດເຈນກ່ຽວກັບການສະເດັດມາຂອງພຣະອົງດັ່ງນັ້ນ ການຮູ້ຈັກພຣະເຢຊູແລະຕຽມຕົວເອງໃຫ້ພ້ອມສຳຫຼັບການກັບມາຄັ້ງທີ່ສອງນັ້ນສາມາດເຮັດໄດ້ໂດຍການຊ່ວຍເຫຼືອຄົນຫິວໂຫຍອຶດຢາກໃຫ້ນ້ຳແກ່ຄົນທີ່ກະຫາຍ ຕ້ອນຮັບຄົນແປກໜ້າ ຫາເສື້ອຜ້າມາຫົ່ມໃຫ້ແກ່ຄົນທີ່ເປືອຍກາຍບໍ່ມີເຄື່ອງນຸ່ງຫົ່ມແລະການຢ້ຽມຢາມຜູ້ຕ້ອງຂັງໃນຄຸກທັ້ງຫຼາຍ.

ອາດຈະເວົ້າໄດ້ວ່າ ການຕຽມຕົວໃຫ້ພ້ອມສຳຫຼັບການສະເດັດກັບມາຂອງພຣະເຢຊູ ແລະບໍ່ຕ້ອງພິພາກສານັ້ນສາມາດເຮັດໄດ້ໂດຍການໃຊ້ເວລາແລະຊີວິດຂອງເຮົາໃນການຮັບໃຊ້ໂລກໃບນີ້ທີ່ແຕກຫັກແລະຂາດແຄນ ໃຫ້ເຮົາຈຸດກະຕຽງຝ່າຍຈິດວິນຍານຂອງເຮົາໃຫ້ລຸກໂຊຊ່ອງສະຫວ່າງ ຊ່ອງສະຫວ່າງແກ່ໂລກ ປຽນແປງໂລກດ້ວຍຄວາມເມດຕາແລະຄວາມຍຸດຕິທຳຂອງພຣະເຢຊູ ໃຫ້ເຮົາເພີ່ມພູນຄວາມສາມາດແລະຕະລັນທີ່ພຣະເຈົ້າຊົງມອບໃຫ້ແກ່ເຮົາໂດຍການທຸ້ມເທເຮັດວຽກເພື່ອແຜ່ນດິນຂອງພຣະອົງ ຫຼາຍກວ່າແຄ່ໄປຟັງຕົວຢູ່ໃນພິທີກຳໃນຄຣິດສະຕະຈັກແລ້ວລໍ່ການກັບມາຂອງພຣະເຢຊູ ເຮົາສາມາດພິສູດຕົວເອງວ່າເປັນລູກແກະຂອງພຣະເຢຊູຜູ້ຊົງເປັນຜູ້ລ້ຽງທີ່ປະເສີດໄດ້ດ້ວຍການຮັບໃຊ້ພຣະອົງຜ່ານການຍົບຍື່ນຄວາມຊ່ວຍເຫຼືອແກ່ຄົນຍາກຈົນ ຄົນທີ່ປະສົບຄວາມທຸກຍາກລຳບາກແລະເຈັບປວດເຫຼົ່ານັ້ນ.

ໃຫ້ເຮົາລອງກັບໄປຄິດເບື້ອງຫຼັງຊ່ວງໂຄວິດ ພຣະເຈົ້າບໍ່ໄດ້ຊົງພໍພຣະໄທກັບການທີ່ເຮົາສາມາດດູແລອາຄານຄຣິດສະຕະຈັກໄດ້ເປັນຢ່າງດີ ຫຼືສາມາດສ້າງຂ່າວຄຣິດສະຕຽນເທິງໂລກອອນໄລ ຢ່າງສົມບູນ ແຕ່ພຣະເຈົ້າຊົງພໍພຣະໄທທີ່ເຮົາປະຕິບັດຮັບໃຊ້ພຣະເຢຊູ ແລະສ່ອງສະຫວ່າງສູ່ມູມທີ່ມີຄວາມມືດມົນ ມອບຄວາມຮັກແລະຫ່ວງໃຍແກ່ຄົນທີ່ເຈັບປ່ວຍແລະກຳລັງຈະເສຍຊີວິດ ຊ່ວຍເຫຼືອຄົນທີ່ຂາດເຂີນແລະຖືກການຂົ່ມເຫັງ

ພວກເຮົາທີ່ເປັນຄຣິສະຕຽນສາມາດຮຽນຮູ້ບົດຮຽນສຳຄັນຫຼາຍປະການຈາກເຫດການການແພລະບາດຂອງໂຄວິດນີ້ ມີຕົວຢ່າງຂອງຜູ້ເຊື່ອທົ່ວໂລກໄດ້ຄົ້ນພົບບົດຮຽນຜ່ານທາງການອ່ານພຣະຄຳພີ ອະທິຖານ ແລະສະແຫວງຫາທີ່ຈະເຂົ້າໃຈສັນຍານຂອງສິ່ງທີ່ເກີດຂຶ້ນເຊັ່ນ:

- **ເຮົາບໍ່ສາມາດຄວບຄຸມຫຍັງໄດ້ເລີຍ**: ມະນຸດໃນປັດຈຸບັນນີ້ມັກຈະຄິດວ່າຕົນເອງສາມາດຄວບຄຸມຫຼືກຳນົດຊະຕາຊີວິດຂອງຕົນເອງໄດ້ ເຮົາມັກຈະຄິດວ່າການສຶກສາ ການເຮັດວຽກໜັກ ເທັກໂນໂລຊີແລະວິທະຍາສາດສາມາດຊ່ວຍເຮົາຮອດພົ້ນຈາກບັນຫາທີ່ມະນຸດຊາດເຄີຍພົບພໍ້ໃນອາດີດ ເຮົາຫຼອກຕົນເອງວ່າ ເຮົາມີຄວາມເຂົ້າໃຈໂລກຫຼາຍພໍທີ່ຈັດການກັບທຸກບັນຫາໄດ້ ມີການພະຍາຍາມໃສ່ຄວາມຄິດໃຫ້ແກ່ກັນວ່າເຮົາສາມາດຈະເລີນແລະດີຂຶ້ນກວ່າເດີມໄດ້ຢ່າງບໍ່ມີຂີດຈຳກັດ ເຮົາຈະມີລາຍໄດ້ແລະມາດຕະຖານການດຳລົງຊີວິດທີ່ດີຂຶ້ນເລື້ອຍໆ ແລະລະບົບເສດຖະກິດໂລກນັ້ນຈະໃຫ້ປະໂຫຍດໃຫ້ແກ່ມະນຸດຊາດທັ້ງຫຼາຍ.

ແຕ່ໃນຄວາມເປັນຈິງແລ້ວຊີວິດເປັນສິ່ງທີ່ອ່ອນແອ ແລະຈຳເປັນຕ້ອງເພິ່ງພາພຣະຄຸນຂອງພຣະເຈົ້າເປັນຢ່າງຫຼວງຫຼາຍ ພຣະຄຳຍາໂກໂບ 4:13-15 ໄດ້ກ່າວວ່າ "ຟັງໃຫ້ດີ ທ່ານທັ້ງຫຼາຍທີ່ເວົ້າວ່າ ວັນນີ້ຫຼືມື້ອື່ນເຮົາຂະເຂົ້າໄປໃນເມືອງນັ້ນ ຂະຢູ່ທີ່ນັ້ນປະມານ1ປີ ແລະຈະຄ້າຂາຍແລ້ວໄດ້ກຳໄລ ແຕ່ທ່ານບໍ່ຮູ້ເລື່ອງຂອງມື້ອື່ນຊີວິດຂອງພວກທ່ານເປັນເໝືອນຫຍັງ? ກໍ່ເປັນເໝືອນໝອກທີ່ປະກົດຢູ່ພຽງຊົ່ວຄາວແລ້ວກໍ່ຈາງຫາຍໄປ ແຕ່ພວກທ່ານຄວນຈະເວົ້າວ່າ ຖ້າອົງພຣະຜູ້

ເປັນເຈົ້າຊົງໂຜດ ເຮົາຈະຍັງມີຊີວິດຢູ່ ແລະຈະເຮັດສິ່ງນີ້ຫຼືສິ່ງນັ້ນ" ທັງພຣະຄຳພີແລະເຊື້ອໄວຣັດໂຄໂຣນາ ໄດ້ທ້າທາຍຄວາມເຊື່ອທີ່ວ່າມະນຸດສາມາດຄວບຄຸມທຸກຢ່າງໄດ້ ພຣະເຈົ້າຊົງສ້າງພວກເຮົາທັງຫຼາຍເພື່ອໃຫ້ເຮົາເພິ່ງພາພຣະອົງແລະເພິ່ງພາການຊົງສ້າງຂອງພຣະອົງດ້ວຍດັ່ງນັ້ນການຈະເລີນຮຸ່ງເຮືອງແລະການຢູ່ລອດພົ້ນຂອງມະນຸດຈຶ່ງຂຶ້ນກັບວ່າເຮົາດູແລໂລກໜ່ວຍນີ້ດີພຽງພໍໃດນັ້ນເອງ.

- **ສຸຂະພາບຂອງເຮົາຂຶ້ນຢູ່ກັບສຸຂະພາບຂອງໂລກແລະທຳມະຊາດ**: ເຊື້ອໄວຣັດນ້ອຍໆສາມາດສ້າງຄວາມສັບສົນວຸ່ນວາຍຂຶ້ນແກ່ຄົນທັງຫຼາຍຊາດ ທຳລາຍເສດຖະກິດແລະຊີວິດຢ່າງຫຼວງຫຼາຍ ຕະຫຼອດຊ່ວງເວລາສາມສິບປີທີ່ຜ່ານມາ ຜູ້ຊ່ຽວຊານທັງຫຼາຍໄດ້ອອກມາເຕືອນວ່າການທຳລາຍປ່າແລະສິ່ງທີ່ມີຊີວິດໃນລະບົບນິເວດ ໂດຍສະເພາະສັດປ່າທີ່ຄົນລ່າເພື່ອນຳມາເປັນອາຫານນັ້ນ ເປັນການເປີດໂອກາດໃຫ້ໄວຣັດຫຼວງຫຼາຍຊະນິດທີ່ຢູ່ໃນສັດປ່າຂະຫຍາຍຕົວຈົນຂ້າມມາແພ່ກະຈາຍໃນຮ່າງກາຍມະນຸດ ເຊິ່ງຈະນຳໄປສູ່ການແພ່ລະບາດທົ່ວໂລກ[3] ຕົວຢ່າງຊັດເຈນກ່ອນໜ້ານີ້ຄືການແພ່ລະບາດຂອງພະຍາດ ອີໂບລາ ຊາ ເວດທ ໄນ ໄວຣັດ ສີກາ, ເມີສ ແລະແມ້ກະທັ້ງເຊື້ອ ເອດສ ເຫຼົ່ານີ້ລ້ວນເປັນສັນຍານເຕືອນວ່າສາມາດເກີດການລະບາດໃຫຍ່ເມື່ອໃດກໍ່ໄດ້ ເໝືອນຕອນນີ້ຈະສາຍເກີນແກ້ແລ້ວ ເຮົາບໍ່ສາມາດໂທດວ່າພຣະເຈົ້າເຮັດໃຫ້ເກີດສິ່ງນີ້ຫຼືບອກວ່າເປັນການລົງໂທດຈາກພຣະເຈົ້າ ທີ່ແທ້ຈິງ ເຮົາຄວນໂທດຕົນເອງຫຼາຍກວ່າ ເພາະມະນຸດຕ່າງໂລບມາກໂລພາ ໂດຍການກອບໂກຍແລະທຳລາຍລະບົບນິເວດຂອງໂລກ ຈົນໃນທີ່ສຸດຜົນກະທົບກໍ່ຍ້ອນກັບມາຍັງມະນຸດ.

ຂ່າວປະເສີດຂອງພຣະເຢຊູຄຣິດນັ້ນກ່ຽວຂ້ອງໂດຍຕົງກັບຄວາມສຳພັນຮູບແບບຕ່າງໆໄດ້ແກ່ກັບພຣະເຈົ້າກັບຕົວເຮົາເອງ ກັບຄົນອື່ນ ແລະກັບການຊົງສ້າງຂອງພຣະເຈົ້າ ວິຊານິເວດວິທະຍາຄືການສຶກສາຄວາມສຳພັນລະຫວ່າງສິ່ງທີ່ມີຊີວິດທັງຫຼາຍກັບສິ່ງແວດລ້ອມອ້ອມຮອບຕົວເຮົາ ໃນຄວາມຄິດແງ່ນີ້ ຫຼັກຂໍ້ຄວາມເຊື່ອແລະວິທີແບບຄຣິດສະຕຽນຈຶ່ງເປັນຄວາມເຊື່ອທີ່ກ່ຽວຂ້ອງໂດຍຕົງກັບນິເວດວິທະຍາສາດ ເມື່ອເຮົາທຳລາຍແກນຫຼັກຂອງຄວາມສຳພັນທັງໂດຍການເຫັນແກ່ຕົວແລະຄວາມໂລບ ຜົນຄືເຮົາເອງທີ່ທ້າຍທີ່ສຸດຕ້ອງປະສົບກັບຜົນກະທົບເຊິ່ງລົບ ເພາະທຸກອົງປະກອບໃນທຸກຄວາມສຳພັນມີຄວາມກ່ຽວຂ້ອງເຊື່ອມໂຍງກັນຢ່າງເລິກເຊິ່ງໃນສາຍໃຍແຫ່ງຊີວິດນີ້ ບໍ່ວ່າຈະເປັນຄວາມສຳພັນລະຫວ່າງເຮົາກັບພຣະເຈົ້າ ກັບເພື່ອນບ້ານທົ່ວໂລກ ກັບດິນ, ປ່າ ແລະການຊົງສ້າງທັງໝົດຊຶ່ງພຣະເຈົ້າຊົງປະທານໃຫ້ເຮົາເປັນຜູ້ຮັກສາດູແລ ເມື່ອເຮົາທຳລາຍທຳມະຊາດ ລະບົບນິເວດຈຶ່ງລົ້ມລົງ ນຳໄປສູ່ການລົ້ມສະລາຍຂອງຄວາມສຳພັນຕ່າງໆ ຢ່າງຫຼີກເວັ້ນບໍ່ໄດ້ ພຣະເຈົ້າຊົງປະທານຈະຍໍ້າເຕືອນເຮົາວ່າເຮົາບໍ່ສາມາດຄວບຄຸມທຸກຢ່າງໄດ້ ແລະເຮົາຈຳເປັນຕ້ອງເພິ່ງພາການຊົງສ້າງທັງຫຼາຍຂອງພຣະອົງ.

---

[3] https://www.nationalgeographic.com/science/article/experts-warned-pandemic-decades-ago-why-not-ready-for-coronavirus/

- **ໃຫ້ເຮົາມາຮ້ອງໄຫ້ເສົ່າໂສກ** : ພຣະຄໍາພີເວົ້າເຖິງການຕອບສະໜອງພະຍາດໂລກໄພໄຂ້ເຈັບແລະຄວາມຜິດບາບທີ່ເກາະກິນທໍາລາຍມະນຸດ ໂດຍໃຫ້ເຮົາເສົ່າໂສກ ການນະມັດສະການຕາມຫຼັກພຣະຄໍາພີນັ້ນປະກອບດ້ວຍ "ການສັນລະເສີນແລະນະມັດສະການ" ສະເໝີ ນອກຈາກນັ້ນຍັງປະກອບດ້ວຍການຮ້ອງໄຫ້ເສົາໂສກ ການລະບາຍຄວາມໃນໃຈແລະການໄຫວທຸກດ້ວຍ (ຕົວຢ່າງກວ່າສາມສິບເປີເຊັນຂອງພຣະຄໍາເພງສັນລະເສີນນັ້ນເວົ້າວ່າການເສົ່າໂສກ ເຮົາຄວນໂສກເສົ້າເມື່ອເຮົາຄິດເຖິງຈໍານວນຄົນຕິດເຊື້ອແລະເສຍຊີວິດຈາກພະຍາດຖຄວິດ 19 ໂດຍສະເພາະຢ່າງຍິ່ງທາມກາງຄົນທຸກຍາກແລະອ່ອນແອທັ້ງຫຼາຍ ແມ້ຈະຍັງມີການຜິດຖຽງກັນຈົນເຖິງປັດຈຸບັນນີ້ ກ່ຽວກັບສາເຫດທີ່ແທ້ຈິງຂອງການແພ່ລະບາດພະຍາດຄັ້ງໃຫຍ່ ແລະຍັງບໍ່ໄດ້ຄໍາຕອບທີ່ຊັດເຈນ ແຕ່ເຮົາຮູ້ວ່າຕົ້ນກໍາເນີດໄວຣັດນັ້ນມາຈາກສັດປ່າ ນັກວິທະຍາສາດຕ່າງເຊື່ອວ່າມະນຸດມີຄວາມສຽງທີ່ສຸດຕໍ່ເຊື້ອພະຍາດທີ່ລະບາດອີກໃນອານາຄົດ ເພາະເຮົາຍັງບໍ່ຫຍຸດທໍາລາຍແຫຼ່ງທີ່ຢູ່ແລະຊີວິດສັດປ່າ ເຮົາຈຶ່ງຄວນໂສກເສົ້າເສຍໃຈກັບການຄວາມເສຍຫາຍທີ່ເກີດຂຶ້ນຈາກນໍາມືຂອງເຜົ່າພັນມະນຸດ ການທໍາລາຍສິ່ງທີພຣະເຈົ້າຊົງສ້າງເປັນການເຮັດສິ່ງທີ່ກົງກັນຂ້າມກັບຄໍາສັ່ງຂອງພຣະເຈົ້າ ຊຶ່ງໃຫ້ເຮົາເປັນຜູ້ຮັກສາດູແລການຊົງສ້າງຂອງພຣະອົງການກະທໍາຂອງເຮົາສົ່ງຜົນຕໍ່ທັ້ງສິ່ງທີ່ພຣະເຈົ້າຊົງສ້າງ ແລະສົ່ງຜົນໃຫ້ເຮົາເອງຕ້ອງທົນທຸກດ້ວຍ.

ການຮ້ອງໄຫ້ໂສກເສົ້ານັ້ນບໍ່ໄດ້ໝາຍເຖິ່ງການເສຍໃຈຫຼືຮູ້ສຶກຜິດເທົ່ານັ້ນ ເປັນການຮ້ອງໄຫ້ເພາະສໍານຶກວ່າເຮົາເປັນສ່ວນໜຶ່ງຂອງບັນຫາ ແລະມີພຽງພຣະເຈົ້າຜູ້ຊົງສິດອໍານາດເທົ່ານັ້ນທີ່ສາມາດປຽ່ນແປງຫົວໃຈຂອງເຮົາໄດ້ ເປັນການໂສກເສົ້າໃນສ່ວນໜຶ່ງຂອງຫົວໃຈເຖິງບັນຫາທີ່ໃຫຍ່ເກີນກວ່າກໍາລັງຄວາມສາມາດຂອງເຮົາຈະແກ້ໄຂໄດ້ ພຣະຄໍາໂຣມ 8:22 ກ່າວວ່າ "ເຮົາຮູ້ຢູ່ວ່າ ທຸກສິ່ງທີ່ພຣະອົງໄດ້ເນຣະມິດສ້າງນັ້ນ ກໍໂອ້ຍຄາງດ້ວຍຄວາມເຈັບປວດຈົນເທົ່າທຸກມື້ນີ້" ຂໍ້ຕໍ່ມາຍັງເວົ້າອີກວ່າ "ແລະບໍ່ແມ່ເທົ່ານັ້ນ ແຕ່ເຮົາເອງດ້ວຍ ຜູ້ໄດ້ຮັບພຣະວິນຍານເປັນຜົນທໍາອິດ ຕົວເຮົາເອງກໍໂສກເສົ້າການທີ່ພຣະເຈົ້າຈະຊົງໃຫ້ມີຖານະເປັນລູກ ຄືທີ່ຈະຊົງໄຖ່ການຂອງເຮົາ" ແລະສຸດທ້າຍ ໃນຂໍ້ 26 "ພຣະວິນຍານກໍ່ຊົງຊ່ວຍເມື່ອເຮົາອ່ອນກໍາລັງດ້ວຍ ເພາະເຮົາບໍ່ຮູ້ວ່າຄວນຈະອະທິຖານຂໍຫຍັງແດ່ ແຕ່ພຣະວິນຍານຊົງຊ່ວຍຂໍແທນ ດ້ວຍການໂສກເສົ້າຊຶ່ງບໍ່ອາດເວົ້າເປັນຄໍາເວົ້າ" ຈາກພຣະຄໍາຕອນນີ້ເຮົາເຫັນຄວາມເຊື່ອມໂຍງກັນຢ່າງໃກ້ຊິດລະຫວ່າງການຊົງສ້າງທັ້ງຫຼາຍ ມະນຸດແລະຫົວໃຈຂອງພຣະເຈົ້າ ປັດຈຸບັນນີ້ເຮົາປະສົບກັບຄວາມເຈັບປວດໃຫຍ່ຫຼວງແລະປາດຖານາຈະຫຼຸດພົ້ນ ແຕ່ເບິ່ງເໝືອນຄວາມເຈັບປວດກັບຍິ່ງເພີ່ມທະວີຄວາມຮຸນແຮງຫຼາຍຂຶ້ນ ຂະນະດຽວກັນແສງແຫ່ງຄວາມຫວັງແລະການປົດປ່ອຍ ຈະນໍາໄປສູ່ຄວາມຊື່ນບານໃນອານາຄົດນັ້ນກໍ່ໃກ້ເຂົ້າມາດ້ວຍເຊັ່ນກັນ ໃນຂະນະທີ່ເຮົາໂສກເສົ້າກັບຊີວິດຜູ້ຄົນຈໍານວນທີ່ສູນເສຍໄປຈາກພະຍາດໂຄວິດ 19 ເສຍໃຈກັບການສູນພັນຂອງສິ່ງມີຊີວິດຫຼາຍຊະນິດ ພົບກັບ

ຜົນກະທົບຂອງວິກິດສະພາບອາກາດໂລກ ແຕ່ກໍ່ເປັນຊ່ວງເວລາທີ່ຫົວໃຈຂອງຄຣິສຕຽນປະສານໃກ້ຊິດແລະທົນທຸກຮ່ວມກັບການຊົງສ້າງທັງຫຼາຍແລະເຊື່ອມໂຍງໃກ້ຊິດກັບພະໄທຂອງພຣະເຈົ້າຜູ້ຊົງປະທານລົມຫາຍໃຈແກ່ທຸກໆຊີວິດ ແລະເຮົາຈະທົນທຸກຄຽງຂ້າງການຊົງສ້າງອື່ນໆ ພຣະເຈົ້າກໍ່ຈະຊົງປອບໂຍນປະທານກຳລັງແລະຄວາມຫວັງໃຫ້ແກ່ເຮົາດ້ວຍ.

ການຮ້ອງໄຫ້ໂສກເສົ້ານັ້ນບໍ່ຄວນເປັນຈຸດຈົບຂອງສິ່ງທີ່ເຮົາຕ່າງກຳລັງພົບຢູ່ ແຕ່ຄວນນຳໄປສູ່ການລົງມືເຮັດທັນທີ່ ພຣະເຈົ້າໄດ້ປຸກເລົ້າໂລມຈິດໃຈຂອງເຮົາໃຫ້ເປັນຜູ້ສ້າງຄວາມປ່ຽນແປງເທິງໂລກໜ່ວຍນີ້ທີ່ເຮົາເອງຕ້ອງການເຫັນສິ່ງດີໆ ເກີດຂຶ້ນ (ສຸພາສິດ 3:6; 2ຂາວຄາວ 7:14) ສິ່ງນີ້ເອງທີ່ນຳພາເຮົາໄປສູ່ຈຸດໝາຍຕໍ່ໄປ...

- **ເຮົາໄດ້ຮັບການຊົງເອີ້ນໃຫ້ສ້າງໂລກທີ່ດີຂຶ້ນດ້ວຍຮາກຖານແຫ່ງພຣະຄຳພີ** : ຫຼັງຈາກເຫດການ ການແພລະບາດໃຫຍ່ນີ້ໄດ້ຜ່ານພົ້ນໄປ ຄົນຈຳນວນຫຼາຍຕ້ອງການຢ່າງຍິ່ງໃຫຍ່ທີ່ຈະກັບໄປໃຊ້ຊີວິດ "ຕາມປົກກະຕິ" ແຕ່ເຮົາຫາຄິດອອກວ່າເພາະການໃຊ້ຊີວິດແບບປົກກະຕິນີ້ທີ່ເຮົາໄປສູ່ການລະບາດຄັ້ງຮຸນແຮງ! ລະບົບເສດຖະກິດໂລກ ຂະນະນີ້ກຳລັງເນັ້ນແລະສົ່ງເສີມໃຫ້ມີການທຳລາຍສັບພະຍາກອນທຳມະຊາດຢ່າງຫຼວງຫຼາຍ ລວມເຖິງການເຕີບໂຕຂອງການເດີນທາງລະຫວ່າງປະເທດນັ້ນເອື້ອໃຫ້ເຊື້ອພະຍາດແພ່ກະຈາຍໄປທົ່ວໂລກຢ່າງວ່ອງໄວ. ເຫດການການລະບາດຄັ້ງໃຫຍ່ຂອງເຊື້ອພະຍາດຄັ້ງນີ້ສະທ້ອນໃຫ້ເຫັນຊັດເຈນ ເຖິງຄວາມຍຸດຕິທຳ ແລະຄວາມບໍ່ເທົ່າທຽມກັນ ແຕ່ເຮົາໄປຄວນປ່ອຍໃຫ້ສະຖານະການແບບນີ້ດຳເນີນຕໍ່ໄປ ເຮົາຄົງບໍ່ຕ້ອງການເຫັນພາບປະຊາກອນສ່ວນໃຫຍ່ຂອງໂລກຍັງຄົງຕ້ອງເຮັດວຽກໜັກຂ້າມຄ່ຳຄືນ ຢູ່ຫ່າງໄກຄອບຄົວແລະຍາດຕິພີ່ນ້ອງ ພຽງເພື່ອຈະແລກກັບເງິນເຊິ່ງກໍ່ບໍ່ສາມາດຊື້ຄວາມສຸກທີ່ແທ້ຈິງໄດ້ ມີແຕ່ຈະເຮັດໃຫ້ຫ່າງໄກຈາກການຊົງສ້າງຂອງພຣະເຈົາແລະຫ່າງຈາກຄົນອື່ນໆ ເຮົາຄົງບໍ່ຕ້ອງການເຫັນໂລກຊຶ່ງຫ້າງສັບພະສິນຄ້າຂະໜາດໃຫຍ່ແລະວັດຕຶດເປັນສິ່ງສາມັນອີກຕໍ່ໄປ ພຣະຄຳພີໄດ້ເວົ້າເຖິງ "ຊີວິດທີ່ດີ" ດ້ວຍມູມມອງທີ່ແຕກຕ່າງຈາກທີ່ບັນດານັກການເມືອງແລະໂຄສະນາທັງຫຼາຍພະຍາຍາມໃສ່ຄວາມຄິດໃຫ້ເຮົາ ໂຣມ 12:2 ເວົ້າວ່າ "ຢ່າຫຼອກລຽນແບບຢ່າງຄົນໃນຍຸກນີ້ ແຕ່ຈົ່ງຮັບການປ່ຽນແປງຈິດໃຈ ແລ້ວອຸປະນິໄສຂອງທ່ານຈຶ່ງຈະປ່ຽນແປງໃໝ່ ເພື່ອທ່ານຈະໄດ້ຮູ້ພຣະປະສົງຂອງພຣະເຈົາ ຈະໄດ້ຮູ້ວ່າອັນໃດດີ ອັນໃດເປັນທີ່ພໍພຣະໄທ ແລະອັນໃດທີ່ດີຍອດຍ້ຽມ" ແລະຕະຫຼອດພຣະຄຳເຫຼັ້ມນີ້ກໍ່ໄດ້ເວົ້າເຖິງຄວາມໝາຍຂອງຊີວິດທີ່ດີ ແລະມີຄຸນຄ່າທີ່ຄົນຂອງພຣະເຈົ້າສາມາດນຳມາປັບໃຊ້ໄດ້ຈິງໃນຊີວິດຂອງຕົນເອງກັບສະຖານະການປັດຈຸບັນ.

**ຄຳຖາມ**

1. ເຮົາຈະຕອບສະໜອງຕໍ່ບົດຮຽນສຳຄັນຈາກການແພ່ລະບາດໃຫຍ່ຢ່າງໃດແດ່?
2. ມີເລື່ອງຫຼືສິ່ງໃດແດ່ທີ່ເຮົາຄິດວ່າເປັນບັນຫາຫຼືນ່າທ້າທາຍ?
3. ເຮົາຈະລວມກັນໄດ້ຢ່າງໃດແດ່ໃນຖານະພຣະກາຍຂອງພຣະຄຣິດ ຈະເຮັດວຽກຮ່ວມກັບຄຣິດສະຕະຈັກອື່ນໆ ໄດ້ຢ່າງໃດ ເພື່ອການເຮັດຕາມພຣະປະສົງຂອງພຣະເຈົ້າໃນຊຸມຊົນຂອງເຮົາ ປະເທດຂອງເຮົາ ແລະໂລກຊຶ່ງພຣະອົງຊົງສ້າງນີ້?

**5.ຄວາມສັບສົນທຳລະມານດ້ານສິ່ງແວດລ້ອມ**

ກ່ອນຈະເຂົ້າສູ່ການພິຈາລະນາຄວາມງົດງາມຂອງນິມິດແລະສິ່ງທີ່ພຣະຄຳພີເວົ້າໄວ້ຊຶ່ງເປັນຫົວໃຈຫຼັກຂອງການຂຽນໜັງສືເຫຼັ້ມນີ້ ໃຫ້ເຮົາມາພິຈາລະນາອີກດ້ານໜຶ່ງຊຶ່ງເປັນອີກໜຶ່ງບໍ່ຍລິບົດສຳຄັນຂອງສະຖານະການໂລກ ຂະນະນີ້ໂລກທີ່ພວກເຮົາຕ່າງອາໄສຢູ່ກັບລະບົບນິເວດຊຶ່ງເຮົາໄດເພິ່ງພານີ້ກຳລັງປ່ຽນແປງໄປຢ່າງຫຼວງຫຼາຍ ແລະວ່ອງໄວຫຼາຍ ບັນຫາຫຼັກໆ ທີ່ເຮົາກຳລັງພົບຢູ່ (ຄວາມຍຸດຕິທຳທາງສັງຄົມ ຄວາມບໍ່ເທົ່າທຽມທາງເສດຖະກິດ ການອົບພະຍົບຍົກຍ້າຍຖິ່ນຖານ ລັດຊາດນິຍົມ ຄວາມສ່ຽງທີ່ຈະເກີດການລະບາດໃຫຍ່ອີກໃນອານາຄົດ) ເຫຼົ່ານີ້ລ້ວນມາຈາກຮາກເຫງົ້າຂອງບັນຫາການປ່ຽນແປງສະພາບແວດລ້ອມໂລກນີ້ເອງ.

ລອງພິຈາລະນາການເບິ່ງວ່າໂລກໃບນີ້ປຽບທຽບເໝືອນຍານອາວະກາດຂະໜາດໃຫຍ່ ມີປະຊາກອນມະນຸດໂລກແປດພັນກວ່າລ້ານຄົນອາໄສຢູ່ຮ່ວມກັບສິ່ງມີຊີວິດອີກນັບລ້ານຊະນິດ ມັນລ່ອງລອຍໄປໃນອາກາດ ແລະມີປັດໃຈທຸກຢ່າງພ້ອມສຳຫຼັບທຸກຊີວິດທີ່ຈະຢູ່ລອດແລະຈະເລີນງອກງາມ ໄດ້ແກ່ ອາກາດ ນໍ້າ ອາຫານ, ອຸນຫະພູມທີ່ເໝາະສົມ ມີພືດ, ແຮ່ທາດ ແລະອີກຢ່າງຫຼວງຫຼາຍຊຶ່ງພຣະເຈົ້າໄດ້ຊົງຍໍ້າກັບເຮົາໃນພຣະຄຳປະຖົມມະການ ບົດທີ່ 1 ວ່າ “ດີຫຼາຍ” ເຊິ່ງເປັນສະພາບທີ່ແສນພິເສດ! ເທົ່າທີ່ຮູ້ຍັງບໍ່ມີການຄົ້ນພົບວ່າມີດວງດາວອື່ນທີ່ມີສະພາບສົມບູນແບບ ລະອຽດອ່ອນ ມີຄວາມສົມດູນທັ້ງຄວາມຮ້ອນແລະຄວາມເຢັນ ມີພືດພັນເຮັດໜ້າທີ່ປ່ຽນຄາບອນໄດອອກໄຊເປັນກາດອອກນຊີເຈນ ມີການໝູນວຽນຂອງກະແສນໍ້າໃນມະຫາສະໝຸດ ມີຊັ້ນບັນຍາກາດ ແລະສິ່ງມີຊີວິດຫຼາຍຊະນິດ

ໃນປັດຈຸບັນນີ້ ດາວໂລກໜ່ວຍນີ້ກຳລັງພົບບັນຫາຢ່າງໃຫຍ່ ລະບົບຕ່າງໆ ທີ່ມີຄວາມລະອຽດອ່ອນຊັບຊ້ອນນີ້ກຳລັງຖືກທຳລາຍ ພື້ນທີ່ຢູ່ອາໄສຂອງມະນຸດກຳລັງຫຼຸດລົງເລື້ອຍໆ ໂດຍສະເພາະຢ່າງຍິ່ງສະພາບພື້ນທີເອື້ອໃຫ້ມີຄຸນນະພາບຊີວິດທີ່ດີ ໂລກໜ່ວຍນີ້ກຳລັງແບກຮັບແຮງກົດດັນຈາກການໃຊ້ຊັບສິນບັດຫຼວງຫຼາຍກວ່າທີ່ມັນຈະສາມາດໃຫ້ໄດ້ ຄົນຈຳນວນຫຼາຍພະຍາຍາມແບ່ງປັນອາຫານແລະນໍ້າທີ່ມີປະລິມານຈຳກັດ ອາກາດໃນຫຼາຍພື້ນທີ່ບໍ່ສະອາດພຽງພໍທີ່ຈະ

ຫາຍໃຈເຂົ້າໄປອີກຕໍ່ໄປຊຶ່ງນັ້ນປົກຄອງແລະຜູ້ມີອຳນາດກໍ່ເໜືອນຈະນຳພາຄົນໄປສູ່ພິນາດເນື່ອງຈາກບໍ່ສາມາດຈັດການກັບບັນຫາສິ່ງແວດລ້ອມໄດ້.

ສາເຫດທີ່ການແກ້ບັນຫານີ້ເປັນເລື່ອງທ້າທາຍຢ່າງຫຼວງຫຼາຍກໍ່ເພາະມີຫຼາຍປັດໃຈຮ່ວມກັນປະສົມປະສານກັນສ້າງບັນຫານີ້ຂຶ້ນມາ ອີກປະການໜຶ່ງ ຄືແຕ່ລະປະເທດພະຍາຍາມແກ້ບັນຫາຕາມວິທີຂອງຕົນເອງ ຊຶ່ງບັນຫາສິ່ງແວດລ້ອມນັ້ນເປັນບັນຫາລະດັບໂລກ ດັ່ງນັ້ນ ທຸກພາກສ່ວນໜ່ວຍໂລກຈະຕ້ອງຮ່ວມມືກັນ ໜັງສືເຫຼັ້ມນີ້ບໍ່ແມ່ນຕຳລາທາງວິທະຍາສາດ[4] ດັ່ງນັ້ນເຮົາຈະເຈາະເລິກລົງໄປຢ່າງລາຍລະອຽດວ່າດ້ວຍບັນຫາສິ່ງແວດລ້ອມທີ່ເຮົາຕ່າງກຳລັງປະເຊີນຢູ່ແຕ່ຈະພະຍາຍາມນຳສະເໜີພາບລວມຂອງບັນຫາຢ່າງຕົງໄປຕົງມາ ເພື່ອໃຫ້ເຫັນພາບຊັດເຈນວ່າເຮັດບໍ່ຈຶ່ງຕ້ອງເວົ້າເຖິງບັນຫານີ້.

- **ວິກິດສະພາບອາກາດໂລກ**: ນັບຕັ້ງແຕ່ມະນຸດຄົ້ນພົບຖ່ານຫີນ ນ້ຳມັນແລະກາສປິໂຕລຽມສິ່ງເຫຼົ່ານີ້ກາຍເປັນງານຂັບເຄື່ອນໂລກ ໂດຍນຳໄປໃຊ້ກັບເຄື່ອງຈັກທັ້ງຫຼາຍ ຂະນະດຽວກັນ ກາສເຮືອນແຫວນກໍ່ເພີ່ມປະລິມານເກີນໃນຊັ້ນບັນຍາກາດຂອງໂລກເຮົາຢ່າງວ່ອງໄວດ້ວຍ ຄວາມຈິງໂລກຖືກຫໍ່ຫຸ້ມດ້ວຍອາກາດຕ່າງໆ ເຊິ່ງເປັນປະໂຫຍດຕໍ່ການປັບສະພາບອຸນຫະພູມອາກາດໂລກໃຫ້ເໝາະສົມຕໍ່ສິ່ງມີຊີວິດໜ່ວຍໂລກ ຕັ້ງແຕ່ເກີດປະຕິວັດອຸດສາຫະກຳຂຶ້ນ ປະລິມານກາສຄາບອນອອກໄຊກໍ່ເພີ່ມຂຶ້ນສູງຢ່າງວ່ອງໄວ ໃນປີ 1960 ນັບແຕ່ພົບວ່າສູງເຖິງ 317 ppm ແລະຍັງຄົງເພີ່ມສູງຂຶ້ນເລື້ອຍໆ ຈົນເຖິງປັດຈຸບັນນີ້ ໂດຍບໍ່ມີແນວໂນ້ມວ່າຈະຫຼຸດລົງ....

  **1970=326 ppm**

  **1980=339 ppm**

  **1990=354 ppm**

  **2000=370 ppm**

  **2010=390 ppm**

  ໃນປີ2022 ປະລິມານກາສຄາບອນອອກໄຊສູງເຖິງ 420 ppm ນີ້ເປັນເລື່ອງທີ່ກ່ຽວຂ້ອງກັບຄວາມເປັນຄວາມຕາຍແລະຈະເປັນຕ້ອງໄດ້ຮັບການແກ້ໄຂ ເພາະມັນນຳໄປສູ່ການເພີ່ມຂຶ້ນຂອງອຸນຫະພູມຂອງຜິວໂລກ ນຳໄປສູ່ຄວາມບໍ່ຄົງທີ່ຂອງລະບົບຕ່າງໆທີ່ມີໜ້າທີ່ຄ້ຳຈູນໂລກໃຫ້ເໝາະສົມຕໍ່ການດຳລົງຊີວິດ ຜົນກະທົບບາງຢ່າງທີ່ຕາມມາໄດ້ແກ່:

  - **ພະຍຸໄຊໂຄຣນ ເຮີຣິເຄນແລະພະຍຸອື່ນໆ ທີ່ທະວີຄວາມຮຸນແຮງແລະສ້າງຄວາມເສຍຫາຍຫຼາຍກວ່າເດີມ**: ໃນຂະນະທີ່ອຸນຫະພູມພື້ນຜິວຂອງມະຫາສະໝຸດສູງຂຶ້ນ ຄວາມຮ້ອນຈຶ່ງເປັນສາເຫດທີ່ນຳໄປສູ່ລະດັບຄວາມຮຸນແຮງຂອງລົມພະຍຸ ເຮັດໃຫ້ເກີດຝົນຕົກໜັກ ຊື່ງສູງຕໍ່

[4] ໜັງສື *A Christian Guide to Environmental Issues* ຂຽນໂດຍ Martin & Margot Hodson (BRF, 2021) ເນື້ອຫາເວົ້າເຖິງທັງວິທະຍາສາດແລະຫຼັກຂໍ້ເຊື່ອ; ໜັງສື *Saving Us* ຂຽນໂດຍ Katharine Hayhoe (One Signal, 2021) ເນັ້ນນຳສະເໜີປະເດັນກ່ຽວກັບການປ່ຽນແປງສະພາບອາກາດໂລກແລະຄວນຈະຮັບມືຢ່າງໃດ

ການເກີດນໍ້າຖ້ວມ ປະຊາກອນໂລກກວ່າເຄິ່ງອາໄສຢູ່ບໍລິເວນແຄມຝັ່ງຫຼືໃກ້ຕາຝັ່ງ ຈຶ່ງໄດ້ຮັບຜົນກະທົບໂດຍກົງ.

- **ເກີດສະພາບໄພແຫ້ງແລ້ງແລະນໍ້າຖ້ວມຫຼາຍຂຶ້ນກວ່າປົກກະຕິ**: ລະດູເກີດການປ່ຽນແປງແລະລັກສະນະຝົນຕົກບໍ່ເປັນປົກກະຕິ ຫຼາຍພື້ນທີ່ເກີດສະພາບແຫ້ງແລ້ງໃນຊ່ວງໜ້າຝົນກະທົບການປູກຂອງຊາວກະສິກໍາ ໃນຂະນະທີ່ບາງບ່ອນເກີດຝົນຕົກໜັກກະທັນຫັນ ນໍາໄປສູ່ສະພາບໄພພິບັດ ສ້າງຄວາມເສຍຫາຍຕໍ່ຜົນຜະລິດທາງການກະສິກໍາຢ່າງບໍ່ຫຼີກເວັ້ນໄດ້ ຫຼາຍບ່ອນທີ່ເຄີຍເປັນບ່ອນທີ່ເຮັດການປູກຝັງທີ່ອຸດົມສົມບູນກໍ່ກາຍສະພາບເປັນທະເລຊາຍ ໃນຂະນະທີຫຼາຍບ່ອນໜ້າດິນຖືກທໍາລາຍໂດຍ ນໍ້າຖ້ວມແລະນໍ້າສຸໄປ.
- **ໄຟປ່າ**: ແມ່ນແຕ່ໄຟປ່າຈະເປັນວິທີການປົກກະຕິທີ່ທໍາມະຊາດຈະຊ່ວຍໃຫ້ເກີດພືອພັນໃໝ່ງຂຶ້ນໃນປ່າ ແຕ່ປັດຈຸບັນນີ້ເກີດພາວະແຫ້ງແລ້ງຕໍ່ເນື່ອງແລະຍາວນານ ລວມເຖິງອຸນຫະພູມທີ່ສູງຂຶ້ນ ກັບຄວາມບໍ່ສົນໃຈຂອງປະຊາຊົນ ນໍາໄປສູ່ໄຟປ່າທີ່ມີຄວາມຖີ່ແລະຮຸນແຮງຫຼາຍຂຶ້ນທຸກໆປີ ໄຟປ່າສ້າງຄວາມເສຍຫາຍຫຼາຍປະເທດ ບາງບ່ອນເຖິງກັບທໍາລາຍທັ້ງເມືອງ ບ່ອນປູກຝັງແລະບ່ອນລ້ຽງສັດໄດ້ຮັບຄວາມເສຍຫາຍສ້າງຄວາມສ່ຽງຕໍ່ຊີວິດແລະຊັບສິນຂອງຄົນຈໍານວນຫຼາຍ ລວມເຖິງສັດປ່າແລະແນວປູກທັ້ງຫຼາຍ.
- **ຄວາມປ່ຽນແປງຕ່າງໆ ໃນທະເລແລະມະຫາສະໝຸດ** : ເມື່ອນໍ້າໃນມະຫາສະໝຸດດູດຊັບຄາບອນໄດອອກໄຊຫຼາຍຂຶ້ນ ກໍ່ເຮັດໃຫ້ມີຄວາມເປັນກົດຫຼາຍຂຶ້ນ ສິ່ງຜົນກະທົບຕໍ່ແນວປາກະຮັງເຊິ່ງເປັນທີ່ຢູ່ອາໄສແລະວາງໄຂ່ຂອງສັດນໍ້າຫຼາຍຊະນິດ ສະພາວະກົດເຮັດໃຫ້ປະກາຮັງຕາຍຫຼືທີ່ເອີ້ນວ່າຟອກຂາວທີ່ແຍກວ່ານັ້ນ ຄືເມື່ອອຸ່ນຫາພູມສູງຂຶ້ນ ນໍ້າເກີດການຂະຫຍາຍຕົວ ເຮັດໃຫ້ລະດັບນໍ້າທະເລຄ່ອຍໆ ສູງຂຶ້ນສ່ຽງແລະສາມາດສ້າງຄວາມເສຍຫາແກ່ຊຸມຊົນແຄມຝັ່ງແລະເກາະຕ່າງໆ.
- **ຄວາມສ່ຽງດ້ານຜະລິດແລະອາຫານ**: ຜົນກະທົບອີກດ້ານຂອງວິກິດສະພາບອາກາດໂລກຄືການປ່ຽນແປງດ້ານຜົນຜະລິດທາງການກະສິກໍາ ການປະມົງ ແລະອາຫານ ຝົນບໍ່ຕົກຕ້ອງຕາມລະດູການ(ຝົນຕົກຫຼາຍຫຼືນ້ອຍເກີນໄປ) ການຊະລ້າງພັງທະລາຍຂອງດິນ ການລະບາດພະຍາດແລະແມງໄມ້ (ຕັກແຕນ ໜູ ແມງ) ມົນລະພິດທາງເຄມີ (ໃນນໍ້າແລະດິນ) ແລະອຸ່ນຫະພູມໂລກທີ່ສູງຂຶ້ນ(ນໍາໄປສູ່ຄວາມແຫ້ແລ້ງແລະກາຍເປັນທະເລຊາຍ) ເຫຼົ່ານີ້ລ້ວນເປັນ"ອາການ" ທີ່ບົ່ງບອກເຖິ່ງຄວາມເຈັບປ່ວຍຂອງໂລກທີ່ເຮົາອາໄສຢູ່ ຄົນໃນຍຸກກ່ອນຕ່າງຮູ້ແນ່ໃຈຊັດວ່າຈະເລີ່ມລະດູປູກແລະເກັບກຽ່ວເມື່ອໃດ ແຕ່ປັນຈຸບັນນີ້ແທບຈະຄາດເດົາບໍ່ໄດ້ອີກຕໍ່ໄປແລ້ວ.
- **ຊັ້ນນໍ້າແຂງແລະຍອດນໍ້າແຂງຂົ້ວໂລກລະລາຍ**: ເມື່ອອຸ່ນຫະພູມໂລກສູງຂຶ້ນ ນໍ້າຊື່ງຢູ່ໃນຮູບຂອງແຂງໃນຊັ້ນນໍາແຂງແລະຢູ່ຂົວໂລກເກີດການລະລາຍ ຄົນຈໍານວນຫຼາຍເທິງພູສູງຢ່າງພູຫິມະໄລຫຼືພູແອນດີຕ່າງເພິ່ງພານໍ້າດື່ມຈາກແມ່ນໍ້າຊຶ່ງມາຈາກຊັ້ນນໍາແຂງ ເມື່ອຊັ້ນນໍາແຂງຫາຍໄປກໍ່ເກີດຜົນການະທົບຕໍ່ຄົນເຫຼົ່ານີ້ ເພາະປະສົບການສະພາບຂາດແຄ້ນນໍ້າເພື່ອການອຸປະໂພກ

ບໍລິໂພກ ສຸ່ມສ່ຽງທີ່ຈະເກີດຄວາມຂັດແຍ້ງລະຫວ່າງປະເທດ ເພາະຍາດແຍ່ງນໍ້າມາແມ່ນໍ້າຫຼື ທະເລສາບທີ່ຕ້ອງໃຊ້ ລວມກັນ ນອກຈາກນັ້ນ ພົບວ່າບໍລິເວນຂົ້ວໂລກເໜືອແລະໃຕ້ນັ້ນອຸ່ນຫະ ພູມເພີ່ມສູງຂຶ້ນໄວກວ່າພູມສາດອື່ນຢູ່ເທິງໂລກ ເຮັດໃຫ້ນໍ້າແຂງປະລິມານມາຫາສານຈາກແອນ ດາຕິກາແລະກຣີນແລນລະລາຍ ເປັນປັດໄຈເສີມໃຫ້ລະດັບນໍ້າທະເລສູງຂຶ້ນ ລວມທັງເຮັດໃຫ້ອົງ ປະກອບທາງເຄມີໃນມະຫາສະໝຸດການສູນເສຍຍອດດ້ວຍ.

- **ຈຸດປ່ຽນ**: ເມື່ອລະບົບຕ່າງໆ ຕ້ອງແບກຮັບສະພາບເກີນກວ່າຈະທົນທານໄດ້ ກໍ່ຈະທໍາລາຍລົງ ສ້າງຫາຍະນະປະເມີນຄ່າບໍ່ໄດ້ຂຶ້ນ ເໝືອນກະດານໂດມິໂນ ເມື່ອສິ່ງໜຶ່ງເປເພລົງ ກໍ່ຈະລົ້ມທັບສິ່ງ ທີ່ກ່ຽວຂ້ອງຈົນໃນທີ່ສຸດລົ້ມທັງກະດານ ມີຫຼາຍຕົວຢ່າງທີ່ເປັນຂໍ້ບົ່ງບອກທີ່ຊັດເຈນວ່າການປ່ຽນ ແປງສະພາບອາກາດໂລກນັ້ນວິກິດເກີນວ່າຈະຄວບຄຸມໄດ້ອີກຕໍ່ໄປແລ້ວ ເຊັ່ນ ໃນບໍລິເວນຂົ້ວ ໂລກເມື່ອອຸນຫະພູມສູງຂຶ້ນ ກາສມີເທນຈະລະເຫີຍອອກຈາກດິນຂຶ້ນສູ່ຊັ້ນບັນຍາກາດ ເປັນກາສ ເຮືອນແຫວນທີ່ຮຸນແຮງກວ່າກາສຄາບອນອອກໄຊ ເພາະໄປເລັ່ງຂະບວນການເພີ່ມຂຶ້ນຂອງ ອຸນຫະພູມໂລກໄດ້ຫຼາຍກວ່າ ໃນຂະນະດຽວກັນ ປົກກະຕິນໍ້າແຂງເປັນສິ່ງທີ່ສະທ້ອນຄວາມຮ້ອນ ຈາກດວງຕາເວັນກັບຄືນສູ່ບັນຍາກາດ ເມື່ອນໍ້າແຂງລະລາຍຫຼາຍຂຶ້ນ ຄວາມຮ້ອນແສງຕາ ເວັນກໍ່ຈະຖືກດູດຊຶມ ໂດຍມະຫາສະໝຸດເພີ່ມໃຫ້ອຸ່ນຫະພູມສູງຂຶ້ນ ທັງຍັງສົ່ງຜົນຕໍ່ການໄຫຼ ວຽນວຽນຂອງກະແສນໍ້າໃນມະຫາສະໝຸດ ແລະສົ່ງຜົນກະທົບເຮັດໃຫ້ລະດູການແລະຊ່ວງເວລາທີ່ ຜົນຕົກຂອງໂລກປ່ຽນແປງ.

ພຣະຄໍາໂຮເຊຢາບົດທີ່ 4 ເວົ້າເຖິງຄວາມບາບແລະການບໍ່ສັດຊື່ຕໍ່ພຣະເຈົ້າຂອງມະນຸດ ໂດຍສະເພາະຢ່າງຍິ່ງຂໍ້ທີ່ 3 ໄດ້ຍໍ້າວ່າ "ເພາະສະນັ້ນ ແຜ່ນດິນຈຶ່ງໂສກເສົ້າ ບັນດາຄົນທີ່ຢູ່ໃນ ແຜ່ນດິນນັ້ນກໍ່ອ່ອນໃຈ ທັງສັດໃນປາແລະນົກບິນເທິງຟ້າ ແມ້ແຕ່ປາໃນທະເລກໍ່ຈະສູນເສຍໄປ"

**ຄໍາຖາມ**:

1. ພື້ນທີ່ຫຼືປະເທດຂອງເຮົາໄດ້ຮັບຜົນກະທົບຫຼືບໍ່ຢ່າງໃດຈາກການປ່ຽນແປງສະພາບອາກາດ ຂອງໂລກ?
2. ຄົນຮອບຕົວເຮົາຄິດວ່າເກີດການປ່ຽນແປງສະພາບອາກາດທົ່ວໂລກຫຼືບໍ່ ເບິ່ງຄໍາວ່າເປັນ ການປ່ຽນແປງສະພາບອາກາດໃນລະດັບທ້ອງຖິ່ນ?
3. ເປັນຫຍັງການໃຊ້ເຊື້ອໄຟຈາກພະລັງຟອສຊິນ(ປີໂຕລຽມແລະຖ່ານຫີນ) ຈຶ່ງເລັ່ງໃຫ້ເກີດ ການປ່ຽນແປງສະພາບອາກາດຂອງໂລກ?
4. ເຮົາແລະຜູ້ຄົນອ້ອມຮອບຕົວຮູ້ສຶກຫຼືມີຄວາມເຫັນແນວໃດແດ່ ຕໍ່ຄວາມຍຸດຕິທໍາທີ່ເກີດ ຂຶ້ນ ທັງໆທີ່ປະເທດລໍາລວຍທັງຫຼາຍຄືຕົ້ນຕໍ່ຫຼັກໃນການສ້າງມົນລະພິດ ແຕ່ປະເທດທຸກ ຍາກຕ່າງຕ້ອງຮັບຜົນກະທົບຈາກວິກິດສະພາວະອາກາດຂອງໂລກນີ້?

- **ວິກິດດ້ານຄວາມຫຼາກຫຼາຍທາງຊີວະພາບ**: ແມ້ຫາກວ່າການປ່ຽນແປງສະພາບອາກາດໂລກຈະເປັນບັນຫາສິ່ງແວດລ້ອມພຽງຢ່າງດຽວ ມັນກໍ່ຍາກແລະຊັບຊ້ອນຫຼາຍພໍ່ຢູ່ແລ້ວທີ່ເຮົາຈະຮັບມືແລະພະຍາຍາມແກ້ໄຂ ແຕ່ໃນຄວາມເປັນຈິງແລ້ວ ຍັງມີບັນຫາສິ່ງແວດລ້ອມອື່ນໆ ອີກຫຼາຍຢ່າງທີ່ເຮົາຕ້ອງຈັດການ ແຕ່ທີ່ປັດຈຸບັນນີ້ໄດ້ຮັບຄວາມສົນໃຈແລະເວົ້າເຖິງໃນວົງກວ້າງກໍ່ເພາະເກີດໄພພິບັດຮ້າຍແຮງຂຶ້ນຫຼວງຫຼາຍ ເປັນປັດໄຈທີ່ນຳໄປສູ່ຄວາມສ່ຽງໃນຫຼາຍດ້ານ ແລະເປັນປັດໄຈຂະຫຍາຍເຮັດໃຫ້ບັນຫາຕ່າງໆ ທີ່ມີຢູ່ແລ້ວເຫຼົ່ານັ້ນເພີ່ມທະວີຄວາມຮູນແຮງຫຼາຍຂຶ້ນໄປອີກ ຢ່າງໃດກໍ່ຕາມ ຜູ້ຊ່ຽວຊານຫຼາຍຄົນເຊື່ອວ່າການຫຼຸດຈຳນວນແລະຊະນິດຂອງສັດປ່າທົ່ວໂລກນັ້ນກັບເປັນຄວາມສ່ຽງຫຼາຍກວ່າການປ່ຽນແປງສະພາບອາກາດຂອງໂລກດ້ວຍຊ້ຳ ຂໍ້ຄວາມຈິງກ່ຽວກັບເລື່ອງນີ້ເຮັດໃຫ້ເປັນຕາຢ້ານແລະເກີດຄວາມບໍ່ສະບາຍໃຈເປັນຢ່າງຍິ່ງ ຕັ້ງແຕ່ແ ີ 1970 ຈົນເຖິງປັດຈຸບັນນີ້ ພົບວ່າປະຊາກອນຂອງສັດປ່າເທິງໂລກໄດ້ຫຼຸດປະລິມານເຖິງ 70% ເປັນການລຸດລົງທີ່ໄວກວ່າ ຊະນິດທີ່ຫຼາຍຊະນິດສ່ຽງຕໍ່ການສູນພັນ ຊຶ່ງລວມເຖິງສັດປ່າຢ່າງເສືອ ໝີຂົ້ວໂລກ ອູຣັງອູຕັງ ແລະແຮດ ສັດອີກຫຼາຍກຳລັງພົບກັບຊະຕາກຳດຽວກັນນີ້.

ການສູນເສຍຄວາມຫຼາກຫຼາຍທາງຊີວະພາບຢ່າງໃຫຍ່ຫຼວງເກີດຂຶ້ນໃນທຸກທະວີບທົ່ວໂລກ ສາເຫດຫຼັກຢ່າງໜຶ່ງຄືລະບົບກະສິກຳອັນດຽວທີ່ເຂັ້ມຂົ້ນ ມາການໃຊ້ຢາປາບແມງໄມ້ແລະສັດຕູພືດ ເຮັດໃຫ້ບໍ່ມີຫຍັງຫຼາອກງາມຫຼືລອດຊີວິດໄດ້ນອກຈາກພືດທີ່ປູກພຽງຊະນິດດຽວແນ່ນອນມັນສ້າງລາຍໄດ້ຫຼວງຫຼາຍແລະວ່ອງໄວ ແຕ່ກັບທຳລາຍທັ້ງສຸຂະພາບແລະລະບົບນິເວດເຮັດໃຫ້ດິນເຊື່ອມສະພາບໃນໄລຍະຍາວ ແມງໄມ້ຕ່າງໆຫາຍໄປ ນົກແລະສັດຕ່າງໆ ທີ່ປົກກະຕິແລ້ວຊ່ວຍຄວບຄຸມຂອງພວກແມງໄມ້ຕາມທຳມະຊາດຫຼືແມງໄມ້ທີ່ຊ່ວຍປະສົມເກສອນກໍ່ໄດ້ຮັບຜົນກະທົບຕາມມາເປັນລູກຕ່ອງໂສ່ ມັກຈະເກີດການລ້າງຜ່ານພັງທະລາຍຂອງດິນ ແລະທ້າຍທີ່ສຸດເກີດຄວາມແຫ້ງແລ້ງຂຶ້ນບໍ່ສະເພາະພື້ນດິນເທົ່ານັ້ນ ແຕ່ໃນທະເລແລະມະຫາສະໝຸດກໍ່ເກີດບັນຫາດ້ານການສູນເສຍຄວາມຫຼາກຫຼາຍທາງຂີ່ເຫຼືອຖິ້ງຢາງຈາກການຫາປາຫຼາຍເກີນໄປປະລິມານສັດທະເລລຸດລົງຢ່າງຕໍ່ເນື່ອງ ປັດໄຈເພີ່ມສູ່ວິກິດຄືຖິ້ງຂີ້ເຫຍື້ອ ໂດຍສະເພາະຂະໜາດນ້ອຍທີ່ເອີ້ນວ່າຖິ້ງຢາງໄມໂຄຣທີກະຈາຍທົ່ວມະຫາສະໝຸດ ແມ້ກະທັ້ງບໍລິເວນທີ່ຢູ່ເລິກຫຼາຍກໍ່ຕາມ ການປ່ຽນແປງສະພາບອາກາດໂລກເຮັດໃຫ້ນ້ຳທະເລມີຄວາມເປັນກົດຫຼາຍຂຶ້ນ ແນວປາກາຣັງຖືກພອກຂາວແລະຕາຍລົງ ໃນຂະນະທີ່ເທິງພື້ນແຜ່ນດິນມາການທຳລາຍປ່າໃນວົງກວ້າງເປີດພື້ນທີ່ໃຫ້ລວງເຕືອນເພື່ອອຸດສາຫະກຳຜະລິດຊີ້ນສັດ ປູກປ່ານ້ຳມັນແລະຖົ່ວເຫຼືອງ ແລະການເຮັດເໝືອງປະເພດຕ່າງໆ ສິ່ງເຫຼົ່ານີ້ທຳລາຍແຫ່ງທີ່ຢູ່ຂອງສິ່ງມີຊີວິດຫຼວງຫຼາຍ ຈົນເຮັດໃຫ້ຄວາມຫຼາກຫຼາຍທາງຊີວະພາບເລື່ອຍໆ ແລະໃນທີ່ສຸດກໍ່ຍ້ອນກັບມາສົ່ງຜົນກະທົບຕໍ່ສະພາບອາກາດໂລກເນື່ອງຈາກບໍ່ມີພຽງພໍທີ່ຈະດູດຊຶມກາສຄາບອນອອກໄຊນັ້ນເອງ.

**ຄໍາຖາມ**:

1. ໃນປະຖົມມະການບົດທີ່1 ພຣະເຈົ້າຊົງຫຼຽວເບິ່ງສິ່ງທີ່ພຣະອົງຊົງສ້າງດ້ວຍຄວາມຮັກແລະຊົງກ່າວວ່າຍ້ຳເຕືອນໄປມາ "ງົດງາມແລະເຫັນວ່າດີຫຼາຍ" ປັດຈຸບັນນີ້ຄຸນຄາມີສິ່ງມີຊີວິດຊະນິດໃດແດ່ທີ່ກຳລັງລຸດຈຳນວນລົງຫຼືໄດ້ສູນພັນໄປແລ້ວແດ່?
2. ທ່ານຮູ້ສຶກແນວໃດແດ່ຕໍ່ສິ່ງທີ່ເກີດຂຶ້ນນີ້?
3. ທ່ານຄິດວ່າພຣະເຈົ້າຊົງຮູ້ສຶກຢ່າງໃດກັບສິ່ງທີ່ເກີດຂຶ້ນ?

4.ສ່ວນຕົວແລ້ວ ທ່ານເອງເບິ່ງວ່າຕົນເອງເປັນສ່ວນໜຶ່ງຂອງທຳມະຊາດ ຫຼືແຍກອອກຕ່າງຫາກຈາກທຳມະຊາດ?

ການລຸດລົງຂອງປະຊາກອນສັດປ່ານັ້ນເປັນສິ່ງທີ່ຈຳເປັນຕ້ອງໄດ້ເວົ້າເຖິງແລະຮັບການແກ້ໄຂ ເພາະເຫດຜົນຫຼາຍປະການ ໜຶ່ງຄືລະບົບອາຫານຂອງເຮົາມັກຕ້ອງເພິ່ງພາແມງໄມ້ ຊຶ່ງເຮັດໜ້າທີ່ປະສົມເກສອນແລະສັດທີ່ຄວບຄຸມປະຊາກອນສັດຕູພືດ ເມື່ອສັດທີ່ເຮັດໜ້າປະສົມເກສອນ ຊຶ່ງໄດ້ແກ່ພວກແມງໄມ້ ຫຼືໂຕເຈຍແລະນົກຕ່າງໆ ລຸດຈຳນວນລົງກໍ່ສົ່ງຜົນສະທ້ອນຕໍ່ພືດຜັກທີ່ຄົນເອົາໄປປູກຄືກັນ ໃນລະບົບນິເວດນັ້ນ ສິ່ງມີຊີວິດທຸກຊະນິດລ້ວນມີຄວາມກຽ່ວຂ້ອງກັນຢ່າງໃກ້ຊິດ ຖ້າຊະນິດໜຶ່ງຫາຍໄປ ທັ້ງລະບົບກະທົບຄືກັນ ປຽບທຽບແບບງ່າຍໆ ກັບຜ້າຜືນໜຶ່ງທີ່ດ້ານເສັ້ນໜຶ່ງເລີ່ມຫຼວມຫຼຸດ ຖ້າດຶ່ງມັນໃຫ້ຫຼຸ່ຍລຸດໄປເລື່ອຍໆ ໃນທີ່ສຸດຜ້າທັ້ງຜືນໃຫ້ມັນລຸ່ຍຫຼຸດໄປເລື່ອຍໆ ໃນທີ່ສຸດຜ້າທັງຜືນນັ້ນດໍ່ຈະຂາດໄປເໝືນກັນ ຄວາມຫຼາກຫຼາຍທາງຊີວະພາບ (ຊະນິດຂອງສິ່ງທີ່ມີຊີວິດທີ່ມີຄວາມຫຼາກຫຼາຍ) ນັ້ນປຽບເໝືອນແຫຼ່ງສ້າງອາຫານ,ຢາ, ອາກາດທີ່ສະອາດ, ໃຫ້ທີພັກອາໄສ, ເປັນວັດຖຸດິບສຳຫຼັບເຮັດເຄື່ອງນຸ່ງຫົ່ມແລະເຮືອນ ເປັນຕົວຄວບຄຸມສັດຕູພືດ ຊ່ວຍປັບສະພາບອາກາດໃຫ້ປົກກະຕິ ຊ່ວຍເພີ່ມຄວາມອຸດົມສົມບູນແກ່ດິນ ປ້ອງກັນການຊັກລ້າງທຳລາຍຂອງດິນ ປ້ອງກັນນ້ຳຖ້ວມແລະອື່ນໆ ອີກຫຼາຍຢ່າງ

ບາງທີ່ຄົນບາງຄົນກໍ່ບອກວ່າການໃຫ້ຄວາມຫ່ວງໃຍໃສ່ໃຈກັບສັດປ່ານັ້ນເປັນສິດທີ່ພິເສດທີ່ຄົນລວຍເທົ່ານັ້ນສາມາດເຮັດໄດ້ ເພາະຄົນທຸກຍາກນັ້ນແມ້ແຕ່ປະທັງຊີວິດດ້ວຍອາຫານມື້ຕໍ່ໄປກໍ່ນັບວ່າຫີນທຸກລຳບາກແລ້ວ ແຕ່ ດຣ.ສະເຕລາ ຊີມິຢູ ເຊິ່ງເປັນນັກພືດສາດແລະເປັນຄຣິສຕຽນຊາວເຄນຢາກັບມາເບິ່ງເລື່ອງນີ້ດ້ວຍທ່າທີແລະມູມມອງທີ່ແຕກຕ່າງອອກໄປ.

"ຄົນທຸກຍາກທີ່ອາໄສຢູ່ໃນຊົນນະບົດເພິ່ງພາຊັບພະຍາກອນທຳມະຊາດໃນຊີວິດປະຈຳວັນຂອງຕົນເອງ ທຳມະຊາດຮອບຕົວເປັນແຫ່ງຮັກສາພະຍາດ ຢູ່ຮ້ານຊັບພະສິນຄ້າໃຫຍ່ສຳຫຼັບ

ອາຫານ ແຫຼ່ງພະລັງງານແລະແຫຼ່ງນ້ຳ ຖ້າເປັນແບບນີ້ຈະເກີດຫຍັງຂຶ້ນ ຖ້າສິ່ງເຫຼົ່ານີ້ສູນເສຍໄປຈາກສະພາບແວດລ້ອມທີ່ພວກເຂົາອາໄສຢູ່ ດັ່ງນັ້ນ ເຮົາຈຶ່ງຈຳເປັນຢ່າງຍິ່ງທີ່ຈະໃສ່ໃຈແລະທຸ້ມເທໃນການອານຸລັກສິ່ງແວດລ້ອມ"

ສິ່ງທີ່ ດຣ. ຊີມິຢູ ຕ້ອງການອະທິບາຍນັ້ນ ກໍຄືບັນດາຄົນທຸກຈົນເຫຼົ່ານັ້ນແຫຼະທີ່ໄດ້ຮັບຄວາມທຸກຍາກລຳບາກເປັນກຸ່ມທຳອິດແລະຢ່າງໜັກໜ່ວງກວ່າທຸກກຸ່ມເມື່ອຄວາມຫຼາກຫຼາຍທາງກາຍຍະພາບຖືກທຳລາຍລົງ ເພາະຄົນທີ່ມີຖານະມີທາງເລືອກທີ່ຈະຫາຊື້ເຂົ້າຂອງຈຳເປັນຫຼືສາມາດໂຍກຍ້າຍຖິ່ນຖານບ້ານເກີດໄດ້ຫາກເກີດໄພພິບັດຂຶ້ນ ໃນຂະນະທີ່ຄົນຍາກຈົນໄດ້ຮັບຜົນກະທົບ ໂດຍກົງເມື່ອຝົນບໍ່ຕົກລົງຕາມລະດູແລະພືດຜົນຜະລິດເສຍຫາຍ ຫຼືເມື່ອແຫຼ່ງນ້ຳປົນເປື້ອນແລະປາຕາຍ ເມື່ອຕົ້ນໄມ້ຖືກຕັດລົງທຳລາຍແລະເກີດດິນຖະລົ່ມໃນຊຸມຊົນຄົນທຸກຍາກ ຄວາມອຶດຫິວຂັດສົນຈະບີບບັງຄັບໃຫ້ໃນທີ່ສຸດພວກເຂົາຕ້ອງຕັດຕົ້ນໄມ້ແລະລ່າສັດປ່າເພື່ອປະທັງຊີວິດແລະລ້ຽງຄອບຄົວ ທັ້ງທີ່ຮູ້ວ່າເປັນການທຳລາຍແຫຼ່ງພະລັງງານແລະອາຫານຂອງອະນາຄົດ ຍົກເວັ້ນວ່າມີການປູກພືດທົດແທນທີ່ຕັດໄປແລະມີການຈັດການເພື່ອໃຫ້ແນ່ໃຈວ່າປະຊາກອນສັດປ່າຈະບໍ່ຫຼຸດຈຳນວນລົງ.

ຈາໂຄເບດ ໂຊລາໂນ ນັກສາດສະໜາສາດແລະເປັນຄົນພື້ນເມືອງເຜົ່າກູນາດູເລໃນປະເທດປານາມາ ກ່າວວ່າ "ເມື່ອເຮົາຄິດຮອດບົດບາດຂອງຄຣິສຕະຈັກໃນພື້ນທີ່ຂອງຊາວກູນາດູເລ ກໍມັກເຫັນພາບວ່າຄຣິສຕະຈັກມີຄວາມເຊື່ອມໂຍງຢ່າງໃກ້ຊິດກັບຊຸມຊົນ ເໝືອນໜຶ່ງວ່າຄຣິສຕະຈັກ ຄືສ່ວນໜຶ່ງຂອງຊຸມຊົນແລະເຮົາຈະຮ່ວມກັນຄິດຮ່ວມກັນຈັດການກັບສິ່ງຕ່າງໆທີ່ເກີດຂຶ້ນດ້ວຍກັນ ເຮົາຈະອະທິຖານຂໍໃຫ້ພຣະເຈົ້າຊົງຊ່ວຍຄົນຫນຸ່ມໃໝ່ຊາວກູນາເບິ່ງແຍງໃຫ້ຍັງຈະຮັກສາ ວິທີແຫ່ງຄວາມຫ່ວງໃຍໃສ່ໃຈຕໍ່ແມ່ທຳລະນີດັ່ງເຊັ່ນບັນພະບູລຸດໄດ້ປະຕິບັດ ເພາະເຮົາກໍາເນີດເກີດມາຈາກດິນ ເຮົາດຳລົງຊີວິດເທິ່ງແຜ່ນດິນໂລກນີ້ ແລະເມື່ອເຮົາຕາຍເຮົາກໍ່ກັບໄປສູ່ແມ່ທຳລະນີ ຂໍໃຫ້ຄົນຫນຸ່ມຫຼັງຊາວກູນາເລ ເບິ່ງແຍງເອົາໃຈໃສ່ແຜ່ນດິນຕໍ່ໄປ ໃຊ້ຊີວິດດ້ວຍຄວາມຮັກທີ່ມີຕໍ່ຍ່າທວດກົ້ນທະເລ ແມ່ທໍທະນີ ຄິດຮອດສະເໝີວ່າຕົນເອງເປັນລູກຫຼານທີ່ຮູ້ສຳນຶກບຸນຄຸນເຖິງສິ່ງທີ່ພຣະເຈົ້າຊົງປະທານໃຫ້ພວກເຮົາຜ່ານທາງທຳມະຊາດ"[5]

---

[5] ຄຣິສຕຽນບາງສ່ວນເອົາຈະຮູ້ສຶກບໍ່ເຫັນພ້ອງກັບຄຳ "ແມ່ທໍລະນີ"ຫຼາຍເທົ່າໃດ ແຕ່ຈາໂຄເບດ ໂຊລາໂນ ລວມເຖິງຊົນເຜົ່າຫຼາຍທົ່ວໂລກກັບໃຊ້ຄຳນີ້ພ້ອງເພື່ອບອກວ່າວັດທະນາທຳດັ່ງເດີມນັ້ນເວົ້າການຊົງສ້າງຂອງພຣະເຈົ້າ ແມ້ແຕ່ໃນແວດວົງຄຣິສຕຽນກໍ່ມີການໃຊ້ຄຳທີ່ປະກາດເຖິງສິ່ງທີ່ພຣະເຈົ້າຊົງສ້າງ ເຊັ່ນ ຟານຊິດແຫ່ງອັດຊີຊີໃຊ້ຄຳວ່າອ້າຍສຸຣິຍັນ ນ້ອງສາວຈັນທາ ແມ່ທໍລະນີ ພຣະຄຳພີກໍ່ໃຊ້ຄວາມສຳພັນເຊີງພາສາເມື່ອເວົ້າເຖິງໂລກໃບນີ້ດ້ວຍ ເຊັ່ນການຊົງສ້າງໂສກເສົ້າ ແຜ່ນດິນໂສກເສົ້າ ຕົ້ນໄມ້ຊື່ນຊົມຍິນດີ ຊຶ່ງພາສາລັກສະນະນີ້ບໍ່ໄດ້ໝາຍຄວາມວ່າແຜ່ນດິນຫຼືໜ່ວຍໂລກເປັນບຸກຄົນທີ່ມີຊີວິດ ແຕ່ເປັນການສະແດງໃຫ້ເຫັນວ່າພຣະເຈົ້າຊົງສ້າງເຮົາໃຫ້ມີຄວາມສຳພັນໃກ້ຊິດກັບທຳມະຊາດນັ້ນເອງ.

**ຄຳຖາມ**:

- ເຮົາຈຳເປັນຕ້ອງເລືອກທີ່ ຈະໃສ່ໃຈຊ່ວຍເຫຼືອສະເພາະຄົນທຸກຍາກຫຼື ສະເພາະສັດປ່າຢ່າງໃດຢ່າງໜຶ່ງເທົ່ານັ້ນບໍ່?
- ກົດແຫ່ງທຳມະຊາດແລະຊີວິດຂອງຊົນເຜົ່າພື້ນເມືອງດັ່ງເດີມນັ້ນມີຄວາມຄ້າຍຄືກັນແນວໃດແດ່ກ່ຽວກັບຄວາມສຳພັນລະຫວ່າງມະນຸດກັບທຳມະຊາດ?
- ທ່ານຄິດວ່າໂລກສະໄໝໃໝ່ ໂດຍສະເພາະຢ່າງຍິ່ງວິທີແບບທາງຕາເວັນຕົກ ເຮັດໃຫ້ມະນຸດແຍກຕົວເອງອອກຈາກທຳມະຊາດ ນຳໄປສູ່ການທຳລາຍໂລກແລະຊັບພະຍາກອນທຳມະຊາດບໍ່?

○ **ຊັບພະຍາກອນຕ່າງໆ ຂີເຫຍື້ອແລະປະຊາກອນໂລກ**: ທາມກາງບັນຫາສິ່ງແວດລ້ອມຫຼວງຫຼາຍທີ່ອ້ອມຮອບເຂົ້າມານັ້ນຄຳຖາມສຳຄັນທີ່ເຮົາຕ່າງສົມຄວນຖາມຕົວເອງກໍ່ຄື "ເທົ່າໃດຈຶ່ງຈະພໍ?" ເຮົາຕ້ອງມີຊັບສົມບັດຫຼື "ສິ່ງຂອງ"ຫຼາຍເທົ່າໃດຈຶ່ງຈະເຮັດໃຫ້ມີຄວາມສຸກແລະສຸຂະພາບສົມບູນ? ນອກຈາກນັ້ນ ສິ່ງທີ່ຄວນຄຳນຶງເຖິງດ້ວຍແບບນີ້ ຄືສິ່ງຂອງຕ່າງໆເຫຼົ່ານັ້ນຜະລິດຢ່າງໃດແລະເຂັ້ມແຂງທົນທານເທົ່າໃດ ພວກເຮົາຕ່າງລ້ວນເປັນຜູ້ບໍລິໂພກດ້ວຍກັນທັງສິ້ນ ພຣະເຈົ້າຊົງສ້າງໃຫ້ມີຄວາມຕ້ອງການອາຫານ ຕ້ອງການເຄື່ອງນຸ່ງຫົ່ມ ທີ່ຢູ່ອາໄສ ສຸຂະພາບທີ່ດີ ແລະມີວຽກທີ່ເຕີມເຕັມເຮົາ ສິ່ງເຫຼົ່ານີ້ລ້ວນຕ້ອງນຳເອົາຊັບພະຍາກອນມາໃຊ້ ວິທີຊີວິດສະໄໝແບບຍຸກປັດຈຸບັນນີ້ຍິ່ງເຮັດໃຫ້ເຮົາໃຊ້ພະລັງງານຫຼາຍກວ່າເມື່ອ ບໍ່ວ່າຈະເປັນໄຟຟ້າພະລັງງານເຊື້ອໄຟແລະການເດີນທາງທີ່ກາຍເປັນເລື່ອງຈຳເປັນເພາະຄົນຕ້ອງເດີນທາງໄປຍັງທີ່ເຮັດວຽກຫຼືເຮັດທຸລະກິດຕ່າງໆ.

ຢ່າງກໍ່ຕາມ ໂລກໃບນີ້ມີຂີດຈຳກັດ ໃນຂະນະທີ່ປະຊາກອນໂລກກຳລັງເພີ່ມຂຶ້ນຈົນເກືອບສິບພັນລ້ານຄົນນັ້ນ ເຮົາຈຳເປັນຕ້ອງໄຕ່ຕອງຢ່າງລະອຽດຖ້ວນຖີ່ຮອບຂອບແລະຍຶດຫຼັກພຣະຄຳພີທີ່ວ່າດ້ວຍຈຳນວນປະຊາກອນມະນຸດແລະຮູບແບບການດຳເນີນຊີວິດທີ່ເໝາະສົມ ພື້ນທີ່ແລະວັດຖຸດິບຕ່າງໆ ມີບໍ່ພຽງພໍສຳຫຼັບທຸກຄົນຫຼືທຸກຄອບຄົວຈະສ້າງບ້ານຫຼັງໃຫຍ່ໂຕມະໂຫລານ ບໍລິໂພກຊີ້ນສັດປະລິມານຫຼາຍ ເອົາໃສ່ເສື້ອຜ້າອາກອນຈາກແຟຊັນລາສຸດລ້ຳສະໄໝ ຂັບລົດໃຫຍ່ໂດຍສານເຄື່ອງບິນໄປພັກພອນຍອນໃຈ ໃຊ້ແອແລະລະບົບໃຫ້ຄວາມຮ້ອນແກ່ບ້ານເຮືອນ ຫຼືຊື້ອຸປະກອນໄຟຟ້າໃໝ່ໆ ຢູ່ຕະຫຼອດເວລາ (ໂທລະທັດ, ຄອມພິວເຕີ, ໂທລະສັບເປັນຕົ້ນ)

    ບາງຄັ້ງຄົນໃນປະເທດລ່ຳລວຍອາດຈະບໍ່ພໍໃຈຫຼືເຕັມໃຈທີ່ຈະຍອມຮັບວ່າແທ້ຈິງແລ້ວໃນປະເທດທຸກຍາກ ເກືອບຈະບໍ່ມີສິດທີ່ຈະມີຫຼືຄອບຄົວສິ່ງທີ່ຄົນລ່ຳລວຍມີທັງ ທີ່ຄວາມມັ່ນຄົງແລະມີທຸກສິ່ງຂອງເຫຼົ່ານີ້ໄດ້ມາດ້ວຍການເອົາລັດເອົາປຽບເພື່ອນຳວັດຖຸດິບມາ ລວມເຖິງໃຊ້ແຮງງານຢ່າງມີເປັນທຳຈາກປະເທດທຸກຍາກ ບັນດາຄົນທຸກຍາກລຳບາກທີ່ສຸດໜ່ວຍໂລກຂອງເຮົາ

ນັ້ນແຫຼະທີ່ຈະຕ້ອງຮັບຜົນປະໂຫຍດຫຼາຍທີ່ສຸດ.

ເປັນເລື່ອງບໍ່ຍຸດຕິທຳໂດຍທີ່ສຸດເຊັ່ນດຽວກັນເມື່ອປະເທດລ່ຳລວຍຊຶ່ງປະຊາກອນເພີ່ມຂຶ້ນຢ່າງມະຫາສານໃນຍຸກປະຕິວັດອຸສາຫະກຳ ແຕ່ໄປບອກປະເທດທຸກຍາກໃຫ້ຄວບຄຸມຈຳນວນປະຊາກອນ ມີງານວິໄຈທີ່ບົ່ງບອກວ່າການຊ່ວຍເຫຼືອປະເທດທີ່ປະສົບກັບພາວະທຸກຍາກທີ່ດີນັ້ນສາມາດກະທຳຜ່ານທາງການໃຫ້ການສຶກສາໃຫ້ກັບສະຕີແລະເດັກນ້ອຍຜູ້ຍິງທັ້ງຫຼາຍ ເພາະການກະທຳແບບນີ້ຈະຊ່ວຍໃຫ້ປະເທດເຫຼົ່ານັ້ນເຕີບໂຕຢ່າງຍັ່ງຍືນກວ່ານັ້ນເອງ[6] ພວກເຮົາໃນຖານະທີ່ເປັນຄຣິສຕຽນຈາກທຸກບ່ອນໜ່ວຍໂລກນີ້ ແມ້ຈະມາຈາກບໍລິບົດທີ່ແຕກຕ່າງກັນ ພຣະເຈົ້າຊົງເອີ້ນເຮົາທຸກຄົນໃຫ້ເຫັນຄຸນຄ່າຂອງທຸກຊີວິດຢ່າງທີ່ພຣະອົງຊົງເຫັນນັ້ນໃຫ້ເຮົາຫຼີກໜີຈາກການຮັກເງິນທອງແລະສະແຫວງຫາຄວາມຍຸດຕິທຳແກ່ທຸກຄົນ.

ເຮົາຈຳເປັນຕ້ອງທຳຄວາມເຂົ້າໃຈການພັດທະນາຊາດຢ່າງຖືກຕ້ອງເສຍໃໝ່ ການພັດທະນາທີ່ບໍ່ເຊື່ອມໂຍງກັບຮູບເຄົາລົບຈອມປອມຢ່າງ "ການມີຈຳນວນຫຼາຍໃຫຍ່ກວ່າເດີມແລະໃໝ່ກວ່າເດີມ"ເຫຼົ່ານີ້ ແຕ່ຈະຕ້ອງກັບມາໃຊ້ພຣະຄຳພີເປັນບັນທັດຖານເພື່ອເຮົາຈະມີວິໄສທັດທີ່ຊັດເຈນໜ່ວຍໂລກນີ້ ທີ່ພຣະເຈົ້າຊົງສ້າງໃຫ້ເຮົາແລະທຸກຄົນໜ່ວຍໂລກນີ້ ໃນບົດຕໍ່ໄປເຮົາຈະມາພິຈາລະນາກັນກຽວກັບສິ່ງທີ່ພຣະຄຳພີສອນ ແຕ່ຂະນະນີ້ ເຮົາອາດຈະມີຄວາມເຫັນກົງກັນແລ້ວວ່າຢ່າງນ້ອຍທີ່ສຸດມີປັດໃຈພື້ນຖານບາງຢ່າງທີ່ມະນຸດທຸກຄົນໜ່ວຍໂລກນີ້ມີສິດແລະສົມຄວນໄດ້ຮັບມັນຢ່າງເທົ່າທຽມກັນ.

**ຄຳຖາມ**:

- ປັດໄຈພື້ນຖານທີ່ຈຳເປັນສຳຫຼັບຊີວິດມະນຸດໄດ້ແກ່ຫຍັງແດ?
- ມີສິ່ງໃດອີກບໍ່ ແມ່ນຫຍັງທີ່ຍັງຂາດຫາຍໄປຫຼືຄວນມີຢູ່ໃນລາຍການດັ່ງຕໍ່ໄປນີ້: ອາຫານ, ນ້ຳສະອາດ, ໂຮງໝໍ, ເຄື່ອງນຸ່ງຫົ່ມ ທີ່ຢູ່ອາໄສ, ຄວາມປອດໄພ, ການສຶກສາ, ວຽກເຮັດຫຼືອາຊີບ, ການພັກພອນ?.

[6] https://blogs.worldbank.org/health/female-education-and-childbearing-closer-look-data and https://borgenproject.org/poverty-and-overpopulation.

- ສິ່ງດັ່ງຕໍ່ໄປນີ້ແລະ ມີຄວາມສໍາຄັນຕໍ່ຊີວິດມະນຸດຫຼາຍຊໍາໃດ: ເງິນຜາກ, ເຊື້ອໄຟ, ພະລັງງານ, ແສງສະຫວ່າງ, ອິນເຕີເນັດ, ຄວາມສະດວກສະບາຍ, ການທ່ອງທ່ຽວເດີນທາງ, ໂອກາດທີ່ເທົ່າທຽມກັນ, ສຽງ(ການໂຫວດເລືອກຕັ້ງ) ອິດສາລະພາບໃນນະມັດສະການ?.
- ລາຍການດັ່ງກ່າວຕ່າງໆ ຂ້າງເທິງເປັນສິ່ງທີ່"ຈໍາເປັນ"ຫຼືມີສິ່ງໃດທີ່ເປັນພຽງ "ຄວາມຕ້ອງການ"ຫຼືກວ່າແທ້ຈິງທຸກຄົນຄວນມີສິດໄດ້ຮັບທັ້ງໝົດຈາກຂ້າງເທິງ?.

ບາງຄັ້ງປັດໃຈພື້ນຖານເຫຼົ່ານີ້ກໍ່ເອີ້ນວ່າ "ຮາກຖານທາງສັງຄົມ" ຊຶ່ງຄືສິ່ງທີ່ທຸກສັງຄົມຄວນຈະສາມາດເອົາຫຍິບຍື່ນໃຫ້ແກ່ປະຊາກອນຂອງຕົນໂດຍບໍ່ເວັ້ນແມ່ຄົນດຽວ ຢ່າງໃດກໍ່ຕາມ ມີສິ່ງທີ່ເປັນຫຼັກຖານຍືນຍັນວ່າເມື່ອ

ໄດ້ຮັບສິ່ງທີ່ຈໍາເປັນພື້ນຖານເຫຼົ່ານັ້ນແລ້ວ ສິ່ງທີ່ໄດ້ຮັບເກີນກວ່ານັ້ນກໍ່ບໍ່ໄດ້ເຮັດໃຫ້ຊີວິດຄົນນັ້ນໆ ມີຄວາມສຸກຫຼາຍຂຶ້ນຫຼືໄດ້ຮັບການເຕີມເຕັມຫຼາຍກວ່າດ້ວຍວັດຖຸສິ່ງຂອງເພີ່ມເຕີມເຫຼົ່ານັ້ນແຕ່ຢ່າງໃດ ວຽກສໍາຫຼວດວິໃຈຫຼາຍອັນປະກົດພົບວ່າ ເມື່ອປະເທດໃດລໍາລວຍຫຼາຍຂຶ້ນຄົນໃນປະເທດນັ້ນກໍ່ມີຄວາມຕ້ອງການຫຼາຍຂຶ້ນຕາມໄປດ້ວຍ ຂະນະດຽວກັນກໍ່ບໍ່ໄດ້ເຫັນຄ່າຂອງສິ່ງທີ່ຕົວເອງຫາມາໄດ້ນັ້ນເທົ່າໃດ ແລະແມ້ຈະມີສິ່ງຂອງຫຼວງຫຼາຍ ພົບວ່າຄົນກໍ່ບໍ່ໄດ້ມີຄວາມສຸກເພີ່ມຂຶ້ນແຕ່ຢ່າງໃດ ກົງກັນຂ້າມ ກັບເກີດຊ່ອງຫວ່າງຫຼາຍຂຶ້ນເລື້ອຍໆ ລະຫວ່າງກຸ່ມຄົນລວຍແລະຄົນທຸກຍາກໃນສັງຄົມ ຊຶ່ງເຮັດໃຫ້ທັ້ງສອງຝາຍຍິ່ງບໍ່ມີຄວາມສຸກກັນຫຼາຍຂຶ້ນ ຫຼືອາດເວົ້າວ່າໄດ້ ຖ້າຫາກເພືອນບ້ານຍັງຍາກຈົນແລະຂັດສົນຢູ່ ຄົນທີ່ມີມັ່ງຄັ້ງລໍາລວຍກໍ່ບໍ່ອາດມີຄວາມສຸກໄດ້ຢ່າງແທ້ຈິງ ແມ້ຈະມີສົມບັດຫຼວງຫຼາຍເທົ່າໃດກໍ່ຕາມ.

ນອກຈາກນັ້ນ ເມື່ອຄົນທີ່ເຈັບຈ່າຍຊື້ຫາສິ່ງຂອງມາສະສົມແລະຂະນະດຽວກັນກໍ່ຖີ້ມຂອງອີກຫຼາຍຢ່າງຂຶ້ນນັ້ນ ວິທີດໍາເນີນຊີວິດແບບນີ້ກໍ່ຍິ່ງເຮັດໃຫ້ໂລກໜ່ວຍນີ້ ເຮົາອາໄສຢູ່ຂາດຄວາມເຊື່ອໝັ້ນຫຼາຍຂຶ້ນໄປດ້ວຍ ຖ້າທຸກຄົນໜ່ວຍໂລກຈໍາເປັນຕ້ອງໄດ້ຮັບ "ຮາກຖານທາງສັງຄົມ" ກໍ່ຈໍາເປັນດ້ວຍເໝືອນກັນທີ່ເຮົາຈະບໍ່ທໍາລາຍຄວາມເຊື່ອໝັ້ນ ໃນລະດັບທີ່ເກີນກວ່າທີ່ທໍາມະຊາດຈະແບກຮັບໄດ້ທີ່ເອີ້ນວ່າ "ເພດານທາງສິ່ງແວດລ້ອມ"ເພດານດັ່ງກ່າວນີ້ໝາຍເຖິງຂີດຈໍາກັດທີ່ໂລກຈະທົນໄດ້ ຫາກເຮົາທໍາລາຍເພດານນີ້ ຄວາມເຊື່ອໝັ້ນຂອງໂລກກໍ່ຈະເສຍຫາຍ ບໍ່ສາມາດຫຍິບຍື່ນປັດໃຈຈໍາເປັນພື້ນຖານໃຫ້ແກ່ທຸກຄົນໄດ້ອີກຕໍ່ໄປ ຄວາມທຸກຍາກແທ້ກໍ່ຈະຫຼາຍຂຶ້ນແລະສົ່ງຜົນກະທົບຕໍ່ຄົນຮຸ່ນຫຼັງ ຕົວຢ່າງຂອງຂີດຈໍາກັດຂອງໂລກ ຫຼືເພດານທາງສິ່ງແວດລ້ອມໃນປັດຈຸບັນນີ້ ໄດ້ແກ່ນໍ້າຖືກໃຊ້ໄປຢ່າງຟຸ້ມເຟືອຍ ດິນເຊື່ອມສະພາບ ສັດປາແລະປ່າໄມ້ບໍ່ຖືກທໍາລາຍ ມົນລະພິດທີ່ເກີດຈາກສານເຄມີ ນໍ້າທະເລມີຄວາມເປັນກົດຫຼາຍຂຶ້ນ (ເພາະການສະທ້ອນແສງລະລາຍລົງໄປໃນນໍ້າທະເລ) ແລະການປ່ຽນແປງສະພາບອາກາດໂລກ.

ບັນຫາໃຫຍ່ແລະທ້າທາຍຫຼວງຫຼາຍໃນປັດຈຸບັນນີ້ທີ່ພວກເຮົາຕ່າງກຳລັງປະເຊີນກັນຢູ່ ລ້ວນມາຈາກກິດຈະກຳມະນຸດທີ່ຫຼາຍເກີນກວ່າຂີດຈຳກັດທີ່ໂລກຈະຮັບໄດ້ ຫຼາຍພູມສາດໜ່ວຍໂລກປະເຊີນກັບໄພທຳມະຊາດຮຸນແຮງ ບໍ່ວ່າຈະເປັນໄຟປ່າ ນ້ຳຖ້ວມ ພາວະແຫ້ງແລ້ງ ພາຍຸເຮີເຄນຫຼືໄຊໂຄຣນ ທະວີທັງຄວາມຖີ່ແລະຄວາມຮຸນແຮງຫຼາຍກວ່າເມື່ອກ່ອນ ແລະສາເຫດຫຼັກທີ່ເຮົາກຳລັງປະເຊີນກັບຄວາມຍາກລຳບາກນັ້ນ ເພາະການເຜົາເຊື້ອໄຟຟອສຊິນຢ່າງຫຼວງຫຼາຍມະຫາສານ ນ້ຳຂາດແຄນແລະເກີດຄວາມອຶດຢາກຫຼາຍຂຶ້ນ ເພາະເຮົາໃຊ້ນ້ຳຢ່າງຟຸ່ມເຟືອຍເກີນໄປ ດິນຖືກທຳລາຍດ້ວຍສານເຄມີຕ່າງໆ ແລະການກັດເຊາະ ແມ່ນ້ຳແລະມະຫາສະໝຸດກໍ່ໄດ້ຮັບຜົນກະທົບຈາກນ້ຳມືຂອງມະນຸດ.

ເຖິງແນວໃດກໍຕາມ ຍັງມີຄວາມຫວັງລະຫວ່າງກາງບັນຫາເຂົ້າມາອ້ອມຮອບ ມີຫຼາຍສິ່ງທີ່ເຮົາສາມາດເຮັດໄດ້ເພື່ອແກ້ໄຂກ່ອນທີ່ຈະສາຍເກີນໄປ ເຮັດໃຫ້ໂລກໜ່ວຍນີ້ດີຂຶ້ນດ້ວຍກັນເປັນໂລກທີ່ໜ້າຢູ່ສຳຫຼັບຄົນຫຼຸ່ນຫຼັງ ຢ່າງໃດກໍ່ຕາມກ່ອນທີ່ຈະມາເບິ່ງວ່າເຮົາສາມາດເຮັດຫຍັງແດ່ໄດ້ຢ່າງນັ້ນ ໃຫ້ເຮົາມາເປີດພຣະຄຳພີເບິ່ງພ້ອມກັນ ພິຈາລະນາພຣະຄຳພີ ເວົ້າເຖິງສະຖານະການທີ່ເຮົາຕ່າງກຳລັງປະເຊີນຢູ່ນີ້ຢ່າງໃດແດ່.

## ຕອນທີ່ 2
## ເລື່ອງລາວທີ່ຍິ່ງໃຫຍ່ຢູ່ໃນພຣະຄໍາພີ.

**ຄໍາຖາມ**:

- ທ່ານຄິດວ່າພຣະຄໍາພີໄດ້ເວົ້າເຖິງແຜ່ນງານຂອງພຣະເຈົ້າຕໍ່ໂລກໜ່ວຍນີ້ໄວ້ຢ່າງໃດແດ່?
- ຖ້າແບບນັ້ນ ຂໍ້ຄວາມໃນພຣະຄໍາພີເປັນຄວາມຫວັງໃຫ້ແກ່ຜູ້ເຊື່ອເທົ່ານັ້ນບໍ່ ຫຼື ເປັນຄວາມຫວັງສໍາຫຼັບການຊົງສ້າງທັງໝົດຂອງພຣະອົງຄືກັນ?
- ເຮົາໄດ້ຮັບການຊົງເອີ້ນພຽງເພື່ອໃຫ້ນໍາຄົນມາຮູ້ຈັກພຣະເຈົ້າແລະໃຫ້ໄດ້ຮັບຄວາມລອດພົ້ນ ຫຼືວ່າພຣະເຈົ້າເອີ້ນເຮົາໃຫ້ຮ່ວມກັນສ້າງໂລກໜ່ວຍນີ້ ຊ່ວຍກັນເຮັດໃຫ້ໂລກໜ້າຢູ່ຫຼາຍຂຶ້ນດ້ວຍກັນບໍ່?.
- ສັດປ່າແລະທໍາມະຊາດນັ້ນຖືກສ້າງເພື່ອຕອບສະໜອງຄວາມຕ້ອງການຂອງມະນຸດເທົ່ານັ້ນບໍ່? ຕາມຄວາມຈິງແລ້ວສິ່ງເຫຼົ່ານັ້ນກໍ່ມີຄຸນຄ່າໃນສາຍພຣະເນດຂອງພຣະເຈົ້າຫຼາຍ ແລະເຮົາຕ່າງສົມຄວນຮັບຜິດຊອບເບິ່ງແຍງການຊົງສ້າງເຫຼົ່ານັ້ນຄືກັນ?.

ຂ້າພຣະເຈົ້າເກີດແລະເຕີບໂຕໃນຄອບຄົວຄຣິສຕຽນທີ່ມີຄວາມເຊື່ອເຂັ້ມແຂງ ພໍ່ແມ່ຂອງຂ້າພະເຈົ້າເປັນສິດຍາບານ ແລະເປັນມິດຊັນນາລີ ພວກທ່ານຫຼົງໄຫຼໃນພຣະຄໍາພີ ຂ້າພະເຈົ້າຮຽນເລື່ອງທີ່ສໍາຄັນທີ່ສຸດໃນຊີວິດ ເຊິ່ງເປັນເລື່ອງຂອງຄວາມສໍາພັນສ່ວນຕົວກັບພຣະເຢຊູທັງທີ່ບ້ານ ທີ່ຄຣິສະຕະຈັກ ແລະໃນໂຮງຮຽນ ການນໍາຄົນມາຮັບເຊື່ອເພື່ອເຂົາຈະໄປຢູ່ກັບພຣະເຢຊູເທິງສະຫວັນນັ້ນເປັນເປົ້າໝາຍສູງສຸດ ສິ່ງອື່ນໆ ນອກເໜືອຈາກນັ້ນຖືວ່າສໍາຄັນຮອງລົງໄປ ແລະບໍ່ຈໍາເປັນເທົ່າກັບການນໍາຂ່າວປະເສີດໄປສູ່ຄົນທັງຫຼາຍ.

ຂໍ້ພຣະຄໍາພີທີ່ຂ້າພະເຈົ້າຈໍາໄດ້ຂຶ້ນໃຈ ແລະໄດ້ຍິນໃນການເທດສະໜາຫຼາຍທີ່ສຸດຄືພຣະຄໍາໂຍຮັນ 3:16

"ເພາະວ່າ ພຣະເຈົ້າຊົງຮັກໂລກຫລາຍທີ່ສຸດ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕະຫລອດໄປເປັນນິດ".

ຫຼາຍຄັ້ງທີ່ຂ້າພະເຈົ້າໄດ້ຍິນຄຣິສຕຽນອະທິບາຍພຣະຄໍາໂຍຮັນ 3:16 ວ່າເປັນຄວາມຮັກທີ່ຍິ່ງໃຫຍ່ຂອງພຣະເຈົ້າ ຈຶ່ງສົ່ງພຣະເຢຊູລົງມາສູ່ໂລກ ທົນທຸກແລະຕາຍຢູ່ເທິງໄມ້ກາງແຂນ ຊົງຮັບໂທດບາບແທນມະນຸດ ເພື່ອທຸກຄົນທີ່ເຊື່ອວາງໃຈໃນພຣະອົງຈະໄດ້ຮັບຄວາມລອດພົ້ນແລະໄດ້ຮັບເອົາຊີວິດນິລັນດອນ.

ຕໍ່ມາເມື່ອຂ້າພະເຈົ້າມີໂອກາດໄດ້ຮຽນພາສາກຣີກເຊິ່ງເປັນພາສາຫຼັກໃນພັນທະສັນຍາໃໝ່ (ພຣະຄຳພີໃໝ່) ແລະພົບວ່າຄຳວ່າ "ໂລກ" ໃນພຣະຄຳພີໂຢຮັນ 3:16 ນັ້ນໃຊ້ຄຳວ່າ ຄອດມອດ (cosmos) ຄວາມໝາຍເຖິງໂລກໃນເຊີງກາຍຍະພາບທີ່ເປັນການຊົງສ້າງທັ້ງໝົດຂອງພຣະເຈົ້າ ກ່ອນໜ້ານັ້ນຂ້າພະເຈົ້າຮັບຮູ້ວ່າໂລກຄື "ມະນຸດ" ເທົ່ານັ້ນແລະບໍ່ນັບຮວມການຊົ່ງສ້າງອື່ນໆ ຕອນນັ້ນຂ້າພະເຈົ້າເຂົ້າໃຈວ່າ "ໂລກ" ໃນພຣະຄຳຂໍ້ນີ້ໝາຍເຖິງ "ມະນຸດ" ແລະຍັງເຂົ້າໃຈດ້ວຍວ່າໂລກໜ່ວຍນີ້ເຕັ້ມໄປດ້ວຍຄວາມເຊື່ອມໂຊມ ຄວາມແຕກຫັກ ແລະຊົ່ວຮ້າຍ ດັ່ງນັ້ນຂ້າພະເຈົ້າຄວນຮັກສາຊີວິດຕົນເອງໃຫ້ບໍລິສຸດ ເພື່ອໃຫ້ໄດ້ໃນທີ່ສຸດ ຂ້າພະເຈົ້າຈະໄດ້ໄປຢູ່ເທິງສະຫວັນຊົ່ວນິລັນດອນ ແຕ່ໃນຄວາມເປັນຈິງແລ້ວ ຂໍ້ພຣະຄຳພີທີໂດ່ງດັງຂໍ້ນີ້ເວົ້າວ່າພຣະເຈົ້າຮັກ *ຄອດມອສ* ຂ້າພະເຈົ້າຄົ້ນຄວ້າເພີ່ມເຕີມກ່ຽວກັບຄວາມໝາຍຂອງຄຳນີ້ແລະ ໄດ້ເວົ້າວ່າກັບນັກສາດສະໜາຫຼາຍຄົນ ແລະທຸກຄົນເຫັນດ້ວຍວ່າ ຄອດມອດ ໃນພຣະຄຳພີໃໝ່ພາສາກຣີກນັ້ນໝາຍການຊົງສ້າງທັ້ງໝົດ ແນ່ນອນ ພຣະເຈົ້າຊົງຮັກມະນຸດ ແຕ່ພຣະອົງກໍ່ຊົງຮັກສິ່ງທີ່ພຣະອົງຊົ່ງສ້າງທັ້ງໝົດຄືກັນ ເມື່ອເຮົາພິຈາລະນາພຣະຄຳປະຖົມມະການບົດທີ່ 1 ເຮົາຈະເຫັນວ່າພຣະເຈົ້າຊົງຊື່ນຊົມຍິນດີສິ່ງທີ່ພຣະອົງຊົງສ້າງແລະເຫັນວ່າ "ດີຍອດຍ້ຽມ" ເມື່ອເຮົາອ່ານພຣະຄຳເພງສັນລະເສີນ ເຮົາກໍ່ຈະເຫັນວ່າບໍ່ວ່າຕົ້ນໄມ້ໃນປ່າ ແມ່ນ້ຳ ຝູງນົກ ດວງດາວ ແລະດວງຕາເວັນຕ່າງນະມັດສະການພຣະເຈົ້າແລະຍົກຍ່ອງພຣະນາມບໍລິສຸດຂອງພຣະອົງ ນອກຈາກນັ້ນ ພຣະເຢຊູເອງກໍ່ຊົງສັ່ງສອນຄັ້ງແລ້ວຄັ້ງອີກກ່ຽວກັບການຊົງສ້າງຂອງພຣະເຈົ້າ ເມື່ອພຣະອົງເວົ້າເຖິງແຜ່ນດິນຂອງພຣະເຈົ້າ.

ຖ້າແບບນັ້ນ ແມ່ນຫຍັງເປັນສາເຫດທີ່ເຮັດໃຫ້ເຮົາເຂົ້າໃຈຂ່າວປະເສີດໃນມູມມອງວ່າມີພຽງມະນຸດເທົ່ານັ້ນທີ່ສຳຄັນແລະຕ້ອງໄດ້ຮັບການຊ່ວຍກູ້ໃຫ້ລອດພົ້ນ ໃນຂະນະທີ່ສິ່ງອື່ນໆ ຖືວ່າ "ຊົ່ວຮ້າຍ"ແລະຖືກຕີຄວາມໝາຍວ່າຈະລົບຫາຍໄປໃນທີ່ສຸດ?.

ມີຢູ່ຫຼາຍເຫດຜົນປະກອບກັນຂຶ້ນ ໜຶ່ງໃນນັ້ນຄືອຳນາດຈາກປັດຊະຍາກຣີກ ຄຣິສຕະຈັກໃນຍູຕາເວັນຕົກກໍ່ຕັ້ງແລະເຕີບໂຕໃນຍຸກທີ່ປັດຊະຍາກຣີກທີ່ຈະເລີນຮຸ່ງເຮືອງສີວິໄລ ແລະມີພະລັງ ແນວຄິດບາງຢ່າງໃນປັດຊະຍານີ້ສອດຄ້ອງກັບວິທີຂອງຄຣິສະຕຽນ ແຕ່ກໍ່ມີຫອີກຫຼາຍຢ່າງທີ່ແຕກຕ່າງໂດຍສິ້ນເຊິ່ງຈາກມູມມອງໃນພຣະຄຳພີດ້ວຍ ໜຶ່ງໃນນັ້ນຄື "ຄວາມເປັນຄ່ານິຍົມ" ຫຼືການແບ່ງແຍກຊັດເຈນເປັນສອງຝ່າຍ ສິ່ງທີ່ເປັນຝ່າຍວິນຍານມັກເບິ່ງວ່າດີ ໃນຂະນະສິ່ງທີເປັນວັດຖຸຖືກເບິ່ງວ່າຊົ່ວຮ້າຍ ປັດຊະຍາກຣີກສ່ວນໃຫຍ່ເບິ່ງວ່າ "ຈິດວິນຍານ" ນັ້ນຖືກກັກຂັ່ງໄວ້ໃນຮ່າງກາຍ ແລະຈະຫຼຸດອອກໄປກໍ່ຕໍ່ເມື່ອເສຍຊີວິດ ຊຶ່ງພຣະຄຳພີບໍ່ເຄີຍສອນແບບນີ້ ປັດຊະຍາກຣີກເບິ່ງວ່າທຳມະຊາດແລະໂລກນັ້ນເປັນທີ່ຂັດຂວາງບໍ່ໃຫ້ຈິດວິນຍານເບິ່ງເຫັນຄວາມຈິງ ແນວຄິດແບບນີ້ສົ່ງມີອຳນາດຢ່າງຫຼວງຫຼາຍຕໍ່ຄຣິດສາດສະໜາທັ້ງທີ່ໃນຄວາມເປັນຈິງແລ້ວ ພຣະຄຳພີບໍ່ໄດ້ສອນແບບນັ້ນ ພຣະຄຳພີລະບຸຊັດເຈນວ່າພຣະເຈົ້າຊົງສ້າງທຸກສິ່ງຢ່າງດີ

ຍອດຍຽມ ແລະພຣະເຍຊູຊົງອວຍພອນສິ່ງຊົງສ້າງທັງປວງດ້ວຍການເປັນສ່ວນໜຶ່ງຂອງສິ່ງເຫຼົ່ານີ້ ໂດຍການລົງມາເກີດເປັນມະນຸດ ແລະການທີ່ຮ່າງການຂອງພຣະອົງຟື້ນຄືນຈາກຄວາມຕາຍນັ້ນເປັນບົດພິສູດໃຫ້ເຫັນເຖິງການຊົງສ້າງໃໝ່ຂອງພຣະເຈົ້າທາງກາຍະພາບດ້ວຍຄວາມຄິດຂອງພຣະຄຳພີເກົ່າ (ພັນທະສັນຍາເດີມ) ແລະທີ່ຕໍ່ເນື່ອງມາສູ່ຍຸກພຣະຄຳພີໃໝ່ນັ້ນເບິ່ງວ່າຊີວິດຂອງມະນຸດນັ້ນປະກອບກັນຂຶ້ນຢ່າງອ້ອມຮອບລະຫວ່າງຮ່າງກາຍ, ຈິດໃຈ, ແລະຈິດວິນຍານ ບໍ່ໄດ້ໝາຍຄວາມດັ່ງ ປັດຊະຍາກຣີກທີ່ເບິ່ງວ່າຈິດວິນຍານຖືກຄຸມຂັງໄວ້ໃນຮ່າງກາຍແຕ່ຢ່າງໃດ.

ວັດທະນາທຳແລະວິທີຊີວິດຄຣິສຕຽນທາງຕາເວັນຕົກນັ້ນໄດ້ຮັບອຳນາດຢ່າງຫຼວງຫຼາຍຈາກວິທີຄິດແບບກຣີກ ແລະນັ້ນກໍ່ບໍ່ມີພຽງທາງດຽວທີ່ສົ່ງມີອຳນາດຕໍ່ວິທີຄິດຂອງຄຣິສະຕຽນໃນຢູໂຣບ ໃນຂະນະທີ່ຄຣິສະຕຽນໃນຂອບເຂດອື່ນໆ ເໜືອນອາຊຽນ ອັບຟຣິກາແລະໃນຕາເວັນອອກກາງບໍ່ໄດ້ເຊື່ອໃນຄວາມເປັນທະວິນິຍົມກັນເວີຍຊໍ້າ ໃນຍຸກຕໍ່ມາ ຊ່ວງສະຕະວັດທີ່ 17 -18 ນັ້ນຄຣິສະຕຽນໃນຢູໂຣບແລະອາເມຣິກາ

ເໜືອຍັງໄດ້ຮັບອຳນາດທາງຄວາມຄິດຢ່າງມະຫາສານຈາກຍຸກເລື່ອງບັນຍາ (the Age of Enlightenment) ເຊິ່ງເປັນມຸ່ງເນັ້ນຄຸນຄາຂອງເຫດຜົນທີ່ມະນຸດສ້າງຂຶ້ນມາແລະໃຫ້ຄ່າກັບອິດສະລະພາກສ່ວນບຸກຄົນ ຕົວຢ່າງປະໂຫຍດຍອດຮິດຂອງ René Descartes’ ທີ່ບອກວ່າ “ຂ້າພະເຈົ້ານສິ່ງທີ່ຂ້າຄິດ” (I think therefore I am) ຊຶ່ງເປັນປະໂຫຍດພື້ນຖານແຫ່ງການຮູ້ແຈ້ງເຫັນຈິງ ເປັນການໃຫ້ຄຸນຄ່າກັບຄວາມຄິດຂອງຄົນແທນທີ່ຈະໃຫ້ຄວາມຄິດຂອງພຣະເຈົ້າເປັນໃຫຍ່ ຈຶ່ງເກີດນັກຄິດຄຣິສະຕຽນຫຼາຍຄົນທີ່ໄດ້ຮັບອິດທິພົນຈາກວິທີຄິດແບບນີ້ ສົ່ງຜົນໃຫ້ເກີດແນວໂນ້ມໃນການແຍກຄຣິສະຕະຈັກອອກຈາກລັດຖະບານ ແຍກສາດສະໜາອອກຈາກເຫດຜົນ ແລະຝ່າຍວິນຍານອອກຈາກຝ່າຍວິທະຍາສາດແລະການເມືອງ ພວກເຂົາເບິ່ງວ່າພຣະຄຳພີນັ້ນບອກເຮົາກ່ຽວກັບວິທີທີ່ຈະຮູ້ຈັກພຣະເຈົ້າແລະການໄປສະຫວັນ ແຕ່ຂະນະດຽວກັນກໍ່ແນະນຳວ່າຄວນຮັບຟັງວິທະຍາສາດແລະເຫດຜົນຕ່າງໆກ່ຽວກັບໂລກຄືກັນ.

ຄຣິສະຕຽນບາງສ່ວນຕອບສະໜອງຕໍ່ແນວຄິດດ້ານການຮູ້ຈັກແຈ້ງແລະໃຊ້ເຫດຜົນສ່ວນຕົວດ້ວຍການຍອມຮັບມັນ ປະຍຸກເອົາທັງຫຼັກການພຣະຄຳພີມາໃຊ້ກັບຊີວິດຝ່າຍຈິດວິນຍານແລະໃຊ້ຫຼັກສິນລະທຳສ່ວນຕົວດ້ວຍ ຈົນໃນທີ່ສຸດຍຶດຄວາມຄິດເຫັຂອງຕົວເອງເປັນຫຼັກເມື່ອຄິດເຖິງປະເດັນການເມືອງແລະສັງຄົມ ແຕ່ກໍ່ມີຄຣິສະຕຽນທີ່ປະຕິເສດແນວຄິດແບບນີ້ຢ່າງສິ້ນເຊີ່ງຄືກັນ ພວກເຂົາຍຶດຖື ແຕ່ພຽງແນວຄິດຕາມແບບພຣະຄຳພີ ແຕ່ບັນຫາທີ່ພົບກໍ່ຄືຄົນທີ່ຍຶດພຣະຄຳພີຢ່າງດຽວກໍ່ມັກຈະບໍ່ສົນໃຈຫຼືໃຫ້ຄວາມສຳຄັນກັບເລື່ອງອື່ນໆ ໂດຍພະຍາຍາມຮັກສາຊີວິດໃຫ້ບໍລິສຸດເພື່ອລໍຖ້າການກັບຄືນມາອີກຄັ້ງຂອງພຣະເຍຊູ.

ຢ່າງໃດກໍ່ຕາມ ຍັງມີກຸ່ມຄຣິສະຕຽນທີ່ຍຶດໝັ້ນໃນຫຼັກການຂອງພຣະຄຳພີທີ່ເລີ່ມຕົ້ນວິທີການແບບທີ່ສາມ ຊຶ່ງຍອມຮັບຂໍ້ມູນເຊິງລຶກດ້ານວິທະຍາສາດແລະເຫດຜົນ ແຕ່ກໍ່ບໍ່ໄດ້ລຸດໜ້

ອຍຖ້ອຍລົງຄວາມສຳຄັນຂອງພຣະຄຳພີໃນຖານະແນວທາງສູງສຸດ ແລະແຫຼ່ງແຫ່ງບັນດານໃຈຄຣິສະຕຽນເຫຼົ່ານີ້ດຸ່ມັ່ນອະທິຖານາ ຮັກໃນການອ່ານພຣະຄຳພີ ຈົດຈໍ່ຄວາມຄິດຈິດໃຈຂອງຕົນເອງກັບພຣະເຈົ້າ ພວກເຂົາຈຶ່ງທວນຄືນເຖິງຄວາມຈິງທີ່ຄຣິສະຕະຈັກຕ່າງໆຫຼົງລືມຕະຫຼອດໄລຍະເວລາຫຼາຍສະຕະວັດທີ່ຜ່ານມາ ຄຣິສຕຽນນັກປະກາດຂ່າວປະເສີດເຫຼົ່ານີ້ ຈຶ່ງເຮັດງານຮັບໃຊ້ໃນງານທີ່ມີພຣະເຢຊູເປັນສູນກາງ ບໍ່ວ່າຈະເປັນການເຮັດພັນທະກິດປະກາດຂ່າວປະເສີດຕ່າງປະເທດ ການແປພຣະຄຳພີເປັນພາສາຕ່າງໆ ໂດຍເຊື່ອວ່າພຣະເຢຊູຄວນເປັນພຣະເຈົ້າສຳຫຼັບມະນຸດທຸກຄົນແລະສາມາດປປົດປ່ອຍຜູ້ຄົນໃຫ້ພົ້ນຈາກພັດທະນາການຝ່າຍຮ່າງກາຍດັ່ງນັ້ນ ພັນທະກິດຈຶ່ງກຽ່ວຂ້ອງກັບການຂັບເຄື່ອນການເລີກເປັນຂ້າທາດ ການຕໍ່ຕ້ານການຮັບໃຊ້ແຮງງານເດັກ ການສ້າງໂຮງຮຽນໃຫ້ກັບເດັກໆ ການປະຕິຮູບຫ້ອງຝາກຂັງ ຊຶ່ງທັ້ງໝົດເຫຼົ່ານີ້ທີ່ເຮັດລ້ວນການເຮັດສິ່ງໃນນາມຂອງພຣະຄຣິດ ຍັງບໍ່ທັນໝົດແຕ່ພຽງເທົ່ານັ້ນ ເພາະພວກເຂົາເຂົ້າໃຈວ່າພຣະເຢຊູຊົງເປັນພຣະເຈົ້າແຫ່ງການຊົງສ້າງ ດັ່ງນັ້ນ ພັນທະກິດທີເຮັດຍັງກຽ່ວຂ້ອງກັນການກໍ່ຕັ້ງອົງກອນທີ່ຕໍ່ຕ້ານການທາລຸນສັດ ຕໍ່ຕ້ານການຈັບສັດໄປທົດລອງ ບາງຄົນຫັນໄປກິນເປັນອາຫານເພື່ອສື່ສານອອກໄປຍັງວົງກວ້າງເຖິງຄວາມຫ່ວງໃຍການສ້າງຂອງພຣະເຈົ້າ.[7]

ຈົນປັດຈຸບັນນີ້ເຮົາກໍ່ຍັງຄົງເຫັນວິທີຄິດແຕກຕ່າງກັນລະຫວ່າງກາງຄຣິສະຕຽນໃນພາກພື້ນຕ່າງໆ ທົ່ວໂລກກໍ່ເໝືອນກັນ ບາງສ່ວນຍ່ອມໃຫ້ພຣະຄຳພີເປັນແນວທາງດ້ານຫຼັກສິນລະທຳກັບເລື່ອງລາວທີ່ກຽ່ວຂ້ອງກັບຈິດວິນຍານ ຂະນະດຽວກັນກໍ່ຍ່ອມຮັບແນວຄິດທາງໂລກ ເມື່ອຕ້ອງເວົ້າເຖິງປະເດັນທາງເສດຖະກິດ, ການເມື່ອງ, ສິ່ງແວດລ້ອມ ແລະປະເດັນສາທາລະນະຕ່າງໆພວກເຂົາອາດຈະມີຄວາມເຫັນເຂົ້າຂ້າງໄປກັບຜູ້ນຳທາງການເມືອງ ແລະອາດຈະປະສົມປະສານປົນເປໄປ “ຄຸນຄ່າແບບຄຣິສະຕຽນ” ເຂົາກັບວັດທະນາທຳຮ່ວມສະໄໝ ພວກເຂົາມີແນວໂນ້ມຈະຍອມຮັບວິທີແບບປັດເຈກນິຍົມແລະວັດຖຸນິຍົມ ຊຶ່ງໂລກຍຸກປັດຈຸບັນຍຶດຖື ໂດຍບໍ່ໄດ້ຕັ້ງຄຳຖາມວ່າມັນຄືສິ່ງທີພຣະຄຳພີເວົ້າໄວ້ຫຼືບໍ່? ພວກເຂົາອາດຈະຟັງນັກເທດທີ່ເທດສະໜາວ່າພຣະເຈົ້າຈະອວຍພອນຜູ້ເຊື່ອໃຫ້ມີຄວາມຮັ່ງມີດ້ານຊັບສິນເງິນທອງ ເມື່ອຜູ້ຄົນນັ້ນມີຄວາມເຊື່ອຫຼາຍພຽງພໍ.

ຍັງມີຄຣິສະຕຽນປະເພດທີເບິ່ງວວ່າໂລກເປັນສະຖານທີ່ຊົ່ວຮ້າຍ ເຊິ່ງເຮົາຕ້ອງພະຍາຍາມຊ່ວຍກູ້ຄົນບາບເຫຼົ່ານັ້ນ ຄຣິສຕຽນກຸ່ມນີ້ຈຶ່ງມັກບໍ່ສົນໃຈປະເດັນການເມືອງແລະສິງແວດລ້ອມພະຍາຍາມເນັ້ນແຕ່ການປະກາດຂ່າວປະເສີດແລະງານຝ່າຍຈິດວິນຍານເທົ່ານັ້ນ ຄົນກຸ່ມນີ້ມັນຈະຕັ້ງໜ້າາຕັ້ງຕາລໍຖ້າການສະເດັດກັບມາຂອງພຣະຄຣິດ ໂດຍຄິດຮອດພາບວັນພິພາກສາ ຊຶ່ງ

[7] ມີຕົວຫຼວງຫຼາຍຂອງນັກປະກາດຂ່າວປະເສີດ ລວມເຖິງວິນລຽມ ວິນເບີຟອຊ ທ່ານຊາຟເທສບູລີ ແລະສະມາຊິກຂອງອົງກອນແຊພແຮມ ຜູ້ແຕ່ງບົດກອນເພງນະມັດສະການຍ່າງໄອແຊກ ວັສແລະບິດາແຫ່ງການເຄືອນໄຫວຂອງມິດຊັນນາລີຍຸກໃໝ່ຢ່າງວິນລຽມ ແຄລີກໍເຮັດພັນທະກິດຢ່າງປະສົມປະສານດ້ວຍຄືກັນ.

ຜູ້ເຊື່ອທັງຫຼາຍຖືກຮັບຂຶ້ນສູ່ສະຫວັນຂະນະຍັງມີຊີວິດຢູ່ ໂດຍທີ່ໂລກຖືກພິພາກສາແລະຖືກທຳລາຍລົງໄປເພື່ອພຣະເຈົ້າຈະຊົງເລີ່ມຕົ້ນການຊົງສ້າງໃໝ່ຂຶ້ນ.

ເຮົາຈະເຫັນວ່າທັງຄຣິສຕຽນແບບທີ່ຍອມຮັບແນວຄິດຂອງໂລກ ແລະຄຣິສຕຽນທີ່ຍິ່ງໃຫຍ່ທີ່ສຸດດ້ານພຣະຄຳພີຕ່າງມີຄວາມຄິດທີ່ແຄບກ່ຽວກັບພຣະຄຳພີ ບໍ່ໄດ້ເບິ່ງເຫັນພາບລວມຂອງພຣະຄຳພີກ່ຽວກັບຂ່າວປະເສີດ ແລະສິ່ງທີ່ພຣະເຢຊູຊົງປະກາດ ດັ່ງນັ້ນ ໃຫ້ເຮົາເລີ່ມພິຈາລະນາລາຍລະອຽດຂອງພາບລວມນີ້ ພ້ອມກັບຕົວຢ່າງຂອງຄຣິສະຕຽນໃນຍຸກປັດຈຸບັນທີ່ໄດ້ຄົ້ນພົບຄວາມໝາຍທີ່ແທ້ຈິງຂອງຂ່າວປະເສີດ ຊຶ່ງປ່ຽນແປງຊີວິດຂອງຄົນທີ່ຕ້ອນຮັບພຣະເຢຊູຄຣິດເຈົ້າເຂົ້າມາໃນຊີວິດ ຂະນະດຽວກັນກໍ່ສ້າງການປ່ຽນແປງໃນແຜ່ນດິນຂອງພຣະເຈົ້າຜ່ານສັງຄົມ ແລະການຊົງສ້າງທັງໝົດ.

**ຄຳຖາມ**:

- ວິທີ່ແບບໃດດັ່ງກ່າວຂ້າງເທິງທີ່ເປັນແນວຄວາມທີ່ໃກ້ຄຽງກັບເຮົາຫຼາຍທີ່ສຸດ?
- ເຮົາໄດ້ແນວຄິດແລະມູມມອງແບບນີ້ມາໄດ້ຢ່າງໃດ ທ່ານເຕີບໂຕມາໃນສັງຄົມທີ່ຄິດແບບນີ້ບໍ່? ຫຼືໄດ້ອ່ານໜັງສືກ່ຽວກັບແນວຄິດແບບນີ້ ຫຼືໄດ້ຍິນມາຈາກນັກເທດສະໜາຫຼືມິດຊັ່ນນາລີບໍ່?
- ວິທີ່ຄິດ ວິທີ່ປະຕິບັດແບບໂລກແລະວັດທະນາທຳຮອມສະໄໝໄດ້ເຂົ້າມາສົ່ງອຳນາດຕໍ່ຄຣິສະຕະຈັກຂອງທ່ານບໍ່ ຢ່າງໃດ?.
- ມີພຣະຄຳພີຕອນໃດແດ່ທີທ້າທາຍແນວຄິດບາງຢາງທີ່ທ່ານກຳລັງຍຶດຖືຢູ່?.

**ເລື່ອງລາວຍິ່ງໃຫຍ່ແຫ່ງພຣະຄຳພີ.**

ເມື່ອໃດກໍ່ຕາມທີ່ເຮົາອ່ານພຣະຄຳພີ ຈຳເປັນຢ່າງຍິ່ງທີ່ເຮົາຈະຕ້ອງຖາມຕົວເອງວ່າ "ຂ້າພະເຈົ້າເກີດຄວາມສົງໄສຫຍັງແດ່ ຂະນະກຳລັງອ່ານພຣະຄຳຕອນນີ້ຫຼືຂໍ້ນີ້?" ຂ້າພະເຈົ້າກຳລັງເບິ່ງຫາຄຳເລົ່າໂລມແລະການຢືນຢັນຈາກພຣະເຈົ້າຫຼືບໍ່? ຂ້າພະເຈົ້າເບິ່ງຫາຂໍ້ຄວາມທີ່ຊ່ວຍຊີວິດຝ່າຍຈິດວິນຍານຂອງຂ້າພະເຈົ້າ? ຫຼືວ່າຂ້າພະເຈົ້າກຳລັງພະຍາຍາມເຮັດຄວາມເຂົ້າໃຈພຣະປະສົງຂອງພຣະເຈົ້າຕໍ່ໂລກທັ້ງໜ່ວຍນີ້ທີ່ພຣະອົງຊົງສ້າງ? ຫຼາຍປີກ່ອນໜ້ານີ້ ເວລາຂ້າພະເຈົ້າອ່ານພຣະຄຳພີ ຂ້າພະເຈົ້າບໍ່ໄດ້ຕັ້ງຄຳຖາມກ່ຽວກັບ "ໂລກ" ຫຼື "ການຊົງສ້າງ"ເລີຍ ຂ້າພະເຈົ້າພຣະເຈົ້າເພື່ອເປັນແນວທາງຝ່າຍຈິດວິນຍານສຳຫຼັບຕົວເອງແລະຄຣິສະຕະຈັກ ຕໍ່ມາເມື່ອຂ້າພະເຈົ້າດ້ວຍສາຍຕາແບບໃໝ່ກໍ່ໄດ້ຮັບປະສົບການທີ່ພິເສດຫຼາຍແລະມີພະລັງ ເພາະແຕ່ລະໜ້າທີ່ຂ້າພະເຈົ້າເປີດອ່ານ ຂ້າພະເຈົ້າສຳພັດໄດ້ວ່າພຣະເຈົ້າບໍ່ໄດ້ຊົງຫ່ວງໃຍ ສະເພາະຂ້າພະເຈົ້າເທົ່ານັ້ນ ແຕ່ຊົງຫ່ວງໃຍຄົນອື່ນໆ ແລະພຣະອົງກໍ່ຫ່ວງໃຍສິ່ງສິ່ງທີ່ພຣະອົງຊົງສ້າງທັ້ງໝົດ ຂ້າພະເຈົ້າເກີດຄວາມຍ້ຳເຕືອນວ່າຂ່າວປະເສີດແບບທີ່ຂ້າພະເຈົ້າເຕີບໂຕມາແລະຄວາມເຂົ້າໃຈພຣະເຢຊູເປັນ "ຜູ້ຊ່ວຍໃຫ້ລອດພົ້ນສ່ວນຕົວ"ເປັນຈອມເຈົ້ານາຍຢູ່ເໜືອນທຸກສິ່ງໃນຈັກກະວານ ການປຽ່ນຄວາມຄິດແບບນີ້ເປັນການທ້າທາຍສິ່ງທີ່ຂ້າພະເຈົ້າໃຫ້ຄວາມສຳຄັນຕ່າງໆ ທ້າທາຍຄຸນຄ່າທີ່ຂ້າພະເຈົ້າຍຶດຖື ລວມເຖິງທ້າທາຍວິທີດຳເນີນຊີວິດດ້ວຍ ແຕ່ຍິ່ງດຳເນີນຊີວິດດ້ວຍຄວາມຄິດໃໝ່ນີ້ ຂ້າພະເຈົ້າກໍ່ພົບວ່າເປັນການເດີນທາງທີ່ໜ້າຕື່ນເຕັ້ນ ເພື່ອຈະໄດ້ຮູ້ຈັກພຣະເຈົ້າດ້ວຍຄວາມຄິດໃໝ່ໂດຍສິ້ນເຊີງ ແລະຂ້າພະເຈົ້າຢາກເຊີນຊວນທ່ານໃຫ້ມາຮ່ວມເດີນທາງໄປດ້ວຍກັນ!

ໜັງສືເຫຼັ້ມນີ້ບໍ່ອາດເລົ່າເລື່ອງລາວຄອບຄຸມພຣະຄຳພີທຸກຕອນໄດ້ ຫຼືແມ້ແຕ່ລະເຫຼັ້ມໃນພຣະຄຳພີໄດ້ເລີຍ ແຕ່ຂະນະດຽວກັນ ການດຶງຫຼືນຳຂໍ້ພຣະຄຳພີພຽງບາງຂໍ້ບາງຕອນມາໃຊ້ດ້ວຍໃຫ້ເກີດຄວາມເຂົ້າໃຈຢ່າງຖືກຕ້ອງກ່ຽວກັບຂ່າວປະເສີດຂອງພຣະເຈົ້າ ແລະຫຼັກສາດສະໜາສາດຂອງເຮົາ ດັ່ງນັ້ນ ຂ້າພະເຈົ້າຈຶ່ງຈະໃຊ້ວິທີດຶງເອົາສາລະສຳຄັນຫຼັກໆ ທີ່ສອດຄ້ອງປະສານກັນຕະຫຼອດພຣະຄຳພີທັ້ງໝົດ ແລະເວົ້າເຖິງການຫ່ວງໃຍການຊົງສ້າງຂອງພຣະເຈົ້າຜ່ານທາງສາລະຫຼັກສຳຄັນໆ ທີ່ຂ້າພະເຈົ້າໄດ້ເລືອກມານີ້ຕັ້ງຢູ່ເທິ່ງພື້ນຖານຂອງສິ່ງຍິ່ງໃຫຍ່ທີ່ພຣະເຈົ້າໄດ້ຊົງກະທຳໃນພຣະຄຳພີ ເປັນວິທີການທີ່ພຣະອົງຊົງກະທຳການຢ່າງຊັດເຈນ ແລະສະເພາະເຈາະຈົງຕະຫຼອດທຸກຊ່ວງປະຫວັດສາດຂອງໂລກ ແລະເປັນອົງປະກອບຂອງຂ່າວປະເສີດ ຊຶ່ງປະກອບດ້ວຍຫ້າສາລະສຳຄັນດັ່ງຕໍ່ໄປນີ້ຄື:

- **ການຊົງສ້າງ**: ໃນຕອນເລີ່ມຕົ້ນແລະຍັງຄົງດຳເນີນຕໍ່ໄປ.
- **ພັນທະສັນຍາ**: ຕໍ່ໂນອາ ຕໍ່ມາອັບຣາຮາມ ໂມເຊ ແລະຊົນຊາດອິດສະຣະເອນ.
- **ພຣະເຢຊູຄຣິດ**: ຫົວໃຈແຫ່ງພຣະເຈົ້າ ແຜນແຫ່ງການຊ່ວຍກູ້
- **ຄຣິສະຕະຈັກ**: ຈາກຍຸກເພັນເຕຄອດຈົນເຖິງປັດຈຸບັນນີ້.
- **ການສະເດັດກັບມາແລະຄວາມສຳເລັດສົມບູນ**: ເມື່ອພຣະເຢຊູສະເດັດກັບມາໃນຖານະຜູ້ພິພາກສາແລະຜູ້ໄຖ່

ສະໄໝກ່ອນ ຖ້າທ່ານຖາມຂ້າພະເຈົ້າຜ່ານມາຂໍ້ຄວາມຂ້າງເທິງເຫຼົ່ານີ້ມີຄວາມໝາຍຢ່າງໃດ ຂ້າພະເຈົ້າກໍ່ຄົງຕອບທ່ານປະມານນີ້:

"ພຣະເຈົ້າສ້າງໂລກແລະສ້າງທຸກສິ່ງຢ່າງງົດງາມ ແຕ່ມະນຸດເຮັດໃຫ້ທຸກຢ່າງຍຸ່ງເຫຍີງ ດັ່ງນັ້ນພຣະເຈົ້າຈຶ່ງຊົງເລີ່ມໃໝ່ອີກຄັ້ງ ໂດຍການຊົງເລືອກຊົນຊາດອິດສະຣາເອນໃນຖານະປະຊາກອນຂອງພຣະອົງ ຄົນນເຫຼົ່ານີ້ກໍ່ເຮັດຜິດພາດອີກ ພຣະເຈົ້າຈຶ່ງຊົງປະທານພຣະເຢຊູມາເປັນຜູ້ຊ່ວຍໃຫ້ລອດພົ້ນ ຄວາມຕາຍແລະການຟື້ນຄືນພຣະຊົນຂອງພຣະອົງຊ່ວຍເຮົາໃຫ້ພົ້ນຈາກບາບແລະໄດ້ຮັບຊີວິດ ຄຣິສຕະຈັກໄດ້ຮັບການຊົງເອີ້ນໃຫ້ເປັນພະຍານ ແລະປະກາດຂ່າວປະເສີດນີ້ ຈົນກວ່າພຣະເຢຊູຈະສະເດັດກັບມາເພື່ອຮັບເຮົາໄປສະຫ້ວນ"

**ຄຳຖາມ**:

- ຫາກທ່ານຈະສະຫຼຸບໃຈຄວາມສຳຄັນຂອງຂ່າວປະເສີດໃນພຣະຄຳພີສັ້ນໆ ທ່ານຈະສະຫຼຸບວ່າຢ່າງໃດ ໃຫ້ຂຽນຂໍ້ຄວາມນີ້ລົງໄປດ້ວຍ?
- ໃຫ້ທ່ານຖາມຕົນເອງວ່າ "ຂ້າພະເຈົ້າໄດ້ຮັບຄວາມເຂົ້າໃຈແບບນີ້ມາຈາກໃສ"?
- ຄວາມເຂົ້າໃຈນີ້ມາຈາກຄຣິສະຕະຈັກຂອງທ່ານ ຫຼືການເປັນສາວົກຂອງທ່ານຫຼືຈາກໜັງສືແລະສື່ອື່ນໆໃດ?
- ໃຜ ແມ່ນຫຍັງບາງຢ່າງທີ່ມີອິດທິພົນຕໍ່ຄວາມເຂົ້າໃຈໃນຂ່າວປະເສີດຂອງທ່ານ?

ແມ້ກະທັ້ງປັດຈຸບັນນີ້ຂ້າພະເຈົ້າຍັງຄົງເຊື່ອເຕັມຫົວໃຈໃນຄວາມໝາຍຂອງຂ່າວປະເສີດແບບຂ້າງຕົ້ນນີ້ ແຕ່ກໍ່ພົບວ່າເນື້ອຫາບາງສ່ວນຂາດຫາຍໄປດ້ວຍ ດັ່ງນັ້ນ ຖ້າທ່ານຖາມຂ້າພະເຈົ້າຂະນະນີ້ ຂ້າພະເຈົ້າກໍ່ຄົງຈະຕອບແລະສະຫຼຸບໃຫ້ເຫັນພາບໃຫຍ່ແບບນີ້ແທ່ນ:

"ພຣະເຈົ້າຊົງສ້າງໂລກຊຶ່ງຮວມເຖິງມະນຸດຢ່າງງົດງາມຍອດຢ້ຽມ ເພື່ອພຣະອົງເອງຈະຊື່ນຊົມໃນການຊົງສ້າງ ມະນຸດຕັດສິນໃຈເລືອກທີ່ຈະເຫັນແກ່ຕົວ ແຕ່ພຣະເຈົ້າຜູ້ຊົງເຕັມໄປດ້ວຍຄວາມ

ຮັກກໍ່ຍັງຄົງມອບໂອກາດໃຫ້ແກ່ໂລກອີກຄັ້ງ ພຣະອົງຊົງໃຫ້ໂອກາດ ຊົງຊໍາລະໃຫ້ສະອາດແລະສ້າງຂຶ້ນໃໝ່ ສະຖາປະນາພັນທະສັນຍາແຫ່ງຄວາມສໍາພັນກັບມະນຸດ ແລະທຸກສິ່ງທີ່ພຣະອົງຊົງສ້າງເທິ່ງໜ່ວຍໂລກນີ້ ພຣະອົງຊົງເລືອກບຸກຄົນຄອບຄົວ ແລະຊົນຊາດເພື່ອເປັນແບບຢ່າງໃນການດໍາເນີນຊີວິດເທິ່ງແຜ່ນດິນຕາມແບບທີ່ພຣະອົງຊົງປະສົງນັ້ນ ແມ້ມະນຸດຈະດື້ດຶ່ງ ແຕ່ພຣະເຈົ້າບໍ່ຍ່ອມເລີກລາຫຼືໝົດຫວັງກັບມະນຸດ ພຣະອົງຊົງສົ່ງພຣະເຢຊູ ຊຶ່ງເປັນພຣະບຸດອົງດຽວລົງມາສູ່ໂລກ ຊ່ວຍກູ້ໂລກແລະຕາຍແທນເພື່ອທຸກຄົນແລະທຸກການຊົງສ້າງຈະໄດ້ຄືນດີກັບພຣະເຈົ້າ ເມື່ອພຣະເຢຊູຊົງຟື້ນຂຶ້ນມາຈາກຕາຍ ພຣະອົງກໍ່ສະແດງໃຫ້ເຫັນວ່າການຊົງສ້າງທັ້ງໝົດກໍ່ສາມາດໄດ້ຮັບການສ້າງຂຶ້ນໃໝ່ຢ່າງສົມບູນເໝືອນກັນ ຄຣິສະຕະຈັກທັ້ງຫຼາຍໄດ້ຮັບການຊົງເອີ້ນໃຫ້ເປັນພຣະກາຍຂອງພຣະເຢຊູເທິ່ງໂລກໜ່ວຍນີ້ ເພື່ອແບ່ງປັນຂ່າວດີທັ້ງຄໍາເວົ້າແລະການທະທໍາ ເປັນຂ່າວດີນໍາໄປສູ່ການຊົງສ້າງທັ້ງໝົດຂອງພຣະເຈົ້າ ເມືອພຣະເຢຊູສະເດັດກັບມາເຖິງອີກຄັ້ງ ພຣະອົງຈະເຮັດໃຫ້ທຸກຢ່າງສົມບູນ ໂດຍເປັນທັ້ງຜູ້ພິພາກສາແລະພຣະຜູ້ໄຖ່ ຈະຊົງຈັດທຸກສິ່ງທີ່ບໍ່ຖືກຕ້ອງ ຫຼືທີ່ໄປເປັນທົມ ຕໍ່ພຣະເຈົ້າ ໃນຂະນະດຽວກັນກໍ່ຈະຊົງສ້າງແລະຟື້ນຄືນຄືນ ແລະທຸກສິ່ງທຸກຢ່າງຂຶ້ນມາໃໝ່ອີກຄັ້ງ"

**ຄໍາຖາມ**:

- ທ່ານມີຄວາມຄິດເຫັນຢ່າງໃດແດ່ກັບບົດສະຫຼຸບຂ່າວປະເສີດອັນນີ້?
- ບົດສະຫຼຸບນີ້ມີສິ່ງທີ່ບໍ່ໄດ້ເປັນອົງປະກອບຂອບບົດສະຫຼຸບຂອງທ່ານບໍ່?
- ທານຮູ້ສຶກຢ່າງໃດແດ່ກຽ່ວກັບຄວາມຄິດທີກ້ວາງຂວາງກວ່ານີ້ ຫຼາຍກວ່າແຕ່ການນໍາຄວາມລອດພົ້ນໄປສູ່ດວງວິນຍານຂອງມະນຸດເທົ່ານັ້ນ?

### ໃຫ້ເຮົາພິຈາລະນາເລື່ອງລາວທີ່ຍິ່ງໃຫຍ່ຂອງພຣະເຈົ້າຜ່ານທາງເນື້ອຫາສາລະຫຼັກທັ້ງຫ້ານີ້ ມຸ່ງເນັ້ນໄປທີ່ແຜນການຂອງພຣະເຈົ້າທີ່ບໍ່ແມ່ນສະເພາະຕໍ່ມະນຸດເທົ່ານັ້ນ ແຕ່ສໍາຫຼັບການຊົງສ້າງທັ້ງໝົດ

1. **ການຊົງສ້າງ**
   ພຣະເຈົ້າຊົງສ້າງທຸກສິ່ງທຸກຢ່າງ ແລະການຊົງສ້າງທັ້ງໝົດກໍ່ສະທ້ອນໃຫ້ເຫັນເຖິງຄວາມຄິດສ້າງສັນ ພະລັງອໍານາດແລະຈຸດປະສົງຂອງພຣະອົງ ອັກຄະທູດເປົາໂລໄດ້ຍໍ້າເຕືອນກັບເຮົາໃນພຣະຄໍາ ໂຣມ 1:20 ວ່າສະພາບຂອງພຣະເຈົ້າ ເຊິ່ງຕາມມະນຸດເບິ່ງບໍ່ເຫັນ ຄືລິດທານຸພາບທີ່ຖາ້ວອນແລະເທວະສະພາບຂອງພຣະອົງ ກໍ່ໄດ້ປາກົດຊັດເຈນໃນສັບພະທຸກ

ສິ່ງທີ່ພຣະອົງໄດ້ຊົງສ້າງ ຫຼືກ່າວວ່າອີກຢ່າງໜຶ່ງ ຄືເຮົາສາມາດທຳຄວາມຮູ້ຈັກພຣະເຈົ້າໄດ້ຈາກຄວາມງົດງາມ ຄວາມຫຼາກຫຼາຍແລະຄວາມຊັບຊ້ອນຂອງສິ່ງທີ່ຢູ່ເທິ່ງໂລກໜ່ວຍນີ້ເຊິ່ງຂະນະທີ່ເປົ່າໂລ ຂຽນພຣະຄຳຕອນນີ້ໂລກກໍ່ຕົກຢູ່ໃນຄວາມບາບແລະເຊືອມລົງແລ້ວ ສະນັ້ນ ການຊົງສ້າງທັ້ງຫຼາຍກໍ່ຍັງຄົງງົດງາມພຽງພໍທີ່ຈະບອກເຮົາກ່ຽວກັບພຣະເຈົ້າ ຄຣິສະຕຽນບາງຄົນບອກວ່າຄວາມຈິງແລ້ວ ພຣະເຈົ້າຊົງຂຽນໜັງສືສອງເຫຼັ້ມ ຄືຂຽນທຸກພະສັບສິ່ງໃນທຳມະຊາດແລະໄດ້ຂຽນພຣະຄຳພີ ແລະທັ້ງສອງເຫຼັ້ມນີ້ກໍ່ບອກເຮົາກ່ຽວກັບພຣະເຈົ້າອົງນີ້ ເຮົາຈຳເປັນຕ້ອງເຂົ້າໃຈທັ້ງທຳມະຊາດແລະພຣະຄຳພີເພື່ອຈະເຂົ້າໃຈພຣະອົງຢ່າງແທ້ຈິງ.

ໃນປະຖົມມະການບົດທີ່ 1 ພຣະເຈົ້າໄດ້ຊົງກ່າວຕື່ມອີກວ່າ “ດີ” ແລະເມື່ອການຊົງສ້າງທັ້ງໝົດສຳເລັດທັ້ງໝົດກ່າວວ່າ “ລ້ວນແຕ່ດີຍອດຍ້ຽມ” ນີ້ໝາຍຄວາມວ່າຄຳວ່າ “ຍອດຍ້ຽມ” ນັ້ນໝາຍຄວາມວ່າລວມທຸກການຊົງສ້າງ ບໍ່ແມ່ນສະເພາະມະນຸດ ແຕ່ພຽງຢ່າງດຽວເທົ່ານັ້ນ ພຣະເຈົ້າຊົງຮັບຮອງທຸກສິ່ງ ບໍ່ວ່າຈະເປັນດວງເດືອນ ດວງດາວ ດິນ ນໍ້າ ຕົ້ນໄມ້ ນົກ ແລະສັດທັ້ງຫຼາຍ ຊົງເບິ່ງເຫັນວ່າດ້ວຍຄວາມຊື່ນຊົມຍິນດີໃນສິ່ງເຫຼົ່ານີ້ ໃນພຣະຄຳເພງສັນລະເສີນ ໃນຜູ້ເຜຍພຣະວາຈະນະ ແລະຕົວພຣະເຍຊູເອງກໍ່ມັກຈະໃຊ້ພາບທຳມະຊາດໃນການສະແດງໃຫ້ເຫັນເຖິງຄວາມຈິງ ແລະ ວິທີການດຳເນີນຊີວິດ ເຮົາຈະເຫັນວ່າພຣະເຈົ້າຊົງເວົ້າກັບເຮົາກ່ຽວກັບຕົວພຣະອົງເອງຜ່ານທາງການຊົງສ້າງຂອງພຣະອົງ ແຕ່ເຮົາກໍ່ຕ້ອງລະມັດລະວັງທີ່ຈະບໍ່ຖືກທົດລອງ ໂດຍໄປຂາບໄຫວບູຊາສິ່ງທີ່ພຣະເຈົ້າສ້າງແທນທີ່ພຣະເຈົ້າພຣະຜູ້ສ້າງ ຄົນບາງກຸ່ມເບິ່ງເຫັນສັນຍານບາງຢ່າງໃນທຳມະຊາດ ແລະໄປຂາບໄຫວ້ ເຊິ່ງຖືເປັນການນັບຖືຮູບເຄົາລົບພໍຢ່າງໜຶ່ງ ເພື່ອຈະເກີດເຫດການແບບນີ້ ເຮົາຈະຕ້ອງຊ່ວຍກັນເບິ່ງແຍງໃຫ້ສິ່ງທີ່ພຣະເຈົ້າຊົງສ້າງ “ງົດງາມຍອດຍ້ຽມ”ຕໍ່ໄປຢ່າງຍັງຢືນ.

ປະກາດຕໍ່ໄປທີ່ເຮົາຕ້ອງເນັ້ນໜັກໃຫ້ຊັດເຈນ ກໍ່ຄືໂລກແລະທຸກສິ່ງບໍ່ໄດ້ຖືກສ້າງຂຶ້ນມາເພື່ອມະນຸດ ແຕ່ເພື່ອພຣະເຈົ້ານັກເທດຫຼາຍຄົນມັກຈະບອກວ່າພຣະເຈົ້າຊົງສ້າງສິ່ງຕ່າງໆໃຫ້ມະນຸດໄດ້ຊື່ນຊົມ ແຕ່ເພງສັນລະເສີນ24:1 ໄດ້ລະບຸຊັດເຈນວ່າ “ໂລກກັບຊັບພະທຸກສິ່ງໃນໂລກເປັນຂອງພຣະເຈົ້າຢາເວ ທັ້ງທົ່ວທຸກບອນກັບບັນດາຜູ້ທີ່ຢູ່ໃນທົ່ວທຸກບ່ອນ” ໃນພຣະຄຳພີໃໝຍັງບອກເພີ່ມເຕີ່ມອີກວ່າທຸກສິ່ງຖືກສ້າງຂຶ້ນໂດຍ ແລະເພື່ອພຣະເຍຊູຄຣິດ (ໂກໂລຊາຍ 1:15-16) ຖ້າຫາກມີໃຜຈັກຄົນໃຫ້ເຮົາຢືມສິ່ງທີ່ສະຫງ່າງາມແລະຊົງມີຄຸນຄ່າ ໜ້າທີ່ຂອງເຮົາຄືຈະຕ້ອງທະນຸທະໜອມສິ່ງນັ້ນ ແລະເມື່ອເຖິງເວລາກໍ່ຄືໃຫ້ແກ່ຄົນນັ້ນ ໂດຍບໍ່ມີຕຳນິຫຼືເສຍຫາຍ ພຣະເຈົ້າຕ້ອງການໃຫ້ເຮົາມີຄວາມສຸກເທິ່ງໂລກໜ່ວຍນີ້ ແລະທຸກສິ່ງເທິ່ງໂລກໜ່ວຍນີ້ ແຕ່ສິ່ງເຫຼົ່ານີ້ເປັນຂອງພຣະເຈົ້າສະເໝີ ບໍ່ໄດ້ເປັນຂອງເຮົາ ແລະເຮົາຕ້ອງຕອບພຣະເຈົ້າໃນສິ່ງທີ່ກະທຳຕໍ່ຊັບພະສິ່ງທີ່ພຣະອົງຊົງສ້າງ ເມື່ອຊົນຊາດອິສຣາເອນໄດ້ຮັບແຜ່ນດິນແຫ່ງພຣະສັນຍາ ພຣະເຈົ້າຊົງບອກຊັດເຈນວ່າບໍ່ແມ່ນແຜ່ນດິນຂອງພວກເຂົາ ແຕ່ເປັນຂອງພຣະເຈົ້າ ພວກເຂົາເປັນແຕ່ “ຄົນຕ່າງຊາດ

ແລະຕ່າງຖິ່ນ" ໃນ "ແຜ່ນດິນຂອງເຮົາ" (ລະບຽບພວກເລວີ 25:23 ດັ່ງນັ້ນ ເຮົາຈະຕ້ອງ ປະຕິບັດຕໍ່ທຳມະຊາດ ສັດປ່າ ສັດລ້ຽງ ແລະພື້ນແຜນດິນດ້ວຍຄວາມເຄົາລົບ ລະນຶກວ່າ ສິ່ງເຫຼົ່ານີ້ ເປັນຂອງພຣະເຈົ້າ.

ຄວາມຈິງສຳຄັນອີກປະການທີ່ພຣະຄຳພີ ໄດ້ເວົ້າເຖິງກ່ຽວກັບການຊົງສ້າງຂອງພຣະເຈົ້າ ນັ້ນ ມີຄວາມໝາຍເຖິງມະນຸດດ້ວຍ ມະນຸດເຮົາຕ່າງກໍ່ເປັນໜຶ່ງໃນການຊົງສ້າງຄືກັນ ພຣະຄຳພີ ປະຖົມມະການ 1:26-28 ໄດ້ອະທິບາຍວ່າທັ້ງຊາຍແລະຍິ່ງຖືກສ້າງຂຶ້ນຕາມ "ແບບຢ່າງ" ຂອງພຣະເຈົ້າ ເຊິ່ງອາດຈະເປັນປະໂຫຍດທີ່ມີການເວົ້າເຖິງຫຼືເທດສະໜາ ຫຼາຍທີ່ສຸດປະໂຫຍດໜຶ່ງ ແລະຄົນກໍ່ອະທິບາຍກັນໄປຕ່າງໆ ນາໆ ຕາມຄວາມເຂົ້າໃຈ ແລະ ຮູບແບບການຕີຄວາມຂອງຕົນເອງ
ແຕ່ໜ້ອຍຄົນມັກທີ່ຈະເຂົ້າໃຈຄຳວ່າພຣະສາຍຍາຂອງພຣະເຈົ້າຕາມຮາກຖານຂອງພຣະ ຄຳພີ ພຣະສາຍຍານັ້ນໝາຍເຖິງ ການສະທ້ອນພຣະລັກສະນະແລະພະລັງອຳນາດ ຂອງພຣະເຈົ້າ ພຣະເຈົ້າຊົງນຳເຮົາມາຢູ່ທາມກາງການຊົງສ້າງ ເພື່ອສະທ້ອນຄວາມປາດ ສະໜາແລະຈຸດປະສົງຂອງພຣະອົງທີ່ມີຕໍ່ "ປາໃນທະເລ ນົກໃນອາກາດ ແລະທຸກສິ່ງທີ່ມີ ຊີວິດ" ນີ້ບໍ່ແມ່ນການອະນຸຍາດໃຫ້ເຮົາທຳລາຍຫຼືເອົາປຽບການຊົງສ້າງຕ່າງໆ ແຕ່ຊົງເອີ້ນ ໃຫ້ເຮົາດູແລະປົກປ້ອງ ເພື່ອສິ່ງທີ່ຊົງສ້າງທັ້ງຫຼາຍຈະຍົກຍ່ອງສັນລະເສີນພຣະນາມ ຂອງພຣະເຈົ້າດ້ວຍ ນັ້ນຄືຄວາມໝາຍຂອງຄຳວ່າ "ມີອຳນາດ"ແລະ "ຄຸ້ມຄອງ" (ປະຖົມມະ ການ 1:28 ) ບໍ່ແມ່ນການຄຸ້ມຄອງຢ່າງເຫັນແກ່ຕົວ ແຕ່ເປັນການສຳແດງຄວາມສັດຊື່ ແລະອ່ອນໂຍນຂອງພຣະເຈົ້າຕໍ່ການຊົງສ້າງເຫຼົ່ານັ້ນ.

ເຮົາເຫັນພາບຊັດເຈນຫຼາຍຂຶ້ນ ເມື່ອພິຈາລະນາພຣະຄຳປະຖົມມະການບົດທີ່ 2 ໃນຂໍ້ທີ່ 7 ນັ້ນພຣະເຈົ້າຊົງສ້າງມະນຸດຄົນທຳອິດຈາກຜົ່ງຂີ້ດິນ ຊື່ ອາດາມ ນັ້ນຄືກັບຄຳໃນພາສາ ເຮັບເລີ *Adamah* ເຊິ່ງໝາຍເຖິງດິນຫຼືແຜ່ນດິນ ດັ່ງນັ້ນມະນຸດຈຶ່ງເປັນສ່ວນໜຶ່ງຂອງການ ຊົງສ້າງ ບໍ່ໄດ້ແຍກຕ່າງຫາກອອກຈາກສິ່ງທີ່ພຣະເຈົ້າຊົງສ້າງແຕ່ຢ່າງໃດ ແລະການເປັນ ຜູ້ນຳຫຼືການຄຸ້ມຄອງນັ້ນມາຈາກລະດັບດຽວກັບການຊົງສ້າງ ບໍ່ໄດ້ຢູ່ເໜືອກວ່າ ເໝືອນ ກັນ ໃນຂໍ້ທີ່15 ນັ້ນ ພຣະເຈົ້າສັ່ງອາດາມເຂົ້າໄປໃນສວນ ""ເພື່ອເຮັດວຽກແລະດູແລສວນ ນັ້ນ" ເຊິ່ງອາດຈະຕີຄວາມໄດ້ວ່າໃຫ້ຮັບໃຊ້ແລະດູແລສວນ ພຣະເຈົ້າຊົງເອີ້ນເຮົາທັ້ງຜູ້ຍິງ ແລະຜູ້ຊາຍໃຫ້ສະທ້ອນພຣະລັກສະນະຂອງພຣະເຈົ້າ ໂດຍການເບິ່ງແຍງເອົາໃຈໃສ່ການ ຊົງສ້າງ ນີ້ຄືພຣະບັນຊາເລີ່ມຕົ້ນ ຂອງພຣະເຈົ້າທີ່ປະກົດໃນພຣະຄຳພີ ເປັນໜ້າທີທຳອິດ ຂອງມະນຸດ.

ຄຳຖາມ

- ທ່ານຄິດວ່າວັດຖຸສິ່ງຂອງຕ່າງໆ ມີຄຸນຄ່ານ້ອຍຊຳໃດກວ່າລັກສະນະທາງຈິດວິນຍານບໍ່?
- ເປັນຫຍັງທ່ານຈຶ່ງຄິດແບບນັ້ນ ແລະມີຫຍັງແດ່ມີສ່ວນເຮັດໃຫ້ທ່ານຄິດແບບນີ້?
- ທ່ານຄິດວ່າທຸກຢ່າງຢູ່ເທິງໂລກໃບນີ້ ລວມເຖິງແມ່ນ້ຳ ແຮ່ທາດ ປາໄມ້ ສັດປາລ້ວນເປັນຂອງພຣະເຈົ້າ ແລະຖືກສ້າງຂຶ້ນໂດຍ ແລະເພື່ອພຣະເຢຊູບໍ່?.
- ທ່ານຄິດວ່າຄຳໃດແດ່ຕໍ່ໄປນີ້ກ່ຽວຂ້ອງບົດບາດໜ້າທີ່ຢ່າງໃດແດ່ຕໍ່ການຊົງສ້າງຂອງພຣະເຈົ້າ?.
- ທ່ານຄິດວ່າຄຳໃດແດ່ຕໍ່ໄປນີ້ກ່ຽວຂ້ອງກັບບົດບາດໜ້າທີ່ຂອງມະນຸດຕໍ່ການຊົງສ້າງ ແລະເຮັດໃຫ້ບໍ່ຄິດ ເຊັ່ນ ຄົນສ່ວນ ພານໂລງ ຄົນຍາມ ຄົນຮັບໃຊ້ ຜູ້ດູແລຈັດການ?

2. **ພຣະທະສັນຍາ**

ຫຼັງຈາກທີ່ມະນຸດໄດ້ລົ້ມລົງໃນຄວາມບາບແລະເລືອກທີ່ຈະເຫັນແກ່ຕົວ ພຣະເຈົ້າບໍ່ໄດ້ຊົງປະຖິ້ມການຊົງສ້າງທັງຫຼາຍ ພຣະເຈົ້າຊົງພຣະເມດຕາ ຈຶ່ງຊົງຮື້ຟື້ນຟູຄວາມສຳພັນຂຶ້ນໃໝ່ແລະຊ່ວຍກູ້ເຮົາ ຕັ້ງທຳອິດນັ້ນຜ່ານທາງເລື່ອງລາວຂອງໂນອາ ຕໍ່ມາກໍ່ຜ່ານເລື່ອງລາວຂອງແຜ່ນດິນແລະຊົນຊາດອິດສະຣາເອນ ຄວາມບາບຂອງມະນຸດທຳລາຍຄວາມສຳພັນກັບພຣະເຈົ້າ ກັບມະນຸດດ້ວຍກັນເອງ ແລະກັບການຊົງສ້າງທັງໝົດ ພຣະເຈົ້າບໍ່ສາມາດດຳເນີນໄປກັບມະນຸດໃນສວນແຫ່ງການຊົງສ້າງໄດ້ ຄວາມສຳພັນລະຫວ່າງມະນຸດກັນເອງກໍ່ເສຍຫາຍໄປ ນຳໄປສູ່ຄວາມຊົ່ວຮ້າຍຫຼວງຫຼາຍ ຄື ຄວາມໂລບພາ ການຢຽບຢ່ຳເຊື້ອຊາດ, ການຢຽບຢ່ຳເພດ ວັດທິຊາດນິຍົມ ແລະອື່ນໆ ອີກຫຼວງຫຼາຍ ຄວາມສຳພັນລະຫວ່າງເຮົາກັບການຊົງສ້າງກໍ່ຜິດແລະພັງທະລາຍລົງຄືກັນ ອາດາມຜູ້ຊຶ່ງນຳການສາບແຊງມາສູ່ແຜ່ນດິນ ເຮັດໃຫ້ເກີດໜາມແລະໄມ້ມີໜາມຂຶ້ນ ຕໍ່ມາໃນພຣະຄຳໂຮເຊຢາ 4:1-3 ເອງກໍ່ໄດ້ອະທິບາຍຊັດເຈນວ່າຈາກຄວາມບາບທີ່ມະນຸດເຮັດສິ່ງຜິດຕໍ່ສັດ, ນົກ ແລະແຜ່ນດິນກໍໂສກເສົ້າເພາະຄວາມບາບນັ້ນ.

ພັນທະສັນຍາຄືຄຳຕອບຂອງພຣະເຈົ້າຕໍ່ບັນຫາເຮົາກໍ່ຂຶ້ນ ສິ່ງຜິນກະທົບຕໍ່ທັງມະນຸດແລະໂລກໜ່ວຍນີ້ ເລື່ອງລາວແຫ່ງເຮືອໂນອານັ້ນ ພຣະເຈົ້າຊົງຕອບສະໜອງຕໍ່ຄວາມບາບດ້ວຍການພິພາກສາ ການໄຖ່ ແລະພັນທະສັນຍາພຣະອົງບໍ່ໄດ້ປະຖິ້ມໃຫ້ສິ່ງສະຫງ່າງາມທີ່ພຣະອົງຊົງສ້າງເຫຼົ່ານັ້ນ ແຕ່ມີສັດແລະນົກເກືອບທຸກຊະນິດ ເຖິງ7ຄູ່ແລະສັດທີ່ບໍ່ສະອາດຫຼືທີ່ຫ້າມກິນຢ່າງໜ້ອຍ

ໜຶ່ງຄູ່ ພຣະເຈົ້າບໍ່ໄດ້ປະສົງໃຫ້ສິ່ງມີຊີວິດເຫຼົ່ານີ້ຢູ່ເພື່ອມະນຸດ ແຕ່ເພື່ອ "ໃຫ້ຄວາມຈຳນວນແຕ່ລະຊະນິດຂອງສັດຍັງມີຊີວິດຢູ່ທົ່ວໂລກຕໍ່ໄປ" (ປະຖົມມະການ 7:3)

ຫຼືເວົ້າອີກໃນໜຶ່ງ ຄືພຣະເຈົ້າບໍ່ໄດ້ຊົງໃຫ້ຄວາມສຳຄັນກັບສະເພາະມະນຸດເທົ່ານັ້ນ ແຕ່ຊົງຊ່ອຍກູ້ສິ່ງມີຊີວິດທີ່ພຣະອົງຊົງສ້າງຄືກັນ.

ຫຼັງຈາກເຫດການນ້ຳຖ້ວມໂລກ ພຣະເຈົ້າຊົງເຮັດພັນທະສັນຍາດ້ວຍລັກສະນະຄື ຮຸ່ງກິນນ້ຳ ໃນປະຖົມມະການບົດທີ່ 9 ໄດ້ກ່າວຍ້ຳຫຼາຍຄັ້ງວ່ານີ້ບໍ່ແມ່ນພັນທະສັນຍາທີ່ເຮັດກັບໂນອາ ແລະລູກຫຼານຂອງເຂົາເທົ່ານັ້ນ ແຕ່ກັບ "ສິ່ງມີຊີວິດທັງໝົດເທິງໂລກໜ່ວຍນີ້" ດ້ວຍ ໃນຂໍ້ 13 ຍັງເວົ້າວ່າຊັດເຈນວ່າ  "ພັນທະສັນຍາລະຫວ່າງເຮົາກັບໂລກ" ພຣະເຈົ້າຊົງສະຖາປະນາຄວາມສຳພັນຜ່ານທາງພັນທະສັນຍາແຫ່ງການຊ່ອຍກູ້ກັບທຸກສິ່ງຢູ່ກັບໜ່ວຍໂລກ ຕໍ່ມາ ເລື່ອງລາວໃນພຣະຄຳພີເດີມ ເມື່ອພຣະເຈົ້າກໍ່ຊົງເຮັດພັນທະສັນຍາກັບອັບຣາຮາມແລະກັບໂມເຊ ກໍ່ຢູ່ເທິງພື້ນຖານຂອງຄວາມສຳພັນຢ່າງລຶກຊຶ້ງທີ່ພຣະເຈົ້າມີຕໍ່ພື້ນແຜ່ນດິນ ແລະການຊົງສ້າງທັງຫຼາຍດ້ວຍກັນ ເຮົາຈະເຫັນຄວາມຫວ່ງໃຍຂອງພຣະເຈົ້າໄດ້ຈາກກົດລະບຽບຕ່າງໆ ມອບໃຫ້ໂມເຊກ່ຽວກັບການດູແລສັດ ທັ້ງທີ່ເປັນສັດປ່າແແລະສັດລ້ຽງ ແລະເທດສະການສະເຫຼີມສະຫຼອງທາງສາດສະໜາຂອງຊົນຊາດອິສຣາເອນ ທີ່ມີຄວາມກ່ຽວຂ້ອງສຳພັນກັບລັງຫວະແຫ່ງລະດູການ.

ຄວາມບາບໄດ້ທຳລາຍ ແລະແຍກເຮົາອອກຈາກຄວາມສຳພັນກັບພຣະເຈົ້າ ມະນຸດດ້ວຍກັນເອງແລະກັບການຊົງສ້າງທັ້ງຫຼາຍ ຂະນະດຽວກັນ ຄວາມຮັກຂອງເຮົາຜ່ານທາງພັນທະສັນຍາກໍ່ເປັນໂຕເຊື່ອມທັ້ງສາມສິ່ງນີ້ ນຳການຄືນດີກັບມາອີກຄັ້ງ ເມື່ອເຮົາອ່ານເລື່ອງລາວຂອງຊົນຊາດອິສຣາເອນ ຈະພົບວ່າພຣະເຈົ້າ ມະນຸດ ແລະແຜ່ນດິນນັ້ນມີຄວາມສຳພັນກັນຢ່າງເລິກເຊິງ ໃນພຣະຄຳພີເດີມນັ້ນ ແທບຈະເອີ້ນໄດ້ວ່າມະນຸດບໍ່ອາດຈະມີຄວາມສຳພັນທີ່ທີ່ດີກັບພຣະເຈົ້າໄດ້ຫາກບໍ່ມີຄວາມສຳພັນທີ່ດີກັບແຜ່ນດິນຄືກັນ ແມ້ກະທັ້ງໃນຊ່ວງເວລາທີຄົນຂອງພຣະເຈົ້າຖືກກວາດຕ້ອນໄປຍັງປະເທດບາບີໂລນ ພຣະເຈົ້າກໍ່ຊົງສັ່ງໃຫ້ພວກເຂົາຢັ່ງຮາກ ໂດຍການປູກພືດພັກແລະກິນອາຫານທີ່ໄດ້ຈາກເຮືອໃນສ່ວນຂອງຕົນ (ເຢເຣມີ 29:4-7) ແມ້ວ່າໃນພັນທະສັນຍາໃໝ່ຜ່ານທາງພຣະເຢຊູ ເບິ່ງເໝືອນວ່າຈະເປັນການຊ່ອຍໃຫ້ລອດພົ້ນ ໃນລະດັບບຸກຄົນຫຼາຍກວ່າ ແຕ່ເຮົາກໍ່ຈະພົບຄວາມຈິງທີ່ວ່າພຣະເຢຊູເອງກໍ່ຊົງໃຫ້ການຊົງສ້າງເປັນອົງປະກອບສຳຄັນໃນພັນທະກິດທີ່ພຣະອົງຊົງເຮັດ ດັ່ງນັ້ນ ຄວາມສຳພັນລະຫວ່າງເຮົາກັບພຣະເຢຊູຈຶ່ງສົມຄວນເຊື່ອມໂຍງກ່ຽວຂ້ອງກັບແຜ່ນດິນທີ່ພຣະອົງນຳເຮົາໃຫ້ມາຢູ່ອາໄສຄືກັນ.

**ຄໍາຖາມ**:

- ໂຕທ່ານເອງມີຄວາມສໍາພັນກັບແຜ່ນດິນທີ່ທ່ານກໍາລັງອາໄສຢູ່ຢ່າງໃດແດ່?
- ທ່ານຄິດວ່າພຣະເຈົ້າຊົງນໍາທ່ານໃຫ້ມາຢູ່ທີ່ນີ້ແລະໃຫ້ໜ້າທີຄວາມຮັບຜິດຊອບເບິ່ງແຍງດິນແດນທີ່ທ່ານກໍາລັງຢູ່ອາໄສບໍ່?
- ເປັນຫຍັງພັນທະສັນຍາແຫ່ງການຊ່ວຍກູ້ຂອງພຣະເຈົ້າຈຶ່ງປົກຄອງເຖິງສິ່ງທີ່ພຣະອົງຊົງສ້າງທັງໝົດ ບໍ່ແມ່ນສະເພາະພັນທະສັນຍາທີ່ຈະຊ່ວຍກູ້ສະເພາະມະນຸດເທົ່ານັ້ນ?
- ການຮັບຮູ້ອັນນີ້ເຮັດໃຫ້ທ່ານເບິ່ງສັດຕ່າງໆ ນົກ ປາ ປ່າໄມ້ ທະເລ ແລະທຸກສິ່ງເທິງໂລກໜ່ວຍນີ້ແຕກຕ່າງຈາກເດີມບໍ່?

3. **ພຣະເຢຊູຄຣິດ**

ຫົວໃຈຂອງເລື່ອງລາວຍິ່ງໃຫຍ່ແຫ່ງພຣະຄໍາພີນັ້ນຄືການທີ່ພຣະເຈົ້າຊົງພຣະບຸດອົງດຽວລົງມາເກີດເທິງໂລກ ໃຊ້ຊີວິດເໝືອນມະນຸດ ສອນ ສະແດງໃຫ້ເຫັນຂ່າວປະເສີດ ຕາຍຢູ່ເທິງໄມ້ກາງແຂນແລະຊົງຄືນພຣະຊົນ ນໍາຄວາມລອດພົ້ນແລະການໄຖ່ມາສູ່ທັງມະນຸດແລະການຊົງສ້າງທັງຫຼາຍ ເຮົາຄຸ້ນເຄີຍກັບການຮັບຮູ້ວ່າພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຂອງເຮົາ ແລະບາງທີກໍ່ລືມຫຼືລະເລີຍຄວາມຈິງທີ່ວ່າພຣະອົງກໍ່ຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງການຊົງສ້າງທັງໝົດຂອງພຣະອົງ.

ໃນພຣະຄໍາໂກໂລຊາຍ 1:15-20 ອັກຄະທູດເປົາໂລໄດ້ອະທິບາຍວ່າພຣະເຢຊູຊົງເປັນຫຼາຍກວ່າແດ່ຜູ້ໄຖ່ມະນຸດທັງຫຼາຍ ພຣະເຢຊູຊົງເປັນຕົ້ນກໍາເນີດຂອງການຊົງສ້າງທັງໝົດ (ທຸກສິ່ງຖືກສ້າງຂຶ້ນໂດຍພຣະອົງແລະເພື່ອພຣະອົງ ຂໍ້ທີ 16) ແລະຊົງເປັນຜູ້ຄໍ້າຈູນດູແລການຊົງສ້າງ (ທຸກສິ່ງຖືກຍຶດເຂົ້າດ້ວຍກັນໂດຍພຣະອົງ ຂໍ້ທີ 17) ແລະຊົງເປັນພຣະຜູ້ໄຖ່ຂອງການຊົງສ້າງ (ເພາະວ່າພຣະເຈົ້າພໍພຣະໄທທີ່ຈະໃຫ້ຄວາມບໍລິບູນທັງໝົດດໍາລົງຢູ່ໃນພຣະອົງ ແລະໂດຍພຣະອົງ ພຣະເຈົ້າຊົງໃຫ້ທຸກສິ່ງຄືນດີກັບພຣະອົງເອງ ບໍ່ວ່າສິ່ງນັ້ນຈະຢູ່ເທິງແຜ່ນດິນໂລກຫຼືຢູ່ເທິງສະຫວັນ ໂດຍຊົງເຮັດໃຫ້ເກີດສັນຕິພາບໂດຍພຣະໂລຫິດແຫ່ງກາງແຂນຂອງພຣະອົງ ຂໍ້ທີ19-20) ນີ້ຄືເລື່ອງລາວທີ່ແສນວິເສດ ພຣະເຢຊູຜູ້ຊຶ່ງເປັນພຽງຊ່າງໄມ້ໃນເມືອງນ້ອຍແຫ່ງໜຶ່ງ ເກີດໃນຄອບຄົວທຸກຍາກແລະແມ່ທີ່ບໍ່ໄດ້ແຕ່ງງານ ແລະພຣະເຢຊູຄືນດຽວກັນກໍ່ເປັນຜູ້ສ້າງດວງດາວທັງໝົດໃນຈັກກະວານ ຊົງສ້າງພູເຂົາ ປ່າໄມ້ ແນວປະກາຮັງ ຊົງປະທານລົມຫາຍໃຈແກ່ປ່າວານ ຊ້າງ ລວມເຖິງມະນຸດດ້ວຍ ຍິ່ງກວ່ານັ້ນ ຊົງເປັນຜູ້ທີ່ຍຶດທຸກຢ່າງເຂົ້າກັນ ພຣະເຢຊູຍັງຊົງດໍາເນີນພຣະລະກິດຕໍ່ໄປຈົນເຖິງທຸກວັນນີ້ ພຣະອົງຊົງເປັນຜູ້ຄໍ້າຈູນ ດັ່ງນັ້ນ ໃນຊ່ວງເວລາທ້າທາຍກ່ຽວກັບຄວາມຍັ່ງຍືນຢູ່ລອດຂອງຊີວິດເທິງໂລກໜ່ວຍນີ້ ເຮົາຈຶ່ງຄວນຫັນໄປຫາພຣະອົງ ປະການສຸດທ້າຍທີ່ເຮົາຮຽນຮູ້ກໍ່ຄືການຕາຍແລະຟື້ນຄືນມາຈາກຕາຍຂອງພຣະອົງ ເປັນການສໍາແດງ

ວ່າພຣະອົງຊົງເປັນພຣະຜູ້ໄຖ່ສຳຫຼັບ "ທຸກສິ່ງ"ທັ້ງເທິ່ງໂລກໜ່ວຍນີ້ແລະສະຫວັນ ຫຼືອາດເວົ້າໄດ້ວ່າ ງານແຫ່ງການຊ່ວຍກູ້ແລະໄຖ່ຂອງພຣະເຍຊູຢູ່ເທິ່ງໄມ້ກາງແຂນນັ້ນ ເຮັດໃຫ້ຄວາມສຳພັນທີ່ຫັກສະບັ້ນ ເພາະຄວາມບາບໄດ້ຮັບການຢຽວຢາໃຫ້ດີ ເໝື່ອນເດີມອີກຄັ້ງ ການເສຍສະລະຂອງພຣະອົງບໍ່ພຽງພໍ ແຕ່ຊ່ວຍໃຫ້ມະນຸດໄດ້ຮັບການໄຖ່ເທົ່ານັ້ນ ແຕ່ຍັງນຳໄປສູ່ການປ່ຽນແປງໃນທາງທີ່ດີຂື້ນພາຍໃນສັງຄົມ ແລະການຊົງສ້າງຂອງພຣະເຈົ້າກໍ່ໄດ້ຮັບການສ້າງຂຶ້ນໃໝ່ ນີ້ຄືເລື່ອງລາວທີ່ພິເສດຢ່າງແທ້ຈິງ.

ຫາກເຮົາພິຈາລະນາພຣະຄຳພີໃໝ່ຢ່າງຖ້ວນຖີ່ ກໍ່ຈະພົບງານທີ່ພຣະເຍຊູຊົງກະທຳໃນທຸກມມິຕິ ເມື່ອພຣະອົງຊົງປະສູດ ພຣະຄຳໂຍຮັນບອກວ່າ "ພຣະວາທະຊົງເກີດເປັນເນື້ອໜັງ" 1:14) ຄຳວ່າ "ເນື້ອໜັງ" ບົ່ງບອກຄວາມໝາຍບາງຢ່າງແກ່ເຮົາ ໂຍຮັນບໍ່ໄດ້ຂຽນວ່າພຣະວາທະຊົງເກີດເປັນມະນຸດ (*Anthropos* ເປັນພາສາກຣີກ) ແຕ່ເລືອກໃຊ້ຄຳວ່າເນື້ອໜັງ (*sarx* ໃນພາສາກຣີກ) ຊຶ່ງບໍ່ໄດ້ໝາຍຄວາມເຖິງມະນຸດເທົ່ານັ້ນ ແຕ່ໝາຍເຖິງສິ່ງມີຊີວິດທຸກຊະນິດອັນທີ່ຈິງຄຳນີ້ເປັນຄຳກຣີກໂບຮານ ມີຄວາມໝາຍລວມເຖິງ ຊີ້ນສັດ (ເລືອດສັດ) ຄືກັນ ເຊິ່ງອາດຈະເປັນການບອກເປັນຄວາມໝາຍເຖິງ ການສະລະພຣະຊົນຊີບຂອງພຣະເຍຊູ ເປັນຜູ້ໄຖ່ຄວາມຄິດຂອງພຣະເຍຊູເປັນຜູ້ໄຖ່ຄວາມຜິດບາບຂອງໂລກ ເປັນແກະບູຊາຂອງພຣະເຈົ້າ ພຣະເຈົ້າຊົງຫ່ວງໃຍຝີພຣະຫັດຂອງພຣະອົງ ດັ່ງນັ້ນ ການລົງມາບັງເກີດຂອງພຣະເຍຊູນັ້ນ ຈຶ່ງບໍ່ເພື່ອມະນຸດສະໂລກເທົ່ານັ້ນແຕ່ເພື່ອການຊົງສ້າງທັ້ງໝົດ ທຸກຢ່າງມີຄວາມໝາຍຕໍ່ພຣະເຈົ້າ ເພາະພຣະອົງຊົງເຂົ້າມາເທິ່ງໂລກ ຢູ່ຮວມກັບການຊົງສ້າງຜ່ານທາງພຣະເຍຊູນັ້ນເອງ.

ເຮົາສາມາດຄົ້ນຄວ້າເພີ່ມເຕີມໄດ້ອີກຫຼວງຫຼາຍ ເມື່ອພຣະເຍຊູຊົງໃຊ້ເວລາໃນຖິ່ນທຸລະກັນດານນັ້ນ ພຣະຄຳພີບັນທຶກວ່າ "ຊົງຢູ່ກັບສັດປ່າ"(ມາລະໂກ 1:13) ພຣະອົງບໍ່ໄດ້ຮັບອັນຕະລາຍໃດໆ ຈາກສັດປ່າ ເຊິ່ງສະທ້ອນໃຫ້ເຫັນຄວາມສະຫງົບຮົ່ມເຢັນແບບທີ່ເຄີຍເກີດຂຶ້ນໃນສວນເອເດນ ເຊິ່ງເວົ້າໄວ້ໃນພຣະຄຳພີເດີມ ພຣະເຍຊູຊົງເປັນຜູ້ປົດປ່ອຍຈາກການຊາບແຊງມະນຸດແລະສັດປ່າສາມາດຢູ່ຮ່ວມກັນຢ່າງສັນຕິອີກຄັ້ງ ດັ່ງທີ່ຜູ້ພະຍາກອນທັ້ງຫຼາຍທຳນວາຍເຖິງສິ່ງທີ່ຈະເກີດຂຶ້ນ ເມື່ອພຣະເມສີຢາສະເດັດມາ (ອິສະຢາ11:6-9;65:17-25;ໂຮເຊຢາ 2:18-23) ໃນຂະນະທີ່ພຣະເຍຊູຊົງສັ່ງສອນກ່ຽວກັບແຜ່ນດິນຂອງພຣະເຈົ້ານັ້ນ ຊົງຍົກຕົວຢ່າງເລື່ອງລາວທຳມະຊາດ ແລະການເພາະປູກຢູ່ຫຼາຍຄັ້ງ ສະແດງການຊົງສ້າງນັ້ນສາມາດສອນເຮົາກ່ຽວກັບແຜ່ນການແລະຈຸດປະສົງຂອງພຣະເຈົ້າໄດ້ ພຣະອົງຊົງບອກໃຫ້ເຮົາເບິ່ງນົກໃນອາກາດແລະເບິ່ງດອກໄມ້ໃນທົ່ງຫຍ້າເປັນຕົວຢ່າງ (ມັດທາຍ 6:26-34) ຫຼືເຫດການທີ່ພຣະເຍຊູຊົງຫ້າມພະຍຸຮ້າຍໃນທະເລສາບຄາເລລີກໍ່ສະແດງໃຫ້ເຫັນວ່າພຣະອົງເປັນເຈົ້ານາຍເໜືອການຊົງສ້າງ ເມື່ອພຣະອົງອອກຄຳສັ່ງມັນກໍ່ເຊື່ອຟັງ ທັ້ງລົມແລະຄື້ນກໍ່ສະຫງົບລົງທັນທີທັນໃດ

ຄຣິສະຕຽນຍຸກທຳອິດຕ່າງຄິດວ່າຊີວິດ ຄວາມຕາຍ ແລະການຟື້ນຄືນພຣະຊົນຂອງພຣະເຢຊູນັ້ນມີຄວາມໝາຍຫຼາຍວ່າ ແຕ່ເປັນພຣະຜູ້ໄຖ່ຊົນຊາດອິສຣາເອນ ແຕ່ຊົງເປັນຈອມເຈົ້ານາຍຂອງການຊົງສ້າງທັງໝົດ ພຣະຄຳເອເຟໂຊກ່າວວ່າ "ພຣະເຈົ້າຊົງປາບປາມທຸກສິ່ງລົງໄວ້ໃນພຣະບາດຂອງພຣະຄຣິດ ແລະປະທານພຣະຄຣິດແກ່ຄຣິສຕະຈັກໃນເປັນເຈົ້ານາຍເໜືອທຸກໆສິ່ງ ຄຣິດສະຕະຈັກເປັນພຣະກາຍຂອງພຣະຄຣິດ ເຊິ່ງເປັນຄວາມສົມບູນຂອງພຣະອົງ ຜູ້ຊົງເຕີມທຸກຢ່າງໃນທຸກແຫ່ງໃຫ້ເຕັມບໍລິບູນ" (1:22-23) ພຣະຄຳເຮັບເລີ ກໍ່ໄດ້ບອກວ່າພຣະເຈົ້າຊົງຕອບກັບເຮົາຜ່ານທາງພຣະເຢຊູ "ຜູ້ທີ່ພຣະອົງຊົງຕັ້ງເປັນຍາດຕິພີ່ນ້ອງຊັບພະສິງທັງປວງ ພຣະເຈົ້າຊົງສ້າງຈັກກະວານທາງພຣະບຸດ" (1:1) ດັ່ງນັ້ນ ໃຫ້ເຮົາທ້າທາຍຕົວເອງດ້ວຍຄຳຖາມວ່າ "ພຣະເຢຊູທີ່ເຮົາເຊື່ອນັ້ນຍິ່ງໃຫຍ່ຊ່ຳໃດ" ເຮົາຈຳກັດພຣະອົງໃຫ້ເປັນພຽງແຕ່ພຣະຜູ້ຊ່ວຍໃຫ້ລອດພົ້ນສຳຫຼັບຊີວິດເຮົາເທົ່ານັ້ນບໍ່? ໂດຍຄວາມຈິງແລ້ວພຣະອົງຊົງຍິ່ງໃຫຍ່ຫຼາຍພໍທີ່ຈະເປັນຈອມເຈົ້ານາຍເໜືອການຊົງສ້າງທັງໝົດ.

**ຄຳຖາມ**:

- ພຣະເຢຊູຂອງທ່ານຍິ່ງໃຫຍ່ຊ່ຳໃດ?
- ເມື່ອທ່ານອະທິຖານ ທ່ານເຫັນພາບພຣະອົງຊົງເຕັມໄປດ້ວຍສິດທິອຳນາດແລະພະລັງເໜືອການຊົງສ້າງທັງໝົດບໍ່?
- ເມື່ອທ່ານເບິ່ງຄວາມງົດງາມ ຄວາມສະຫຼັບຊັບຊ້ອນນການອອກແບບ ແລະພະລັງໃນທຳມະຊາດສິ່ງເຫຼົ່ານີ້ໄດ້ສະທ້ອນໃຫ້ທ່ານເຫັນພຣະລັກຊະນະຂອງພຣະເຢຊູບໍ່?
- ເມື່ອທ່ານເວົ້າເຖິງງານແຫ່ງການໄຖ່ຂອງພຣະເຢຊູ ທ່ານເວົ້າເຖິງສະເພາະການໄຖ່ໃນລະດັບບຸກຄົນ ຫຼືທ່ານໝາຍເຖິງພຣະຜູ້ໄຖ່ສຳຫຼັບການຊົງສ້າງທັງໝົດ?
- ມີພຣະຄຳພີຕອນໃດແດ່ທີ່ເວົ້າໃຫ້ເຫັນວ່າພຣະເຈົ້າຊົງຫ່ວງໃຍສິ່ງທີ່ພຣະອົງຊົງສ້າງໂດຍສະແດງອອກຜ່ານທາງພັນທະກິດທີ່ພຣະເຢຊູຊົງເຮັດບໍ່?

4.**ຄຣິສະຕະຈັກ**.

ໃນວັນເພັນຕາຄອດນັ້ນ ພຣະເຈົ້າຊົງເທພຣະວິນຍານບໍລິສຸດລົງມາຍັງບັນດາສາວົກນຳໄປສູ່ການກໍ່ກຳເນີດຊຸມຊົນໃໝ່ດຂຶ້ນ ປັດຈຸບັນ ເຮົາຄົງຕ່າງຍັງຢູ່ໃນຍຸກຂອງຄຣິສະຕະຈັກເຊິ່ງເຮົາມັກຈະສະຫຼຸບໜ້າທີ່ຄວາມຮັບຜິດຊອບຂອງຄຣິດສະຕະຈັກອອກເປັນ:

a) ນະມັດສະການພຣະເຈົ້າ.
b) ປະກາດຂ່າວປະເສີດ
c) ໃຫ້ຮັບບັບຕິສະມາແກ່ຜູ້ທີ່ເຊື່ອເປັນສາວົກ ເຊິ່ງລ້ວນເປັນຄວາມຈິງ ແຕ່ວ່ານີ້ຍັງບໍ່ໄດ້ຄວາມຈິງທີ່ຄອບຄຸມທຸກຢ່າງກ່ຽວກັບຄຣິດສະຕະຈັກ.

ປະການທຳອິດ ການນະມັດສະການພຣະເຈົ້ານັ້ນບໍ່ໄດ້ໝາຍເຖິງພຽງແຕ່ການຮ້ອງເພງແລະອະທິຖານເທົ່ານັ້ນ ແຕ່ເປັນສຳແດງທັ້ງຊີວິດວ່າເປັນການຢູ່ເພື່ອພຣະເຢຊູ ຜູ້ເຜຍພຣະວາຈະນະໄດ້ທ້າທາຍຄົນທີ່ນະມັດສະການແຕ່ໂດຍການອົດອາຫານ ຖວາຍສັກກາລະບູຊາ ຮ້ອງບົດເພງສັນລະເສີນແລະບົດເພງສັນລະເສີນ ວ່າການກະທຳເທົ່ານີ້ນັ້ນບໍ່ພຽງພໍ ໃນພຣະຄຳອາໂມດ ພຣະເຈົ້າກ່າວວ່າ "ເຮົາກຽດຊັງ ເຮົາບົນທາບັນດາວັນເທດສະການຂອງເຈົ້າ ແລະຈະບໍ່ດົມກິນໃນການປະຊຸມອັນສັກສິດຂອງເຈົ້າເລີຍ ແມ້ວ່າເຈົ້າຈະຖວາຍເຜົາເຄື່ອງບູຊາ ແລະທັນຍະບູຊາແກ່ເຮົາ ເຮົາຈະຍອມຮັບສິ່ງເຫຼົ່ານັ້ນ ແລະສັນຕິບູຊາດ້ວຍສັດຕຸ້ຍງາມພີຂອງເຈົ້ານັ້ນ ເຮົາຈະບໍ່ເບິ່ງ ຈົ່ງນຳສຽງເພງຂອງເຈົ້າໄປຈາກເຮົາ ເພາະເຮົາຈະບໍ່ຟັງສຽງພິນໃຫຍ່ຂອງເຈົ້າ ແຕ່ຈົ່ງໃຫ້ຄວາມຍຸດຕິທຳຫຼັ່ງໄຫຼລົງມາເໝື່ອນນໍ້າ ແລະໃຫ້ຄວາມຊອບທຳເປັນເໝື່ອນນໍ້າຫ້ວຍທີ່ໄຫຼຢູ່ເປັນຕະຫຼອດ( ອາໂມດ 5:21-24) ກໍ່ກ່າວເໝືອນກັນ ມີຄາຍໍ້າຢ່າງຊັດເຈນວ່າສິ່ງທີ່ພຣະເຈົ້າຊາງປະສົງຈາກເຮົານັ້ນ " ເຮັດຄວາມຍຸດຕິທຳແລະໃຫ້ຮັກສາຄວາມເມດຕາແລະໃຫ້ດຳເນີຊີວິດໄປກັບພຣະເຈົ້າຂອງເຈົ້າດ້ວຍຄວາມຖ່ອມໃຈ" (6:8)

ດັ່ງນັ້ນ ຄຣິສະຕະຈັກຈຶ່ງບໍ່ໄດ້ມີໜ້າທີ່ນະມັດສະການພຣະເຈົ້າ ດ້ວຍການຮ້ອງເພງ ແລະຮ່ວມປະຊຸມກັນເທົ່ານັ້ນ ແຕ່ຕ້ອງລຸກຂຶ້ນຕໍ່ສູ້ເພື່ອຄວາມຍຸດຕິທຳ ແລະສຳແດງຄວາມເມດຕາເປັນພະຍານເຖິງແຜ່ນດິນຂອງພຣະເຈົ້າ ດ້ວຍການສຳແດງຊີວິດ ດ້ວຍການຫ່ວງໃຍຊ່ວຍເຫຼືອຄົນທຸກຈົນ ແລະທີ່ຜູ້ທຸກຍາກລຳບາກ ແລະຫ່ວງໃຍການຊົງສ້າງທັ້ງໝົດ ເພງສັນລະເສີນ 145:8-9 ກ່າວວ່າ "ພຣະຢາເວຊົງມີພຣະຄຸນ ແລະຊົງພຣະກາລຸນາ ຄຽດຊ້າແລະບຊົງມີຄວາມຮັກໝັ້ນຄົງຢ່າງອຸດົມ ພຣະຢາເວຊົງດີຕໍ່ທຸກຄົນ ແລະພຣະກາລູນາຂອງພຣະອົງຢູ່ເໜື່ອພຣະຣາຊາກິດທັ້ງໝົດຂອງພຣະອົງ" ເຮົາຈະເຫັນວ່າພຣະເຈົ້າບໍ່ໄດ້ເມດຕາ ສະເພາະຕໍ່ມະນຸດເທົ່ານັ້ນ ແຕ່ເໜືອພຣະຣາຊາກິດທັ້ງໝົດ ຂໍ້ຕໍ່ໄປກໍ່ຢືນຢັນທັ້ງສິ່ງນີ້ "ພຣະຣາຊະກິດທັ້ງໝົດຂອງພຣະອົງຈະຂອບພຣະຄຸນພຣະອົງ ແລະຜູ້ຈົງຮັກພັກດີທັ້ງໝົດຂອງພຣະອົງຈະຖວາຍສາທຸການແດ່ພຣະອົງ" (ຂໍ້ທີ່ 10) ດັ່ງນັ້ນ ເມື່ອເຮົານະມັດສະການພຣະເຈົ້າ ເຮົາຖວາຍສັນລະເສີນຮ່ວມກັບການຊົງສ້າງທັ້ງໝົດ ບໍ່ວ່າຈະເປັນນົກ ຕົ້ນໄມ້ ສັດທັງຫຼາຍ ແລະຂະນະດຽວກັນ ເຮົາກໍ່ສຳແດງຄວາມຮັກຄວາມຫ່ວງໃຍ ຕໍ່ການຊົງສ້າງໃນພຣະນາມຂອງພຣະຄຣິດເຊິ່ງກໍ່ເປັນການນະມັດສະການພຣະເຈົ້າ ເພາະການກະທຳແບບນີ້ເປັນການປະກາດວ່າພຣະເຈົ້າ ຊົງເປັນຈອມເຈົ້ານາຍເໜືອນທຸກສິ່ງນັ້ນເອງ.

ປະກາດຕໍ່ມາ ການປະກາດຂ່າວປະເສີດນັ້ນໝາຍເຖິງການບອກຂ່າວດີກຽ່ວກັບແຜ່ນດິນຂອງພຣະເຈົ້າ ເຊິ່ງພຣະເຢຊູໄດ້ຊົງກ່າວໄວ້ໃນມາລະໂກ 1:15 ຂ່າວປະເສີດໝາຍເຖິງການອະໄພໂທດ ແລະການໄຖ່ມະນຸດຈາກບາບ ແຕ່ກໍ່ຄອບຄຸມຄວາມຫວັງ ແລະການຊ່ວຍກູ້ການຊົງສ້າງທັ້ງໝົດ ເຮົາມັກຈະຕັດໃຈຄວາມສຳຄັນຂອງຂ່າວປະເສີດບາງສ່ວນອອກໄປ ແຜ່ນ

ງານຂອງພຣະເຈົ້າງົດງາມ ແລະຄວບຄຸມການຊົງສ້າງທຸກສິ່ງ ພຣະອົງຊົງຍຸ່ງວ່ຍາ ແລະຊົງສ້າງຂຶ້ນໃໝ່ຜ່ານພຣະຣາຊະກິດທີ່ພຣະເຍຊູຊົງກະທໍາ ດັ່ງນັ້ນ ພຣະເຈົ້າບໍ່ໄດ້ຊົງເອີ້ນເຮົາໃຫ້ຊ່ວຍດວງວິນຍານມະນຸດໃຫ້ລອດພົ້ນເທົ່ານັ້ນ ແຕ່ຈົງອອກໄປທົ່ວໂລກ ປະກາດຂ່າວປະເສີດແກ່ທຸກຄົນແລະທຸກສິ່ງ (ມາລະໂກ 16:15) ເຮົາປະກາດແລະສໍາແດງການຢຽວຢາແກ່ຜູ້ທີ່ຫຼົງທາງຊຸມຊົນທີ່ພັງທະລາຍແລະການສ້າງທີ່ຮ້ອງໄຫ້ໂສກເສົ້າຢູ່ນັ້ນ ນີ້ຄືໜ້າທີ່ຂອງຄຣິດສະຕະຈັກ.

ປະກາດສຸດທ້າຍ ເມື່ອເຮົາໃຫ້ບັບຕິສະມາແກ່ສາວົກຜູ້ເຊື່ອໃໝ່ນັ້ນ ເຮົາສອນຫຍັງແດ່ ໃຫ້ແກ່ພວກເຂົາແດ່ ແນ່ນອນ ເຮົາສອນພວກເຂົາໃຫ້ອະທິຖານ ສຶກສາພຣະຄໍາພີ ມານັກຄືທໍາຮ່ວມກັບຜູ້ເຊື່ອ ແລະເປັນພະຍານເຖິງຄວາມລອດພົ້ນ ເຫຼົ່ານີ້ຄືສິ່ງທີ່ຄວນກະທໍາແລະຄວນສອນເລື່ອງຄວາມເມດຕາ ການສໍາແດງຄວາມຍຸດຕິທໍາ ການຮັກແລະຫ່ວງໃຍການຊົງສ້າງນີ້ຄືຂ່າວປະເສີດທີ່ຄົບຖ້ວນ ເມື່ອເຮົາສອນ  ແລະເຮັດໃຫ້ສິ່ງທີ່ເຮົາສອນເຫຼົ່ານີ້ ຄົນທົ່ວໄປກໍ່ສໍາພັດເຖິງຄວາມຈິງແຫ່ງຂ່າວປະເສີດໄດ້ຫຼາຍກວ່າ ຄຣິສະຕະຈັກໃດກໍ່ຕາມທີ່ເຮັດພັນທະກິດແບບດັ່ງເດີມ ເພາະຄວາມຈິງແລ້ວພຣະເຢຊູຊົງຫ່ວງໃຍສັດປ່າລະບົບກະເສດ ແລະສິ່ງແວດລ້ອມ ການເປັນຄຣິສະຕຽນນັ້ນຍບໍ່ແມ່ນແຕ່ເລື່ອລາວຝ່າຍຈິດວິນຍານເທົ່ານັ້ນແຕ່ເມື່ອເມັດພັນແຫ່ງຂ່າວປະເສີດງອກງາມກໍ່ເຕີບໂຕຍັງຮາກລົງໄປໃນຊີວິດຂອງຜູ້ເຊື່ອທັງຫຼາຍ

ດັ່ງນັ້ນ ການນະມັດສະການແລະພັນທະກິດຂອງຄຣິດສະຕະຈັກຈຶ່ງຄວນມີງານດ້ານການຫ່ວງໃຍຜືພຣະຫັດຂອງພຣະເຈົ້າຮວມຢູ່ດ້ວຍພຣະຄໍາພີໃໝ່ ເວົ້າເຖິງສິ່ງນີ້ຢູ່ຫຼາຍຄັ້ງ ໃນໂຣມ 8:19 ເປົາໂລກ່າວໄວ້ວ່າ “ເພາະສັບພຣະສິງທີ່ຊົງສ້າງແລ້ວ ຄອຍດ້ວຍຄວາມປາດຖະໜາຢ່າງຍິ່ງໃຫ້ບຸດທັງຫຼາຍຂອງພຣະເຈົ້າປະກົດ” ຖ້າແບບນັ້ນ ໃຜຄືພຣະບຸດຂອງພຣະເຈົ້າ ຄໍາຕອບກໍ່ຄືຄຣິສະຕະຈັກແນວໃດແດ່? ຫຼືອາດເວົ້າໄດ້ວ່າ ການຊົງສ້າງທັງຫຼາຍຄອຍຖ້າຄຣິສະຕະຈັກຢູ່ດ້ວຍຄວາມປາດຖະໜາຢ່າງຍິ່ງ ຄືກັນກັບທີ່ພຣະເຈົ້າຊົງເອີ້ນຮ້ອງໃຫ້ມະນຸດສະທ້ອນພຣະສາຍາຂອງພຣະອົງຜ່ານທາງການສະແດງຄວາມຫ່ວງໃຍຕໍ່ສັບພຣະສິງ ເຊີງປະກົດໃນພຣະຄໍາປະຖົມມະການບົດທີ່1 ເປັນພຣະມະຫາບັນຊາຍິ່ງໃຫຍ່ຂໍ່ທໍາອິດ ຄືກັນຊຸມຊົນໃໝ່ຂອງພຣະເຈົ້າຊຶ່ງປຽມໄປດ້ວຍພະລັງແຫ່ງພຣະວິນຍານນີ້ກໍ່ໄດ້ຮັບການຊົງເອີ້ນໃຫ້ຝຶກຝົນກຽມພ້ອມທີ່ຈະເຮັດການດີ ເພື່ອຊັບພະສິງ ພຣະຄໍາເອເຟໂຊໄດ້ອະທິບາຍໄດ້ອະທິບາຍວ່າພຣະເຢຊູຊົງເປັນ “ເປັນເຈົ້ານາຍເໜືອທຸກສິງໆ ສິ່ງ ຄຣິສຕະຈັກເປັນພຣະກາຍຂອງພຣະຄຣິດ ເຊິ່ງເປັນຄວາມສົມບູນຂອງພຣະອົງ ຜູ້ຊົງເຕີມທຸກຢ່າງໃນທຸກແຫ່ງໃຫ້ເຕັມບໍລິບູນ” (1:22-23) ດັ່ງນັ້ນ ພຣະເຢຊູຈຶ່ງເປັນຫົວຂອງຄຣິສະຕະຈັກແລະຈອມເຈົ້ານາຍເໜືອທຸກສິງ ທັງສອງຢ່າງນີ້ມີຄວາມເຊື່ອມໂຍງກັນ ໝາຍຄວາມວ່າບົດບາດສໍາຄັນຂອງຄຣິດສະຕະຈັກຄືການ

ເປັນພຣະກາຍຂອງພຣະຄຣິດ ເປັນແຂນເປັນຂາຂອງພຣະອົງ ເພື່ອສຳແດງຄວາມເປັນຈອມເຈົ້ານາຍເໜືອການຊົງສ້າງທັງໝົດ.

**ຄຳຖາມ**:

- ຄຣິສະຕະຈັກຂອງທ່ານເຮັດພັນທະກິດດ້ານການນຳຈິດວິນຍານຄົນໃຫ້ໄດ້ຄວາມລອດພົ້ນເທົ່ານັ້ນບໍ່ ຫຼືວ່າແທ້ຈິງແລ້ວ ການປະກາດວ່າ ພຣະເຢຊູຊົງເປັນພຣະເຈົ້າ ນັ້ນໝາຍຄວາມລວມເຖິງການມຸ່ງໃຫ້ທັງຄົນແລະທຸກຊັບພະສິ່ງໄດ້ເຫັນຄວາມຍິ່ງໃຫຍ່ສົມກັບເປັນຈອມເຈົ້ານາຍຂອງພຣະເຢຊູ?
- ທ່ານເຄີຍສັ່ງສອນຫຼືເທດສະໜາກ່ຽວກັບການຫ່ວງໃຍຜືພຣະຫັດພຣະເຈົ້າບໍ່? ເຄີຍຈັດການອົບຮົມສາວົກກ່ຽວກັບສິ່ງເຫຼົ່ານີ້ ມີໂຄງການກ່ຽວກັບການອະນຸລັກດິນ ສັດປ່າ ຕົ້ນໄມ້ແລະອື່ນໆແດ່ບໍ່?
- ຖ້າຄຣິສະຕະຈັກ ຄື ພຣະກາຍຂອງພຣະຄຣິດ ແລ້ວ ເຮົາຈະສຳແດງຄວາມເປັນຈອມເຈົ້ານາຍຂອງພຣະເຢຊູເໜືອທຸກຊັບພະສິ່ງຜ່ານທາງການບົ່ງບອກຊັບພະຍາກອນທຳມະຊາດ ພະລັງງານ ແລະການສຳແດງຄວາມຫ່ວງໃຍ ຕໍ່ແຜ່ນດິນໄດ້ຢ່າງໃດແດ່?

**5.ການສະເດັດກັບມາແລະຄວາມສົມບູນແບບ.**

ຂ້າພະເຈົ້າເຕີບໂຕພ້ອມກັບຄວາມເຊື່ອທີ່ຮັບຮູ້ວ່າ ເມື່ອພຣະເຢຊູສະເດັດກັບມາອີກຄັ້ງນັ້ນ ໂລກຈະມອດໄໝ້ ແລະພັງພິນາດໄປຈົນຍ່ອຍຍັບ ຂ້າພະເຈົ້າຈຶ່ງຄອຍຖ້າແຜ່ນດິນສະຫວັນ ເຊິ່ງຂ້າພະເຈົ້າຄິດວ່າກໍ່ນ່າຈະເປັນ ສະຫວັນແລະແຜ່ນດິນໂລກໃໝ່ ຕາມທີ່ພຣະຄຳພີບອກໄວ້ (ພະນິມິດ 21:1) ຂ້າພະເຈົ້າອ່ານໜັງສືຄຣິສະຕຽນຫຼາຍເຫຼັ້ມທີ່ເວົ້າເຖິງສົງຄາມອັນໂຫດຮ້າຍ (ອາມາເກດດອນ) ເຊິ່ງຜູ້ເຊື່ອວ່າໄດ້ຮັບການຮັບໄປສູ່ສະຫວັນທັງເປັນຊື່ນຊົມ ໂດຍປະຖິ້ມທຸກຢ່າງໄວ້ເບື້ອງຫຼັງ ແນວໃດກໍ່ຕາມ ຂ້າພະເຈົ້າຮູ້ສຶກສົງໄສ ວ່າພຣະເຈົ້າຊົງສ້າງໂລກແລະທຸກຢ່າງສະຫງ່າງາມຢ່າງງົດງາມຍອດຍ້ຽມ ຊົງຊື່ນຊົມຍິນດີແລະຫ່ວງໃຍເອົາໃຈໃສການຊົງສ້າງຂອງພຣະອົງ ຮ່ວມເຖິງຊົງສັ່ງໃຫ້ມະນຸດເບິ່ງແຍງ ອາລັກຂາ ແລະຊົງສົ່ງພຣະເຢຊູລົງມາເປັນສ່ວນໜຶ່ງທາມກາງການຊົງສ້າງ ເພື່ອທີ່ໃນທີ່ສຸດພຣະອົງຈະທຳລາຍທຸກສິ່ງໂດຍສິ້ນສຸດ ຖ່າແບບນີ ເປັນຫຍັງໃນພຣະຄຳພີເດີມຈຶ່ງຕ້ອງເວົ້າເຖິງ ການຊົງສ້າງຖືກທຳລາຍລ້າງ ແລະໄດ້ຮັບການກອບກູ້ທະເລຊາຍກັບມາມີຊີວິດອີກຄັ້ງ ແລະສັດປ່າອາໄສຢູ່ຢ່າງສະຫງົບສຸກຮ່ວມກັບມະນຸດ? ແລະໃນພຣະຄຳພີໃໝ່ ເປັນຫັຍງອັກທະທູດດເປົາໂລກເອງຈຶ່ງເວົ້າເຖິງຄວາມຫ້ວງໃນພຣະຄຳໂຣມ 8

ວ່າ “ຈັບພະສົງເຫຼົ່ານັ້ນຈະໄດ້ລອດຈາກອຳນາດແຫ່ງຄວາມເຊື່ອມສະລາຍແລະຈະເຂົ້າໃນເສຣີພາບ ສັກສີແຫ່ງລູກໆ ຂອງພຣະເຈົ້າ” (ຂໍ້ທີ່ 21)?

ຂ້າພະເຈົ້າຈຶ່ງຄ່ອຍໆ ຕະຫັນກວ່າມູມມອງຂອງຂ້າພະເຈົ້າຕໍ່ການສິ້ນສຸດຂອງຍຸກນັ້ນຜິດແຜກໄປຈາກເລື່ອງລາວທີ່ຍິ່ງໃຫຍ່ແຫ່ງພຣະຄຳພີໂດຍສິ້ນເຊີງ ນັບຕັ້ງແຕ່ຈຸດເລີ່ມຕົ້ນໄປຈົນເຖິງຈຸດຈົບນັ້ນ ພຣະເຈົ້າຊົງມີພຣະປະສົງ ຊຶ່ງເຕັມໄປດ້ວຍການສ້າງສັນດ້ວຍຄວາມຮັກ ຊົງຍຶດໝັ້ນໃນພັນທະສັນຍາ ຜ່ານທາງພັນທະກິດຂອງພຣະເຢຊູ ແລະໃນການຊົງເອີ້ນຄຣິດສະຕະຈັກໃຫ້ຮັບໃຊ້ທັ້ງມະນຸດ ແລະຈັບພະສົງທັ້ງໝົດ ດັ່ງນັ້ນ ຂ້າພະເຈົ້າຈຶ່ງສຶກສາພຣະຄຳພີຢ່າງເຂັ້ມຂົ້ນ ຂະນະດຽວກັນກໍ່ໄດ້ໂອລົມກັບຜູ້ຊ່ຽວຊານດ້ານພຣະຄຳພີຫຼາຍທ່ານ ຂ້າພະເຈົ້າແປກໃຈກັບຫຼາຍຢ່າງທີ່ຄົ້ນພົບຄື:

ປະການທຳອິດ ຄືຄວາມເຊື່ອກຽ່ວກັບຍຸກສຸດທ້າຍຂອງຂ້າພະເຈົ້ານັ້ນ ຕັ້ງແຕ່ຂັ້ນພື້ນຖານຂອງພຣະຄຳພີພຽງຈະມີຈັກຂໍ້ເທົ່ານັ້ນ

ປະການທີ່ສອງ ຂ້າພະເຈົ້າພົບວ່າແນວຄິດທີ່ບອກວ່າໂລກຈະຕ້ອງຖືກເຜົາຈົນມອດໄໝ້ແລະຖືກທຳລາຍໂດຍສິ້ນເຊີງນັ້ນ ບໍ່ແມ່ນແນວຄິດທີ່ຄຣິດສະຕຽນຈຳນວນຫຼາຍເຄີຍເຊື່ອ ຫຼືຍຶດຖືເລີຍຕະຫຼອດມາເປັນປະຫວັດສາດທີ່ຜ່ານມາ ແຕ່ຄວາມຄິດຄວາມເຂົ້າໃຈແບບນີ້ ຫາຈະເລີ່ມເກີດຂຶ້ນໃນຊ່ວງສະຕະວັດທີ່ ເກົ້າສິບ ເທົ່ານັ້ນເອງ ປະກອບກັບຄຣິສຕຽນບາງກຸ່ມຮັບເອົາອິດທິພົນທາງຄວາມຄິດມາຈາກໂລກຍຸກໃໝ່ ຂະນະດຽວກັບ ລະບົບອຸດສາຫະກຳ ແລະການຄ້າກໍ່ທຳລາຍໂລກໜ່ວຍນີ້ຢ່າງບໍ່ເຄີຍເປັນມາກ່ອນ.

ປະການທີ່ສາມ: ຄືເມື່ອຂ້າພະເຈົ້າອ່ານພຣະຄຳພີຫຼາຍຂຶ້ນແລະອ່ານຊ້ຳ ຂ້າພະເຈົ້າກໍ່ພົບວ່າມີເນື້ອຫາສະລະສຳຄັນສອງຢ່າງທີ່ມັກຈະສອດຄ້ອງສຳພັນກັນ ສະເໜີເມື່ອພິສູດເຖິງການພິພາກສາ ໃນພຣະຄຳພີນັ້ນພຣະເຈົ້າຊົງໃຊ້ພາບຄວາມຮຸນແຮງ ແລະພະລັງອຳນາດເມື່ອເວົ້າເຖິງການພິພາກສາຊົນຊາດອິສຣາເອນແລະຊົນຊາດອື່ນໆ ແຕ່ອີກສາລະສຳຄັນທີ່ເຫັນພ້ອມກັນໄປດ້ວຍກໍ່ຄື “ຖ້າປະຊາກອນຂອງເຮົາຂະກັບໃຈຈາກຄວາມຜິດບາບ...” ກໍ່ຈະກັບຄືນດີດັ່ງເໝືອນເດີມ ຫຼືບໍ່ຖືກທຳລາຍ ເຮົາພົບພຣະເຢຊູ ເມືອພຣະອົງຊົງຄືນພຣະຊົນນັ້ນ ພຣະອົງກໍ່ຊົງເປັນ “ຜົນທຳອິດ” ແຫ່ງການຊົງສ້າງໃໝ່ນັ້ນດ້ວຍ (1ໂຄຣິນໂທ15:22-28) ເປັນເຄື່ອງໝາຍຢືນຢັນ ແກ່ຜູ້ທີ່ເຊື່ອວ່າຮ່າງກາຍຈະຟື້ນຄືນມີຊີວິດ ໃນຖານະການຊົງສ້າງໃໝ່ດ້ວຍ ແຕ່ພຣະກາຍໃໝ່ຫຼັງການຟື້ນຄືນພຣະຊົນຂອງພຣະເຢຊູກໍ່ແຕກຕ່າງຄືກັນ ເພາະວ່າຮ່າງກາຍພຣະອົງຍັງເໝືອນເດີມ ມີຮອຍຕະປູກັບບາດແຜເປັນຈາກຫອກທີ່ມແທງ ໂທມັດສາມາດແຕະຕ້ອງຕົວພຣະອົງ ພຣະອົງຊົງຮັບປະທານອາຫານໄດ້ ແຕ່ພຣະອົງກໍ່ແຕກຕ່າງ ເພາະບາງຄັ້ງສາວົກກໍ່ຈືຈຳພຣະອົງບໍ່ໄດ້ ໃນກໍລະນີຂອງມາລີໃນສວນແຫ່ງເກດເຊມະນີ ແລະຊາຍສອງຄົນລະຫວ່າງເດີນທາງໄປຍັງເອມມາອູດກໍ່ຈຳພຣະອົງບໍ່ໄດ້ ພຣະອົງຊົງປະກົດພຣະກາຍ ແລະຊົງຫາຍຕົວໄປໄດ້ ແມ້ປະຕູຫ້ອງຈະປິດຢູ່ກໍ່ຕາມ.

ສາລະສຳຄັນດັ່ງກ່າວຂ້າເທິ່ງເປັນຜົນຍ່າງເປັນຜົນຍ່າງຍິ່ງ ເມື່ອເວົ້າເຖິງການສະເດັດກັບມາອີກຄັ້ງຂອງພຣະເຢຊູ ແລະການພິພາກສາຄັ້ງສຸດທ້າຍ ຈະມີການຊຳລະການຊົງສ້າງ ແລະຊັບພະສິ່ງໃຫ້ສະອາດປາສະຈາກບາບ ແລະຄວາມຊົ່ວຮ້າຍ ເຊິ່ງພຣະຄຳພີໃຊ້ພາບການຊຳລະລ້າງດ້ວຍໄຟ ແຕ່ຖ້າເຮົາອ່ານພຣະຄຳພີຢ່າງລະອຽດຖ້ວນຖີ່ ເຮົາຈະພົບວ່າໄຟແຫ່ງການຊຳລະໃຫ້ບໍລິສຸດນັ້ນບໍ່ແມ່ນໄຟທີ່ນຳໄປສູ່ການທຳລາຍລ້າງໃຫ້ມອດໄໝ້ຢ່າງສິ້ນເຊີງ ແຕ່ຢ່າງໃດ ໃນ 2ເປໂຕ3:3-7 ບອກກັບເຮົາວ່າຟ້າສະຫວັນແລະແຜ່ນດິນໂລກຈະປະສົບຄວາມກັບການພິພາກສາດ້ວຍໄຟ ແຕ່ຂໍ້ດຽວກັນນັ້ນກໍ່ປຽບທຽບການພິພາກສາດ້ວຍນ້ຳ ຊຶ່ງເຄີຍເກີດຂຶ້ນໃນສະໄໝຂອງໂນອາດ້ວຍ ຄຳວ່າ "ທຳລາຍ" ນັ້ນໃຊ້ອະທິບາຍວ່າຄັ້ງໜຶ່ງນ້ຳເຄີຍຖ້ວມໂລກ (ຂໍ້ທີ່ 26) ແຕ່ການທຳລາຍນີ້ບໍ່ໄດ້ຊະນິດເຫຼືອຢູ່ໂດຍຢ່າງສິ້ນເຊີງ ເພາະມັນນຳໄປສູ່ພັນທະສັນຍາທີ່ພຣະເຈົ້າຊົງເຮັດກັບມະນຸດສັນຍາລັກຄື ຮຸ້ງກິນນ້ຳ ພຣະຄຳບົດນີ້ຍັງອະທິບາຍຕໍ່ໄປອີກວ່າການທຳລາຍນັ້ນເຮັດໃຫ້ໂລກ ແລະສິ່ງສະລາພັດ "ໂລ່ງຕຽນ" (ຂໍ້ທີ່ 10) ສະບັບແປທີ່ເກົ່າວ່າມັກໃຊ້ຄຳວ່າ "ຖືກເຜົາຈົນໝົດກ້ຽງ" ແຕ່ຜູ້ຊ່ຽວຊານພຣະຄຳພີປັດຈຸບັນນີ້ເບິ່ງວ່າຄວນໃຊ້ຄຳວ່າ "ໂລ່ງຕຽນ" ນ່າຈະຖືກຕ້ອງກວ່າຊຶ່ງຄ້າຍກັບການເຮັດການກະເສດ ເມື່ອຜ່ານມາພົ້ນລະດູການເກັບກ່ຽວ ຊາກຕໍຕ່າງໆ ກໍ່ຈະຖືກເຜົາ ກາຍເປັນພື້ນທີ່ຫວ່າງ (ໂລ່ງຕຽນ) ເພື່ອຕຽມພ້ອມສຳຫຼັບລະດູການທັດໄປ ເພາະປູກທັດໄປສິ່ງທີ່ຖືກທຳລາຍໄປຄືຄວາມຊົ່ວຮ້າຍ ທັ້ງມະນຸດແລະຫຼັກການບໍ່ຖືກຕ້ອງ ລວມເຖິ່ງອຳນາດທີ່ບໍ່ຊອບທຳເຫຼົ່ານັ້ນ ສິ່ງທີ່ຄົງເຫຼືອຫຼັງນ້ຳຖ້ວມ ຄືໂລກທີ່ສະອາດ ພ້ອມສຳຫຼັບການເລີ່ມຕົ້ນໃໝ່ອີກຄັ້ງ.

ສຳຫຼັບຂ້າພະເຈົ້າ ຈຶນຊວນຈົກຊໍທີ່ເຮັດໃຫ້ຂ້າພະເຈົ້າເຂົ້າໃຈເລື່ອງນີ້ຢ່າງຖ່ອງແທ້ກໍຄື ຄຳທີ່ເວົ້າເຖິງການຊົງສ້າງໃໝ່ແລະສະຫວັນແລະໂລກໃໝ່ ຊຶ່ງພຣະຄຳພີໃຊ້ຄຳສອງເມື່ອເວົ້າເຖິ່ງ "ສິ່ງໃໝ່" ຄືຄຳວ່າ ນີອອສ (neos) ແລະໄຄນອສ (kainos) ຄຳວ່ານີອອດແປວ່າສິ່ງທີ່ເກີດຂຶ້ນໃໝ່ ໂດຍບໍ່ເຄີຍມີມາກ່ອນໜ້ານີ້ ໃນຂະນະທີ່ຄຳວ່າໄຄນອດນັ້ນໝາຍເຖິງປຽບທຽບ ເຖິ່ງການໄດ້ຮັບການສ້ອມແຊມຂຶ້ນໃໝ່ ການໄຖ່ ການໃຫ້ກັບສູ່ສະພາບດີ ແມ້ແຕ່ກະທັ້ງໝາຍເຖິງການປັບປຽນໃຫ້ມີສະພາບໃໝ່ທີ່ດີ ແລະໃຊ້ປະໂຫຍດໄດ້ດ້ວຍ ທ່ານຄິດວ່າພຣະຄຳພີໃໝ່ໃຊ້ຄຳໃດ ເມື່ອເວົ້າເຖິງການຊົງສ້າງໃໝ່ ສະຫວັນໃໝ່ຫຼືແຜ່ນດິນໂລກໃໝ່ ແນ່ນອນ ໃຊ້ຄຳວ່າ ໄຄນອດ ບໍ່ແມ່ນນີນອດຄືກັນກັບທີ່ເຮົາກາຍເປັນການຊົງສ້າງໃໝ່ ແມ້ຈະຍັງຢູ່ໃນຮ່າງການເດີມກໍ່ຕາມນັ້ນ ເພາະວ່າການຊົງສ້າງໃໝ່ນັ້ນໄດ້ຮັບການປຽ່ນແປງການໃນ ແລະມີຊີວິດທີ່ບໍລິສຸດນັ້ນເອງ.

ສະຫຼຸບໂດຍ ຄືໃນຂະນະທີ່ພຣະຄຳພີເດີມໃຊ້ພາສາທີ່ໜ່າຍ້ານຮຸນແຮງ ເມື່ອເວົ້າເຖິງການພິພາກສາຂອງພຣະເຈົ້າ ກໍ່ບໍ່ໄດ້ລະເລີຍທີ່ຈະໃຫ້ຄວາມຫວັງກ່ຽວກັບແຜ່ນການ ແລະພຣະປະສົງຂອງພຣະເຈົ້າ ທີ່ມີຕໍ່ຊັບພະສິ່ງທີ່ພຣະອົງຊົງໂລກ ແລະສິ່ງສາລະພັດຈະຕ້ອງຜ່ານຊ່ວງເວລາທີ່ເກີດການປຽ່ນແປງຢ່າງຮຸນແຮງ ແລະມາຫາສານ ເພື່ອຊຳລະລ້າງໃຫ້ບໍລິສຸດສະອາດ ຂະນະດຽວກັນ ການຟື້ນຄືນພຣະຊົນຂອງພຣະເຢຊູກໍ່ເປັນຄວາມຫວັງໃຫ້ແກ່ການຊົງສ້າງ ເປົາໂລບັນທຶກໄວ້ໃນພຣະຄຳໂຣມ "ຊັບພະສິ່ງເຫຼົ່ານັ້ນຈະໄດ້ລອດພົ້ນຈາກອຳນາດແຫ່ງຄວາມເສື່ອມສະລາຍ ແລະຈະເຂົ້າໃນເສລີພາບ ແລະສັກສີແຫ່ງລູກໆ ຂອງພຣະເຈົ້າ"(ໂຣມ 8:21) ເປໂຕກໍ່ໄດ້ເທດສະນາ

ໃນກຸງເຢຣູຊາເລັມວ່າພຣະເຢຊູຈະລົງຢູ່ໃນສະຫັວນ "ຈົນກວ່າຈະເຖິງວາລະແຫ່ງການຟື້ນຟູຈັບພະສົງ" (ກິດຈະການ 3:21) ພຣະເຢຊູເອງ ເມື່ອລົງປະທັບພຣະທີ່ນັ່ງອັນມີສະຫງ່າຣາສີ ລົງກ່າວວ່າ "ນີ້ແຫຼະ ເຮົາສ້າງທຸກສິ່ງຂຶ້ນໃໝ່" (ພະນິມິດ 21:5) ຊຶ່ງໃນຄວາມໝາຍນີ້ ຄືສິ່ງທີ່ມີຢູ່ແລ້ວທັ້ງຫຼາຍ (ຄືຄຳວ່າໄຄນອດ ບໍ່ແມ່ນນີນອດ)

## ຄຳຖາມ

- ທ່ານເຫັນດ້ວຍຫຼືບໍ່ກໍ່ຕອນດັ່ງກາວນີ້ທີ່ກຳລັງອ່ານ?
- ເນື້ອຫາທີ່ທ່ານອ່ານໃນຕອນນີ້ເໝືອນຫຼືແຕກຕ່າງຈາກສິ່ງທີ່ເຄີຍຮູ້ ຫຼືເຄີຍໄດ້ຮັບການສອນມາກ່ຽວກັບສະຕາກຳຂອງໂລກໃນຍຸກສຸດທ້າຍ?
- ຍັງມີຄຳຖາມຫຼືແມ່ນຫຍັງແດ່ທີ່ທ່ານຍັງສົງໄສ ຫຼືຄ້າງຄາໃຈກ່ຽວກັບປະເດັ່ນນີ້?
- ການຮັບຮູ້ຂໍ້ມູນໃໝ່ໃນພຣະຄຳພີກ່ຽວກັບຄວາມຫວັງຂອງການລົງສ້າງທັ້ງໝົດໃນວັນແຫ່ງການພິພາກສາເຮັດໃຫ້ທ່ານຮູ້ສືຕື່ນເຕັ້ນຫຼືບໍ່?
- ທັ້ງທ່ານແລະຄຣິດສະຕະຈັກຄວນຕອບສະໜອງຕໍ່ຂໍ້ມູນດັ່ງກ່າວນີ້ຢ່າງໃດ?

## ເລີ່ມຕົ້ນໃໝ່ອີກຄັ້ງດ້ວຍເລື່ອງລາວເດີມແຫ່ງພຣະຄຳພີ

ຂະນະນີ້ ເຮົາຈຳເປັນຕ້ອງເວົ້າເຖິງເລື່ອງເລົ່າໃໝ່ ຫຼືຖ້າຈະກ່າວໃຫ້ຖືກຕ້ອງບອກວ່າໃຫ້ເຮົາຍ້ອນກັບໄປຫາເລື່ອງລາວ ເກົ່າແກ່ແຫ່ງພຣະຄຳພີອີກຄັ້ງ ເຮົາຈະເປັນຕ້ອງຕັ້ງຄຳຖາມວ່າການທີ່ເຮົາເປັນພຣະສາຍາຂອງພຣະເຈົ້ານັ້ນໝາຍເຖິງ ເຮົາມີສິດທີ່ຈະທຳລາຍຫຼືລ້າງຜ່ານການລົງສ້າງຂອງພຣະເຈົ້າທີ່ພຣະອົງຊື່ນຊົມວ່າງົດງາມເຫຼົ່ານັ້ນ ຕາມໃຈມັກຫຼືບໍ່? ເຮົາຈຳເປັນຕ້ອງຍ້ອນກັບມາພິຈາລະນານິມິດໃນພຣະຄຳພີຜ່ານຄຳສອງຄຳ ໄດ້ກແກ່ ຊາໂລມ (shalom)ແລະແຜ່ນດິນຂອງພຣະເຈົ້າ ທັ້ງສອງຄຳນີ້ອະທິບາຍນິມິດດງ່ວຂອງພຣະພີດ້ວຍການທີ່ແຕກຕ່າງກັນ.

"ຊາໂລມ" ນັ້ນມີຄວາມໝາຍຫຼາຍກວ່າບໍ່ມີຄວາມຂັດແຍ້ງສັບສົນ ແຕ່ຍັງໝາຍຄວາມວ່າໄດ້ຮັບການຟື້ນຟູຈ້ອມແຊມໃຫ້ດີເໝືອນເດີມ ຄວາມສຳພັນທີ່ປະສານຢ່າງໜັກແໜ້ນໃນທຸກມິຕິ ສະທ້ອນໃຫ້ເຫັນເຖິງຄວາມເປັນໜຶ່ງດຽວຂອງສາມພະພາກ ເຊິ່ງເປັນຄວາມສະຫງົບສຸກໃນແງ່ຂອງຈິດວິນຍານ, ສັງຄົມ, ເສດຖະກິດ ແລະສິ່ງແວດລ້ອມດ້ວຍ ແຜນດິນຂອງພຣະເຈົ້າທີ່ພຣະເຢຊູລົງປະກາດ ແລະສຳແດງນັ້ນຄອບຄຸມທຸກມິຕິ ລວມເຖິງອິສາລະພາບຈາກບາບຄວາມຕາຍ, ຄວາມເຈັບປ່ວຍ ແລະ ການທົນທຸກທໍລະມານ ການແຍກຈາກການຖືກກົດຂີ່, ການເຊື່ອມຖອຍ ແລະບໍ່ສາມາດເກີດຜົນ ຊາໂລມ(ສັນຕິສຸກ) ແຜ່ນດິນຂອງພຣະເຈົ້ານັ້ນ ສະແດງໃຫ້ເຫັນເຖິງມິຕິແຫ່ງຄວາມອຸດົມສົມບູນພູນສຸກສຳຫຼັບມະນຸດ ທາມກາງການລົງສ້າງທີ່ງອກງາມຢ່າງງົດງາມເຫຼົ່ານັ້ນ.

ຂ້າພະເຈົ້າມັກພຣະຄຳເຢເຣມີຢາ 29:11 ນັ້ນເປັນຂໍ້ໜຶ່ງທີ່ຄຣິສະຕຽນທົ່ວໂລກໃຊ້ອ້າງອີງຫຼາຍທີ່ສຸດໃນໂລກ ອິນເຕີເນັດ ຫຼາຍກວ່າ "ພຣະຢາເວກ່າວວ່າ ເຮົາຜູ້ດຽວເທົ່ານັ້ນເຮົາຮູ້ແຜນການຂອງເຮົາສຳຫຼັບພວກເຈົ້າ ພຣະເຈົ້າຢາເວກ່າວວ່າ ຄືແຜນການທີ່ນຳຄວາມຈະເລີນຄວາມຮຸ່ງມາສູ່ພວກເຈົ້າ ແລະບໍ່ແມ່ນນຳຄວາມຈິບຫາຍມາສູ່ພວກເຈົ້າ ແຕ່ເປັນແຜນການທີ່ນຳຄວາມຫວັງມາສູ່ອະນາຄົດຂອງພວກເຈົ້າ" ເປັນຂໍ້ພຣະຄຳພີທີ່ໃຫ້ຄວາມຫວັງເຕັມປຽ່ມ ແຕ່ກໍ່ອາດຈະຖືກຕີຄວາມໝາຍໃນແງ່ຂອງຄວາມຮັ່ງມີທາງດ້ານວັດຖຸສຳຫຼັບບາງຄົນກໍ່ເປັນໄດ້ ດັ່ງນັ້ນ ການເຂົ້າໃຈຄວາມໝາຍຂອງພຣະຄຳຂໍ້ນີ້ ຈຶ່ງຈຳເປັນຕ້ອງພິຈາລະນາບໍລິບົດຮ່ວມດ້ວຍ ພຣະຄຳເຫຼັ້ມນີ້ຂຽນໃນຂະນະຊົດຊາດຂອງພຣະເຈົ້າຖືກຂັບໄລຕ້ອນເປັນຊະເລີຍໄປຢູ່ຕ່າງແດນທີ່ບາບີໂລນ ຊຶ່ງເໝືອນວ່າພຣະເຈົ້າຊົງລືມພຣະສັນຍາ ແລະຊົນຊາດອິດສະຣາເອນ ຕ່າງຢູ່ຢ່າງບໍ່ມີຄວາມຫວັງ ຕາມບໍລິບົດຊຶ່ງອະທິບາຍຄວາມໝາຍຂອງຊາໂລມ, ແຜນດິນຂອງພຣະເຈົ້າຢ່າງຊັດເຈນ ໃນຂໍ້ 4-7 ນັ້ນຖືວ່າເປັນການສະຫຼຸບ ວິໄສທັດຂອງຄຣິສະຕຽນຕໍ່ໂລກທີ່ຍຸດຕິທຳ ແລະມີຄວາມຍັ່ງຢືນ ຊຶ່ງກໍ່ຄື "ຈົ່ງສ້າງບ້ານແລະເຂົ້າໄປຢູ່ໃນບ້ານນັ້ນ ຈົ່ງເຮັດສວນແລະກິນໃນສວນນັ້ນ ຈົ່ງມີເມຍແລະມີລູກຊາຍ-ຍິງ ຈົ່ງຫາເມຍໃຫ້ລູກຊາຍຂອງພວກເຈົ້າ ແລະຍົກລູກຍິງຂອງເຈົ້າໃຫ້ແຕ່ງງານ ເພື່ອພວກເຂົາຈະໄດ້ມີລູກຊາຍ ແລະລູກຍິງ ເພີ່ມທະວີຄູນຫຼາຍຂຶ້ນຢູ່ບ່ອນນັ້ນ ແລະບໍ່ໜ້ອຍລົງ ແຕ່ຈົ່ງສະແຫວງຫາສັນຕິພາບຂອງເມືອງ ຊຶ່ງເຮົາໄດ້ກວາດເຈົ້າໃຫ້ໄປເປັນທາດຢູ່ນັ້ນ ແລະຈົ່ງອະທິຖານຕໍ່ພຣະເຈົ້າຢາເວ ເພື່ອເມືອງນັ້ນ ເພາະວ່າເຈົ້າຈະພົບສະຫວັດດີພາບຂອງເຈົ້າໃນສະຫວັດດີພາບຂອງເມືອງນັ້ນ"

ນີ້ຄືວິໄສທັດຫຼືນິມິດຂອງຄຣິສະຕຽນໃນສະຕະວັດທີ່ 21 ແມ້ຈະມີຄວາມເປັນສັງຄົມເມືອງສູງ ແຕ່ກໍ່ຍັງຄົງເຊື່ອມໂຍງຢ່າງເລິກເຊິ່ງກັບແຜນດິນ ແລະລະບົບອາຫານທີ່ຜະລິດໃນລະດັບທ້ອງຖິ່ນ ເປັນວິໄສທັດທີ່ກ່ຽວກັບການຍັງຮາກລົງໃນທີ່ທີ່ພຣະເຈົ້ານຳເຮົາໄປ ແມ້ຈະເປັນຕ່າງແດນກໍ່ຕາມ ໂດຍເຊື່ອວ່າຄຸ້ມຄ່າທີ່ຈະລົງແຮງກາຍແຮງໃຈເພື່ອອະນາຄົດດ້ວຍການສ້າງຄອບຄົວ ສະແຫວງຫາ ແລະອະທິຖານເພື່ອ "ສັນຕິພາບ ແລະຄວາມຈະເລີນຮຸ່ງເຮືອງ" ໃຫ້ແກ່ເມືອງຕ່າງແດນຊຶ່ງໄດ້ໄປອາໄສຢູ່ນັ້ນ ສັນຕິພາບ ແລະຄວາມຈະເລີນຮຸ່ງເຮືອງແທ້ຈິງມີຄວາມໝາຍຫຼາຍກວ່າ  ການເຕີບໂຕດ້ານເສດຖະກິດ ຄວາມຮຸ່ງເຮືອງຕາມຄວາມໝາຍຂອງພຣະຄຳພີ ຄືຊາໂລມ ແລະນິມິດແຫ່ງການຄືນດີກັນ ໃນຄວາມສຳພັນກັບພຣະເຈົ້າ ກັບຕົນເອງ ກັບຄົນອື່ນ ແລະກັບຊັບພະສິ່ງທັງໝົດ ແບບນີ້ແຫຼະ ຈຶ່ງເປັນຄວາມຈະເລີນຮຸ່ງເຮືອງທີ່ແທ້ຈິງ.

ນິມິດນີ້ມີຄວາມໝາຍລວມເຖິງການຈັດການກັບຄວາມຍຸດຕິທຳ ການຈຳແນກເຊື້ອຊາດ ການກໍ່ຕັ້ງຄຣິສະຕະຈັກ ແລະການປະກາດຂ່າວປະເສີດ ການໃຊ້ຊີວິດງ່າຍໆ ຢ່າງມີຄວາມສຸກ ແລະການຮ່ວມລົດການປຽ່ນແປງສະພາບອາກາດໂລກ ແຕ່ກໍ່ມີຄວາມໝາຍເລິກເຊິ່ງກວ່ານິມິດແບບໂລກ ເພາະທຸກການກະທຳທີ່ໄດ້ສະແດງອອກຕັ້ງຢູ່ເທິງຮາກຖານຂອງພຣະຄຳພີ ແລະໃຫ້ພຣະເຢຊູຄຣິດເປັນຈອມເຈົ້ານາຍສະເໝີ ຖ້າເຮົາບອກວ່າ "ພຣະເຢຊູຊົງເປັນຈອມເຈົ້ານາຍ" ເຮົາກໍ່ຄວນໃຫ້ພຣະອົງນຳ ແລະມີສວນທັ້ງໃນການງານອາຊີບທີ່ເຮົາເຮັດ

ແລະໃນພັນທະກິດງານຮັບໃຊ້ທຸກຢ່າງ ການສູນເສຍຄວາມຫຼາກຫຼາຍທາງຊີວະພາບນັ້ນ ສົ່ງຜົນກະທົບຕໍ່ທຸກຢ່າງ ເພາະທຸກສິ່ງລ້ວນຖືກສ້າງຂຶ້ນ "ໂດຍແລະເພື່ອ" ພຣະເຢຊູຄຣິດແລະ "ຖືກຍຶດເຂົ້າດ້ວຍກັນ" ໂດຍພຣະອົງ ແລະ "ທຸກສິ່ງ" ໄດ້ຮັບການໄຖ່ໂດຍຄວາມຕາຍ ແລະການຟື້ນຄືນພຣະຊົນຂອງພຣະອົງ (ໂກໂລຊາຍ 1:15-20) ການເຮັດພັນທະກິດ ເພື່ອຮັບມືກັບການປ່ຽນແປງສະພາບອາກາດໂລກນັ້ນ ເປັນສິ່ງທີ່ຈຳເປັນ ເພາະກຸ່ມຄົນທຸກຍາກ ແລະເດັກນ້ອຍທີ່ສຸດຄື ພວກທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ (ມັດທາຍ 25:40-45) ແລະເພາະວ່ານີ້ເປັນເຫດການທີ່ຊັບພະສິ່ງທີ່ພຣະເຈົ້າຊົງສ້າງບໍ່ອາດຈະເລີນຮຸ່ງເຮືອງ ແລະບໍ່ອາດຈະນະມັດສະການພຣະຜູ້ສ້າງໄດ້ນັ້ນເອງ.

**ຄຳຖາມ**:

- ເຮົາເບິ່ງເຫັນພຣະຣາຊາກິດຂອງພຣະເຈົ້າຜ່ານທາງບໍລິບົດຂອງເລື່ອງລາວໃນຕອນນີ້ແນວໃດແດ່?
- ສິ່ງເຫຼົ່ານີ້ທີ່ເກີດຂຶ້ນຄືຄວາມສຳຄັນຂອງການສິ້ນຍຸກບໍ່?
- ຖ້າຫາກຄົນໃນຊຸມຊົນຂອງທ່ານຕ່າງພາກັນຍ້າຍຖິ່ນຖານອອກໄປ ທ່ານຄິດວ່າເປັນເພາະມານຊາຕານກຳລັງໂຈມຕີ ຫຼືເປັນເພາະສາເຫດອື່ນໆ?
- ທ່ານຄິດວ່າພັນທະກິດຫຼັກຂອງຄຣິສຕະຈັກຄືການ "ຊ່ວຍຜູ້ຄົນໃຫ້ລອດພົ້ນຈາກເຮືອກຳລັງຈະຈົມ" ແລະໃຫ້ມຸ່ງເນັ້ນເຣື່ອງແຜນດິນສະຫວັນ ໂດຍບໍ່ຕ້ອງມຸ່ງເນັ້ນການເບິ່ງແຍງໂລກກັບການຊົງສ້າງຫຼືບໍ່?
- ຂ່າວປະເສີດກ່ຽວກັບການໄດ້ຮັບການອວຍພອນດ້ວຍສຸຂະພາບອະນາໄມ ແລະຄວາມຮັ່ງມີນັ້ນມີອິດທິພົນຕໍ່ທ່ານເໜືອບັນຫາທີ່ໂລກກຳລັງປະເຊີນຢູ່ບໍ່?
- ທ່ານຄິດວ່າເຖິງເວລາແລ້ວຫຼືຍັງທີ່ຈະຍ້ອນກັບມາເບິ່ງເນື້ອຫາສາລະແຫ່ງພຣະຄຳພີ ແລະເພິ່ງພາພຣະວິນຍານບໍລິສຸດ ເພື່ອຈະເຫັນພຣະປະສົງຂອງພຣະເຈົ້າໄດ້ຢ່າງຊັດເຈນ?

# ຂໍ້ມູນອ້າງອີງ

ເດບ ບຸກເລດ(Dave Bookless) ເກີດແລະເຕີບໂຕໃນປະເທດອິນເດຍຈົນອາຍຸ10ປີ ກໍໄດ້ຍ້າຍໄປຢູ່ຖິ່ນຖານປະເທດອັງກິດຈົນເຖິງປັດຈຸບັນນີ້ ໃນຊ່ວງສາມສິບປີທີ່ຜ່ານມາ ເຂົາອາໄສຢູ່ໃນເຂດນອກເມືອງລອນດອນ ເຊິ່ງເປັນເຂດທີ່ມີຄວາມຫຼາຍວັດທະນາທຳເຊື້ອຊາດໄດ້ແກ່ ຄົນອິນເດຍ ໂຊມາລີ ສີລັງກາແລະປາກິດສະຖານ ເຊິ່ງກຸ່ມຄົນເຫຼົ່ານີ້ ຍ້າຍມາປະເທດຂອງຕົນມາທີ່ອັງກິດ ເດບມີຄວາມປາຖະນາທີ່ສຸດໃນການນຳເອົາຂ່າວປະເສີດມາປັບໃຊ້ໃນຊີວິດປະຈຳວັນ ເຂົ້າກັບແຕ່ງງານແລະມີລູກສາວສີ່ຄົນ ເປັນສິດຍາພິບານ ໄດ້ຮັບປະລິນຍາເອກ ດ້ານສາດສະໜາສາດ ໄດ້ຂຽນໜັງສື່ຫຼາຍເຫຼັ້ມ (ເຊິ່ງປັດຈຸບັນໜັງສືເຫຼົ່ານີ້ໄດ້ຮັບການແປຫຼາຍພາສາແລ້ວ) ເຂົາໄດ້ໄປບັນລະຍາຍໃນກວ່າສີສິບປະເທດທົ່ວທັ້ງຫົກທະວີບ ເຂົາເຮັດວຽກໃຫ້ກັບ A Rocha International ເຊິ່ງເປັນອົງກອນຄຣິສຕຽນທີ່ເຮັດວຽກດ້ານອະນຸລັກແລະຕະຫຼອດສິບປີຜ່ານມານີ້ກໍ່ໄດ້ມີສອນຮ່ວມຮັບໃຊ້ການເປັນຜູ້ນຳຢ່າງ Lausanne Movement World Evangelical Alliance ລວມເຖິງມີສ່ວນໃນການຈັດການປະຊຸມ creation care ໃນສິບສອງ ບ່ອນທີ່ຂອງໂລກດ້ວຍ.

[2] Harvard Business Review, 2016: https://hbr.org/2016/01/income-inequality-makes-whole-countries-less-happy

[3] https://www.nationalgeographic.com/science/article/experts-warned-pandemic-decades-ago-why-not-ready-for-coronavirus/

[4] ໜັງສື່ *A Christian Guide to Environmental Issues* ຂຽນໂດຍ Martin & Margot Hodson (BRF, 2021) ເນື້ອຫາເວົ້າເຖິງທັງວິທະຍາສາດແລະຫຼັກຂໍ້ເຊື່ອ; ໜັງສື *Saving Us* ຂຽນໂດຍ Katharine Hayhoe (One Signal, 2021) ເນັ້ນນຳສະເໜີປະເດັນກຽວກັບການປ່ຽນແປງສະພາບອາກາດໂລກແລະຄວນຈະຮັບມື່ຢ່າງໃດ

[5] ຄຣິສຕຽນບາງສ່ວນເອົາຈະຮູ້ສຶກບໍ່ເຫັນພ້ອງກັບຄຳ "ແມ່ທໍລະນີ"ຫຼາຍເທົ່າໃດ ແຕ່ຈາໂຄເບດ ໂຊລາໂນ ລວມເຖິງຊົນເຜົ່າຫຼາຍທົ່ວໂລກກັບໃຊ້ຄຳນີ້ພ້ອງເພື່ອບອກວ່າວັດທະນາທຳດັ່ງເດີມນັ້ນເວົ້າການຊົ່ງສ້າງຂອງພຣະເຈົ້າ ແມ້ແຕ່ໃນແວດວົງຄຣິສຕຽນກໍ່ມີການໃຊ້ຄຳທີ່ປະກາດເຖິງສິ່ງທີ່ພຣະເຈົ້າຊົງສ້າງ ເຊັ່ນ ຟານຊິດແຫ່ງອັດຊີຊີໃຊ້ຄຳວ່າອ້າຍສຸຣິຍັນ ນ້ອງສາວຈັນທາ ແມ່ທໍລະນີ ພຣະຄຳພີກໍ່ໃຊ້ຄວາມສຳພັນເຊີງພາສາເມື່ອເວົ້າເຖິງໂລກໃບນີ້ດ້ວຍ ເຊັ່ນການຊົງສ້າງໂສກເສົ້າແຜ່ນດິນໂສກເສົ້າ ຕົ້ນໄມ້ຊື່ນຊົມຍິນດີ ຊຶ່ງພາສາລັກສະນະນີ້ບໍ່ໄດ້ໝາຍຄວາມວ່າແຜ່ນດິນຫຼືໜ່ວຍໂລກເປັນບຸກຄົນທີ່ມີຊີວິດ ແຕ່ເປັນການສະແດງໃຫ້ເຫັນວ່າພຣະເຈົ້າຊົງສ້າງເຮົາໃຫ້ມີຄວາມສຳພັນໃກ້ຊິດກັບທຳມະຊາດນັ້ນເອງ.

6.https://blogs.worldbank.org/health/female-education-and-childbearing-closer-look-data and https://borgenproject.org/poverty-and-overpopulation.